ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

# ກອງປະຊຸມ

## ການຮ່ວມມືພັດທະນາການຄ້າຊາຍແດນ

## ລາວ - ຫວຽດນາມ ແລະ ຫວຽດນາມ - ລາວ

## ຄັ້ງທີ IX

( ວັນທີ 26 ກັນຍາ 2014 ທີ່ ນະຄອນດຽນບຽນ, ສສ ຫວຽດນາມ )

# ສາລະບານ ປື້ມບັນທຶກ ກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ, ຫວຽດນາມ ລາວຄັ້ງທີ IX

**************************

| ລຳດັບ | ເນື້ອໃນ |
|---|---|
| 1 | ບົດປະກອບຄຳເຫັນຂອງທ່ານ ນາງ ເຂັມມະນີ ພົນເສນາ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ |
| 2 | ບົດລາຍງານການຄ້າຊາຍແດນ ລາວ - ຫວຽດນາມ ຂອງ ທ່ານ ບຸນມີ ມະນີວົງ ລັດຖະມົນຕີຊ່ວຍວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ |
| 3 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຜົ້ງສາລີ |
| 4 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຫົວພັນ |
| 5 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຊຽງຂວາງ |
| 6 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຫຼວງພະບາງ |
| 7 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ບໍລິຄຳໄຊ |
| 8 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຄຳມ່ວນ |
| 9 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ສະຫວັນນະເຂດ |
| 10 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຈຳປາສັກ |
| 11 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ເຊກອງ |
| 12 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ສາລະວັນ |
| 13 | ບົດສະຫຼຸບວຽກງານການຄ້າຊາຍແດນ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ອັດຕະປື |
| 14 | ວາລະກອງປະຊຸມ |
| 15 | ບັນຊີລາຍຊື່ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມ |
| 16 | ແຜນການເດີນທາງ ຂອງ ຄະນະຜູ້ແທນ ຈາກ ກະຊວງ ອຸດສາຫະກຳ ແລະ ການຄ້າ |
| 17 | ແຈ້ງການ ອະນຸມັດໃຫ້ຄະນະເດີນທາງເຂົ້າຮ່ວມກອງປະຊຸມ |

# ປົດຄຳເຫັນ

**ຂອງ ທ່ານ ນາງ ເຂັມມະນີ ພົນເສນາ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສປປ ລາວ ກ່າວໃນກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຄັ້ງທີ IX ໃນວັນທີ 26 ກັນຍາ 2014 ຢູ່ທີ່ ເມືອງດຽນບຽນ, ນະຄອນດຽນບຽນ ສສ ຫວຽດນາມ**

ຮຽນ: - ສະຫາຍ ຫວູ ທິວຮ່ວາງ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ທີ່ນັບຖື;
- ສະຫາຍ ນາງ ລໍ ມາຍ ຈິງ, ກຳມະການສູນກາງພັກ, ເລຂາພັກແຂວງ, ແຂວງດຽນບຽນ ທີ່ນັບຖື;
- ບັນດາສະຫາຍ ທີ່ນັບຖື ແລະ ຮັກແພງ!

ທ່າມກາງບັນຍາກາດອັນອົບອຸ່ນທີ່ທົ່ວພັກ, ທົ່ວປວງຊົນ ລາວ ແລະ ຫວຽດນາມ ໄດ້ພ້ອມກັນຈັດຕັ້ງສະເຫຼີມສະຫຼອງ ຄົບຮອບ 60 ປີ ໄຊຊະນະດຽນບຽນຟູ. ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ມີຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ນຳພາຄະນະຜູ້ແທນລາວ ເຊິ່ງປະກອບດ້ວຍຜູ້ແທນຈາກ ກະຊວງ ອຸດສາຫະກຳ ແລະ ການຄ້າ, ຂະແໜງການທີ່ກ່ຽວຂ້ອງ ຂອງ ລາວ, ພະແນກອຸດສາຫະກຳ ແລະ ການຄ້າບັນດາແຂວງ ພ້ອມດ້ວຍນັກທຸລະກິດຈຳນວນໜຶ່ງມາເຂົ້າຮ່ວມກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ແລະ ຫວຽດນາມ - ລາວ ຄັ້ງທີ IX ເຊິ່ງໄດ້ຈັດຂຶ້ນທີ່ ເມືອງດຽນບຽນ, ແຂວງດຽນບຽນ ເຊິ່ງເປັນສະຖານທີ່ ທີ່ມີຄວາມໝາຍ ທາງປະຫວັດສາດໃນການຕໍ່ສູ້ປົດປ່ອຍຊາດ ແລະ ຍັງເປັນສະຖານທີ່ທ່ອງທ່ຽວທີ່ສວຍງາມ ແລະ ໜ້າປະທັບໃຈທີ່ສຸດຂອງ ສສ ຫວຽດນາມ.

ດັ່ງທີ່ບັນດາທ່ານຊາບແລ້ວນັ້ນ, ກອງປະຊຸມໃນຄັ້ງນີ້ແມ່ນມີລັກສະນະພິເສດກວ່າຄັ້ງທີ່ຜ່ານມາ ເນື່ອງຈາກວ່າກອງປະຊຸມໃນຄັ້ງນີ້ ແມ່ນເປັນກອງປະຊຸມທົບທວນຄືນການຈັດຕັ້ງປະຕິບັດ ວຽກງານການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໃນໄລຍະ 05 ປີ ນັບແຕ່ກອງປະຊຸມຄັ້ງທີ VI ເປັນຕົ້ນມາເຊິ່ງຄັ້ງຫຼ້າສຸດແມ່ນຈັດຂຶ້ນທີ່ ແຂວງ ເຊກອງ ສປປ ລາວ.

ນະໂອກາດນີ້ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ ສະຫາຍ ຫວູ ທິວຮ່ວາງ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ, ທັງເປັນເພື່ອນສະຫາຍ ຂອງ ຂ້າພະເຈົ້າ ໄດ້ນຳພາຄະນະຝ່າຍຫວຽດນາມ ຊຶ່ງປະກອບດ້ວຍທຸກພາກສ່ວນທີ່ກ່ຽວຂ້ອງມາເຂົ້າຮ່ວມກອງປະຊຸມໃນຄັ້ງນີ້. ຂໍສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ທີ່ເຕັມໄປດ້ວຍບັນຍາກາດແຫ່ງໄມຕີຈິດມິດຕະພາບ ທີ່ມີມາແຕ່ດົນນານ ທັງຈາກກະຊວງ ອຸດສາຫະກຳ ແລະ ການຄ້າ ກໍ່ຄືອຳນາດການປົກຄອງ ຂອງ ແຂວງ ດຽນບຽນ ຢ່າງສຸດອົກສຸດໃຈ.

ຮຽນບັນດາທ່ານ ທີ່ນັບຖື

ຄວາມສາມັກຄີມິດຕະພາບ ລະຫວ່າງ ປະຊາຊົນສອງຊາດ ລາວ - ຫວຽດນາມ ແມ່ນເປັນມູນເຊື້ອປະຫວັດສາດມາແຕ່ດົນນານ ແລະ ສາຍພົວພັນແບບພິເສດ ລະຫວ່າງ ລາວ - ຫວຽດນາມ ໄດ້ສະແດງອອກຢູ່ໃນທຸກຂົງເຂດການຮ່ວມມື ເຊັ່ນ: ທາງດ້ານການເມືອງ, ເສດຖະກິດ-ສັງຄົມ ໂດຍສະເພາະໃນຂະແໜງອຸດສາຫະກຳ ແລະ ການຄ້າ ໄດ້ມີການພົວພັນກັນຢ່າງເນື່ອງນິດລຽນຕິດ ປະຕິບັດພື້ນຖານເສດຖະກິດ, ການຄ້າ ແບບກົນໄກຕະຫລາດຕາມທິດສັງຄົມນິຍົມ ແລະ ເຊື່ອມຕິດເຂົ້າກັບເສດຖະກິດຂົງເຂດພາກພື້ນ ແລະ ສາກົນ.

ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມ ແມ່ນກອງປະຊຸມທີ່ມີຄວາມໝາຍຄວາມສຳຄັນ ແລະ ປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ການພັດທະນາໃນຂົງເຂດວຽກງານອຸດສາຫະກຳ ແລະ ການຄ້າ ຂອງ ລາວ ແລະ ຫວຽດນາມ. ອີງຕາມທິດທາງນະໂຍບາຍຂອງສອງລັດຖະບານ ທີ່ແນໃສ່ຫັນເອົາການຄ້າຊາຍແດນ ແລະ ຕະຫຼາດຊາຍແດນ ເປັນມາດຕະຖານ ແລະ ເງື່ອນໄຂຊຸກຍູ້ການຜະລິດຂະໜາດນ້ອຍ ແລະ ການສົ່ງອອກຂະໜາດນ້ອຍຂອງປະຊາຊົນໃຫ້ມີການຂະຫຍາຍຕົວຢ່າງແຂງແຮງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນຢູ່ໃນຂົງເຂດດັ່ງກ່າວດີຂຶ້ນເປັນກ້າວໆ, ຮ່ວມມືກັນພັດທະນາການຄ້າຊາຍແດນ ແລະ ຕະຫຼາດຊາຍແດນໃຫ້ເຕີບໃຫຍ່ຂະຫຍາຍຕົວ ເຂົ້າສູ່ລະບົບລະບຽບ ແລະ ຕ້ານໄດ້ການຄ້າຂາຍເຖື່ອນ ທັງເປັນການລົບລ້າງຄວາມທຸກຍາກ ຂອງປະຊາຊົນທີ່ອາໄສຢູ່ບໍລິເວນຊາຍແດນ ຂອງ ທັງສອງປະເທດ.

ບັນດາທ່ານ ທີ່ນັບຖື ແລະ ຮັກແພງ

ຂ້າພະເຈົ້າເປັນເອກະພາບຕໍ່ການສັງເກດຕີລາຄາຜົນສຳເລັດທີ່ທຸກພາກສ່ວນກ່ຽວຂ້ອງ ຂອງ ລາວ ແລະ ຫວຽດນາມ ທັງສູນກາງ ແລະ ທ້ອງຖິ່ນຍາດມາໄດ້ນັ້ນ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ສືບຕໍ່ແກ້ໄຂໃນໄລຍະເກືອບສອງປີຜ່ານມາ ທີ່ ທ່ານ ຫວູ ຫືວຮ່ວາງ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ຫົວໜ້າຄະນະ ຜູ້ແທນຝ່າຍຫວຽດນາມ ໄດ້ຍົກມານັ້ນ. ຂ້າພະເຈົ້າສັງເກດເຫັນວ່າ ໃນໄລຍະ 05 ປີຜ່ານມາ ຄະນະນຳກະຊວງ ອຸດສາຫະກຳ ແລະ ການຄ້າທັງສອງຝ່າຍໄດ້ມີການພົບປະໃນແຕ່ລະຂັ້ນເຊັ່ນ: ຂັ້ນລັດຖະມົນຕີ ວ່າການ, ຂັ້ນລັດຖະ ມົນຕີຊ່ວຍວ່າການ, ຂັ້ນຄະນະກົມຂອງກະຊວງ ແລະ ຂັ້ນພະແນກອຸດສາຫະກຳ ແລະ ການຄ້າ ແຂວງເພື່ອພ້ອມ ກັນຜັນຂະຫຍາຍຂໍ້ຕົກລົງ ທີ່ການນຳຂັ້ນສູງ ຂອງ ພັກ ແລະ ລັດຖະບານ ໄດ້ເຊັນຮ່ວມກັນກໍ່ຄືບັນດາສັນຍາ, ບົດບັນທຶກກອງປະຊຸມຄະນະກຳມາທິການຮ່ວມມື ລາວ-ຫວຽດນາມ ປະຈຳປີ ແລະ ກາງປີ ທີ່ໄດ້ມີການຊີ້ນຳ ຢ່າງໃກ້ຊິດຕໍ່ວຽກງານການຮ່ວມມື ຂອງ ສອງຂະແໜງ ອຸດສາຫະກາ ແລະ ການຄ້າລາວ ແລະ ຫວຽດນາມເວົ້າລວມ ແລະ ການຮ່ວມມືພັດທະນາການຄ້າຊາຍແດນ ແລະ ຕະຫຼາດຊາຍແດນເວົ້າສະເພາະ.

ໃນໄລຍະຜ່ານມາເຫັນວ່າ ກົມການນຳເຂົ້າ ແລະ ສົ່ງອອກ ຂອງ ລາວ ແລະ ກົມການຄ້າພູດອຍ ແລະ ຂອງ ສສ ຫວຽດນາມ ໄດ້ປະສານສົມທົບກັນຢ່າງໃກ້ຊິດ ໃນການຊຸກຍູ້ສົ່ງເສີມ ໂຄງການພັດທະນາການຄ້າ ລາວ-ຫວຽດນາມ ໃນໄລຍະປີ 2008-2015 ໂດຍສະເພາະແມ່ນ ການສ້າງສຳເລັດແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020, ພ້ອມກັນຈັດຕັ້ງຄະນະລົງກວດກາຕົວຈິງຢູ່ດູ່ດ່ານສາກົນຈຳນວນໜຶ່ງກ່ຽວກັບ ການຈັດຕັ້ງປະຕິບັດຂໍ້ຕົກລົງຮ່າໂນຍ 2007, ລົງສົມທົບກັບອຳນາດການປົກຄອງແຂວງຊຽງຂວາງ ແລະ ເງະອານ ເພື່ອກວດກາໂຄງການຍົກລະດັບຕະຫຼາດຫ້ວຍດິນດຳ ແລະ ອື່ນໆ... ບົນພື້ນຖານຄວາມເອົາໃຈໃສ່ ຂອງ ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນໃນການຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການຄ້າຈຶ່ງເປັນຜົນເຮັດໃຫ້ມູນຄ່າການຄ້າສອງຝ່າຍ ບັນລຸໄດ້ 01 ຕື້ ໂດລາ ໃນປີ 2010 ຕາມຄາດໝາຍ.

ບັນດາທ່ານ ທີ່ນັບຖື ແລະ ຮັກແພງ

ຄຽງຄູ່ກັບຜົນງານທີ່ ສອງຝ່າຍ ລາວ ແລະ ຫວຽດນາມ ຮ່ວມກັນຍາດມາໄດ້ນັ້ນ ກໍ່ຍັງມີບາງບັນຫາທີ່ຈະຕ້ອງໄດ້ຮ່ວມກັນປັບປຸງ ແລະ ແກ້ໄຂ ເຊິ່ງຂ້າພະເຈົ້າຢາກສະເໜີໃຫ້ກອງປະຊຸມໄດ້ຮ່ວມກັນສົນທະນາ ດັ່ງນີ້:

1. ຈະເຮັດແນວໃດເພື່ອເຮັດໃຫ້ບັນດາຂັ້ນຕອນ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບການຄຸ້ມຄອງວຽກງານການຄ້າຊາຍແດນ, ການຄ້າຜ່ານແດນ ຂອງ ທັງສອງຝ່າຍ ມີຄວາມສະດວກ, ງ່າຍດາຍ ແລະ ມີຄ່າສິ້ນເປືອງທີ່ສົມເຫດສົມຜົນ ແນໃສ່ເພື່ອອຳນວຍຄວາມສະດວກໃຫ້ແກ່ນັກທຸລະກິດ ພ້ອມດຽວກັນກໍ່ເປັນການຊຸກຍູ້

ສົ່ງເສີມການເພີ່ມມູນຄ່າການຄ້າສອງຝ່າຍໃຫ້ໄດ້ຕາມຄາດໝາຍທີ່ສອງລັດຖະບານວາງອອກ ແລະ ເພື່ອເປັນພື້ນຖານໃຫ້ແກ່ການນຳໃຊ້ລະບົບການກວດກາປະຕູດຽວ, ຄັ້ງດຽວ ທີ່ທັງສອງລັດຖະບານໃຫ້ຄວາມສຳຄັນ ເຊິ່ງຄາດວ່າຈະເປີດນຳໃຊ້ເປັນຄັ້ງທຳອິດ ຢູ່ ດ່ານສາກົນ ແດນສະຫວັນ-ລາວບາວ ໃນຕົ້ນປີ 2015 ທີ່ຈະມາເຖິງນີ້.

2. ຄວນສ້າງກົນໄກການປະສານງານຮູບການໃດ ເພື່ອໃຫ້ການພົວພັນແລກປ່ຽນຂໍ້ມູນຂ່າວສານ ທີ່ຕິດພັນກັບການຄຸ້ມຄອງວຽກງານການຄ້າຊາຍແດນ ຂອງສອງປະເທດມີຄວາມສະດວກ, ວ່ອງໄວ ແນໃສ່ສາມາດແກ້ໄຂບັນຫາທີ່ຍັງຄົງຄ້າງ ແລະ ຮີບດ່ວນໄດ້ທັນກັບສະພາບການ;

3. ຈະຊຸກຍູ້ສົ່ງເສີມພາກທຸລະກິດແນວໃດ ເພື່ອໃຫ້ເຂົາເຈົ້າມາມີສ່ວນຮ່ວມໃນການພັດທະນາການຄ້າຊາຍແດນ ແລະ ການສ້າງຕະຫຼາດຊາຍແດນ ໂດຍສະເພາະແມ່ນບັນດາຕະຫຼາດ ທີ່ນອນຢູ່ໃນແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020.

ສະຫາຍ ນາງ ລໍ ມາຍ ຈິງ ແລະ ສະຫາຍ ຫວູ ຫວີຮວ່າງ ທີ່ນັບຖື
ບັນດາ ສະຫາຍ ທີ່ຮັກແພງ

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມ ຄັ້ງນີ້ ຈະບັນລຸຜົນສຳເລັດອັນຈົບງາມ, ປະກອບສ່ວນເພີ່ມທະວີການຮ່ວມມືດ້ານ ເສດຖະກິດ-ການຄ້າ ລະຫວ່າງ ສອງປະເທດ ລາວ - ຫວຽດນາມ ເວົ້າລວມ ເວົ້າສະເພາະແມ່ນວຽກງານການຮ່ວມມືພັດທະນາການຄ້າຊາຍແດນ, ຕອບສະໜອງຄວາມມຸ້ງມາດປາດຖະໜາ ຂອງ ພັກ - ລັດ ກໍ່ຄືປະຊາຊົນທັງສອງຊາດ ລາວ - ຫວຽດນາມ ຂອງ ພວກເຮົາ.

ຂ້າພະເຈົ້າ ໃນນາມຕາງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ ກໍ່ຄື ກະຊວງອຸດສາຫະກຳ ແລະ ການຄ້າ ລາວ ຂໍສະແດງຄວາມຮູ້ບຸນຄຸນມາຍັງພັກ ແລະ ລັດຖະບານ ສສ ຫວຽດນາມ ກໍ່ຄືກະຊວງ ອຸດສາຫະກຳ ແລະ ການຄ້າ ຫວຽດນາມ ທີ່ໃຫ້ຄວາມຊ່ວຍເຫຼືອ ຂະແໜງອຸດສາຫະກຳ ແລະ ການຄ້າ ຂອງ ລາວ ຕະຫຼອດມາ ໂດຍສະເພາະແມ່ນໃນຂົງເຂດການພັດທະນາການຄ້າຊາຍແດນ ແລະ ຕະຫຼາດຊາຍແດນ ລະຫວ່າງ ສອງປະເທດ. ພິເສດ ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງ ສະຫາຍ ນາງ ລໍ ມາຍ ຈິງ ເລຂາພັກແຂວງ, ເຈົ້າແຂວງ ແຂວງດຽນບຽນ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ສ້າງເງື່ອນໄຂສະດວກໃນການຈັດກອງປະຊຸມໃນຄັ້ງນີ້, ຂໍອວຍພອນໃຫ້ສະຫາຍ ຫວູ ຫີວຮວ່າງ ພ້ອມດ້ວຍບັນດາສະຫາຍທີ່ມີໜ້າເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ຂໍອວຍພອນໃຫ້ກອງປະຊຸມຄັ້ງນີ້ຈົ່ງປະສົບຜົນສຳເລັດຢ່າງຈົບງາມ.

**ຂໍຂອບໃຈ**

# ບົດລາຍງານ

## ການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໄລຍະ 05 ປີ (2009-2014)

## ແລະ

## ແຜນການຮ່ວມມືໄລຍະປີ2015-2020

## <u>ພາກທີ I</u>

## ຕີລາຄາສະພາບການຮ່ວມມື ລະຫວ່າງ ສອງຝ່າຍໃນຊຸມປີຜ່ານມາ

### I. <u>ການເຄື່ອນໄຫວຈັດຕັ້ງປະຕິບັດການຄ້າຊາຍແດນ ລາວ-ຫວຽດນາມ (ໄລຍະ 2009-2014)</u>

ໂດຍປະຕິບັດຕາມເນື້ອໃນສັນຍາການຄ້າສອງຝ່າຍ ແລະ ແຜນແມ່ບົດການຮ່ວມມືຍົກຍອດມູນຄ່າການຄ້າ ລາວ-ຫວຽດນາມ ໄລຍະ 2008-2010 ແລະ 2011-2015 ແລະ ແຜນການຮ່ວມມືຮອບດ້ານຂອງສອງກະຊວງ. ທັງສອງຝ່າຍ ລາວ-ຫວຽດນາມ ໄດ້ສົມທົບກັນສ້າງບັນດາກົນໄກການຮ່ວມມືຂຶ້ນມາ ເພື່ອຊຸກຍູ້ການຜັນຂະຫຍາຍແຜນແມ່ບົດການຮ່ວມມືໃຫ້ບັນລຸຜົນຕາມເປົ້າໝາຍ ໃນນັ້ນ, ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ກໍແມ່ນກົນໄກການຮ່ວມມືໜຶ່ງທີ່ສຳຄັນ ແລະ ຈຳເປັນເພື່ອຍົກສູງຄວາມສຳຄັນຂອງການຮ່ວມມື ແລະ ເພີ່ມທະວີສາຍພົວພັນມິດຕະພາບແບບພິເສດ ຂອງສອງຊາດ ລາວ-ຫວຽດນາມ ໂດຍສະເພາະແມ່ນໃນຂົງເຂດການຮ່ວມມືພັດທະນາການຄ້າຊາຍແດນ ແລະ ຕະຫຼາດຊາຍແດນ ລະຫວ່າງ ສອງປະເທດ ໂດຍແມ່ນສອງກະຊວງອຸດສາຫະກຳ ແລະ ການຄ້າ ລາວ-ຫວຽດນາມ ເປັນຄູ່ປະສານງານໃນການຈັດຕັ້ງ ຮ່ວມກັບບັນດາແຂວງທີ່ມີຊາຍແດນຕິດຈອດກັນຂອງສອງປະເທດ ເຊິ່ງຕາມການຕົກລົງເປັນເອກະພາບ ທັງສອງຝ່າຍໄດ້ສັບປ່ຽນກັນເປັນເຈົ້າພາບຈັດກອງປະຊຸມດັ່ງກ່າວໃນທຸກໆສອງປີ.

ກອງປະຊຸມນີ້ຍັງເປັນເວທີສົນທະນາຮ່ວມກັນ ໃນການສັງເກດຕີລາຄາການຮ່ວມມືພັດທະນາການຄ້າຊາຍແດນຂອງທັງສອງປະເທດ, ຮ່ວມກັນຄົ້ນຄວ້າແນວທາງການຮ່ວມມືພັດທະນາການຄ້າຊາຍແດນໃນຕໍ່ໜ້າ, ໂດຍໄດ້ເປີດກວ້າງໃຫ້ບັນດາພະແນກອຸດສາຫະກຳ ແລະ ການຄ້າ ແລະ ພາກທຸລະກິດ ຂອງແຂວງທີ່ມີຊາຍແດນຕິດຈອດລະຫວ່າງ ລາວ ແລະ ຫວຽດນາມ ໄດ້ມີໂອກາດພົບປະແລກປ່ຽນຄວາມຄິດເຫັນນຳກັນ ແລະ ເປັນອີກຊ່ອງທາງໜຶ່ງໃນການເຜີຍແຜ່ແນວທາງການພັດທະນາການຄ້າຊາຍແດນໃນຕໍ່ໜ້າ.

ນັບແຕ່ປີ 2009 ຫາຕົ້ນປີ 2014 ການປະຕິບັດເນື້ອໃນຈິດໃຈຂອງ 03 ສະໄໝກອງປະຊຸມທີ່ຜ່ານມາໄດ້ປະກອບສ່ວນທັງທາງກົງ ແລະ ທາງອ້ອມໃນການພັດທະນາສົ່ງເສີມການພົວພັນແລກປ່ຽນຊື້-ຂາຍ ລະຫວ່າງ ສອງປະເທດ ໃຫ້ມີການຂະຫຍາຍຕົວ ແລະ ມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ ເຊິ່ງມັນໄດ້ສະແດງອອກໃນສະຖິຕິການນຳເຂົ້າ-ສົ່ງອອກ ເຊັ່ນ:

- ປີ 2010 ມູນຄ່າການນຳເຂົ້າ-ສົ່ງອອກ ລະຫວ່າງ ສອງປະເທດ ໂດຍບໍ່ລວມສິນຄ້າຜ່ານແດນ ແລະ ຂາອອກຕໍ່ ສາມາດບັນລຸໄດ້ ຫຼາຍກວ່າ 649,99 ລ້ານ ໂດລາສະຫະລັດ ແລະ ອັດຕາການຂະຫຍາຍຕົວແມ່ນສາມາດບັນລຸໄດ້ກວ່າ 31% ທຽບໝົດປີ 2009.
- ນັບແຕ່ປີ 2011 – 2013 ມູນຄ່າການນຳເຂົ້າ-ສົ່ງອອກຂອງສອງປະເທດສືບຕໍ່ເພີ່ມຂຶ້ນຢ່າງລຽນຕິດ ຈົນເຖິງປີ 2013 ສາມາດບັນລຸໄດ້ ຫຼາຍກວ່າ 1.251 ລ້ານ ໂດລາສະຫະລັດ, ໃນນັ້ນພົ້ນເດັ່ນກວ່າໝູ່ແມ່ນການສົ່ງອອກຂອງລາວໄປຫວຽດນາມ ທີ່ເພີ່ມຂຶ້ນກວ່າ 33,51% ທຽບໃສ່ປີ 2012.
- ໃນ 6 ເດືອນຕົ້ນປີ 2014 ທີ່ຜ່ານມາ ການນຳເຂົ້າ-ສົ່ງອອກ ລາວ-ຫວຽດນາມ ບັນລຸໄດ້ 888,03 ລ້ານ ໂດລາສະຫະລັດ ເພີ່ມຂຶ້ນ 33,35% ທຽບໃສ່ໄລຍະດຽວກັນຂອງປີ 2013. ໃນນັ້ນ, ການນຳເຂົ້າຈາກຫວຽດນາມເພີ່ມຂຶ້ນ 2,25% ແລະ ສົ່ງອອກຂອງລາວໄປຫວຽດນາມເພີ່ມຂຶ້ນ 43,63%.

- ຕາຕະລາງສັງລວມມູນຄ່ານໍາເຂົ້າສົ່ງອອກ ລາວ-ຫວຽດນາມ ໄລຍະ ປີ 2009 – 6 ເດືອນຕົ້ນປີ 2014 (ບໍ່ລວມສິນຄ້າຜ່ານແດນ ແລະ ຂາອອກຕໍ່)

| ປີ | ນໍາເຂົ້າ | ສົ່ງອອກ | ລວມ | ເປີເຊັນ (%) | IM % | EX % |
|---|---|---|---|---|---|---|
| 2009 | 137.03 | 309.65 | 446.68 | | | |
| 2010 | 197.64 | 452.35 | 649.99 | 31,28 | 30,67 | 31,55 |
| 2011 | 219.17 | 594.35 | 813.52 | 20,10 | 9,82 | 23,89 |
| 2012 | 316.38 | 596.24 | 912.62 | 10,86 | 30,73 | 0,32 |
| 2013 | 354.93 | 896.74 | 1251.67 | 27,09 | 10,86 | 33,51 |
| 6 m 2014 | 220.66 | 667.37 | 888.03 | 33,35 | 2,25 | 43,63 |




ຕົວເລກສະຖິຕິມູນຄ່າການຄ້າຊາຍແດນ ຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ ສສ ຫວຽດນາມ

ບັນດາສິນຄ້າຕົ້ນຕໍທີ່ມີການຊື້-ຂາຍຮ່ວມກັນກໍ່ມີຫຼາກຫຼາຍ ເຊັ່ນ: ນໍາເຂົ້າຈາກຫວຽດນາມ ລວມມີ: ນໍ້າມັນເຊື້ອໄຟ, ເຫຼັກ, ເຄື່ອງນຸ່ງຫົ່ມ, ສາຍໄຍແກ້ວ, ເຄື່ອງໃຊ້ສອຍໃນຄົວເຮືອນ, ສະບຽງອາຫານ, ອາຫານທະເລ ແລະ ອື່ນໆ ... ສ່ວນປະເພດສິນຄ້າສົ່ງອອກຕົ້ນຕໍມີ: ໄມ້ ແລະ ຜະລິດຕະພັນຈາກໄມ້, ກາເຟ, ມັນຕົ້ນ, ຢາງພາລາ, ເຂົ້າ, ສາລີ, ເຄື່ອງປ່າຂອງດົງ, ແຮ່ທາດ ແລະ ອື່ນໆ...

II. ວຽກງານທີ່ໄດ້ຈັດຕັ້ງປະຕິບັດ

ບົນເນື້ອໃນຈິດໃຈການເສີມຂະຫຍາຍສາຍພົວພັນມິດຕະພາບ ການຮ່ວມມືຮອບດ້ານຂອງສອງຊາດ ລາວ-ຫວຽດນາມ ໂດຍສະເພາະການຮ່ວມມືຂອງຂະແໜງການອຸດສາຫະກໍາ ແລະ ການຄ້າ ຂອງສອງປະເທດ ໄດ້ມີຫຼາຍໂຄງການຮ່ວມມືພັດທະນາ ທີ່ໄດ້ຮັບການຈັດຕັ້ງປະຕິບັດ ເຊິ່ງພົ້ນເດັ່ນມີຄື:

1. ໂຄງການພັດທະນາການຄ້າ: ໃນໄລຍະ 2008-2010 ແລະ 2011-2015 ສອງຝ່າຍໄດ້ຈັດຕັ້ງປະຕິບັດແຜນການຍົກຍອດມູນຄ່າການຄ້າສອງຝ່າຍ ລາວ-ຫວຽດນາມ ໃຫ້ບັນລຸ 01 ຕື້ໂດລາ ໃນປີ 2010 ແລະ 02 ຕື້ ໃນປີ 2015 ສອງຝ່າຍໄດ້ດໍາເນີນແຜນການເຄື່ອນໄຫວຮ່ວມກັນເຊັ່ນ:

- ຮ່ວມກັນລົງກວດກາສະພາບການປະຕິບັດຂໍ້ຕົກລົງ ຮ່ານອຍ 2007 ກ່ຽວກັບການອໍານວຍຄວາມສະດວກໃຫ້ແກ່ຄົນ, ສິນຄ້າ ແລະ ພາຫະນະ ເຂົ້າ-ອອກຜ່ານດ່ານ ລະຫວ່າງ ສອງປະເທດ.
- ແລກປ່ຽນບົດຮຽນ ກ່ຽວກັບ ການຄຸ້ມຄອງວຽກງານການຄ້າຊາຍແດນ ຂອງບັນດາແຂວງທີ່ມີຊາຍແດນຮ່ວມກັນ.

- ຜັດປ່ຽນການຈັດງານວາງສະແດງສິນຄ້າປະຈໍາປີ ເພື່ອໂຄສະນາແລກປ່ຽນສິນຄ້າ ແລະ ຊອກຫາຄູ່ຮ່ວມມື ທາງດ້ານການຄ້າແນໃສ່ເພີ່ມທະວີການແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນໃນການຄຸ້ມຄອງການຄ້າຊາຍແດນ ກັບບັນດາຂະ ແໜງການທີ່ກ່ຽວຂ້ອງ ແລະ ອື່ນໆ...

ໃນປີ 2013 ທີ່ຜ່ານມາເຫັນວ່າມູນຄ່າການນໍາເຂົ້າ-ສົ່ງອອກ ລາວ-ຫວຽດນາມ ເພີ່ມຂຶ້ນຫຼາຍກວ່າ 27% ແລະ ລື່ນຄາດໝາຍ 2% ຂອງແຜນການ. ຖ້າອັດຕາການເພີ່ມຂຶ້ນຍັງສືບຕໍ່ໃນລະດັບນີ້ ຄາດວ່າມູນຄ່າການຄ້າ ລາວ-ຫວຽດນາມ ໃນທ້າຍປີ 2014 ຈະບັນລຸໄດ້ຫຼາຍກວ່າ 1,5 ຕື້ໂດລາສະຫະລັດ ແລະ ຖ້າສາມາດຮັກສາອັດຕາ ການເພີ່ມຂຶ້ນນີ້ໄດ້ໃນປີຕໍ່ໄປເປົ້າໝາຍ 02 ຕື້ໂດລາສະຫະລັດໃນປີ 2015 ກໍຈະສາມາດບັນລຸໄດ້ຕາມແຜນການ.

2. **ການຜັນຂະຫຍາຍແຜນແມ່ບົດໂຄງການພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020:** ໃນຕົ້ນປີ 2013 ປະຕິບັດຕາມການອະນຸມັດ ຂອງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ ຫວຽດນາມ ສອງກະຊວງອຸດສາຫະກໍາ ແລະ ການຄ້າ ລາວ-ຫວຽດນາມ ໄດ້ຮ່ວມກັນລົງນາມຜ່ານທາງການທູດ ໃນ ຂໍ້ຕົກລົງຮ່ວມ ກ່ຽວກັບການຈັດຕັ້ງປະຕິບັດເນື້ອໃນແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020. ກະຊວງອຸດສາຫະກໍາ ແລະ ການຄ້າ ສປປ ລາວ ໄດ້ອອກແຈ້ງການ ສະບັບເລກທີ 1000/ອຄ.ກຂອ, ລົງວັນທີ 31 ພຶດສະພາ 2013 ກ່ຽວກັບການຈັດຕັ້ງຜັນຂະຫຍາຍເນື້ອໃນແຜນແມ່ບົດຂ້າງເທິງ ໂດຍເນັ້ນໜັກໃຫ້ສົ່ງເສີມເອກະຊົນທັງພາຍໃນ ແລະ ຕ່າງປະເທດມາລົງທຶນ.

ຜ່ານການຈັດຕັ້ງຜັນຂະຫຍາຍເນື້ອໃນແຜນແມ່ບົດຂ້າງເທິງ ສອງຝ່າຍເຫັນໄດ້ບັນດາ ຂໍ້ຫຍຸ້ງຍາກໃນການຈັດ ຕັ້ງປະຕິບັດ ໂດຍສະເພາະແມ່ນການລະດົມທຶນຈາກພາກທຸລະກິດເພື່ອມາພັດທະນາບັນດາຕະຫຼາດ ທີ່ນອນຢູ່ໃນ ແຜນແມ່ບົດ ອີກດ້ານໜຶ່ງເຖິງແມ່ນວ່າຈຸດທີ່ຈະສ້າງຕະຫຼາດອາດຈະເປັນຈຸດຍຸດທະສາດ ແຕ່ເນື່ອງຈາກວ່າ ເຂດ ດັ່ງກ່າວແມ່ນເປັນຈຸດທີ່ບໍ່ເໝາະສົມໃນການພັດທະນາເສດຖະກິດ ດັ່ງນັ້ນ, ຈຶ່ງບໍ່ສາມາດດຶງດູດນັກລົງທຶນ ເຂົ້າມາ ລົງທຶນໃນເຂດດັ່ງກ່າວໄດ້ ໂດຍສະເພາະແມ່ນໂຄງການກໍ່ສ້າງຍົກລະດັບຕະຫຼາດຫ້ວຍດິນດໍາ ເມືອງໜອງແຮດ ແຂວງ ຊຽງຂວາງ.

3. **ການໃຫ້ບູລິມະສິດຫຼຸດຜ່ອນອັດຕາພາສີຂາເຂົ້າ**ໃຫ້ແກ່ກັນ: ເພື່ອເປັນການສ້າງເງື່ອນໄຂສະດວກໃຫ້ແກ່ການຄ້າ ລະຫວ່າງ ລາວ-ຫວຽດນາມ ໃນທ້າຍປີ 2011 ສອງກະຊວງໄດ້ສືບຕໍ່ລົງນາມໃນຂໍ້ຕົກລົງ ກ່ຽວກັບການໃຫ້ບູລິມາ ສິດຫຼຸດຜ່ອນອັດຕາພາສີນໍາເຂົ້າຕໍ່ກັນ ແລະ ໃນປີ 2012 ສອງຝ່າຍໄດ້ຕົກລົງເປັນເອກະພາບແກ້ໄຂບາງເນື້ອໃນ ຂອງ ຂໍ້ຕົກລົງດັ່ງກ່າວ ໂດຍສະເພາະແມ່ນ 02 ບັນຫາສໍາຄັນຄື: (1) ຝ່າຍຫວຽດນາມເຫັນດີເພີ່ມໂກຕ້ານໍາເຂົ້າສິນຄ້າ ປະເພດເຂົ້າ ຈາກຈໍານວນ 40.000 ໂຕນ ຂຶ້ນເປັນ 70.000 ໂຕນ ເຊິ່ງເລີ່ມນໍາໃຊ້ນັບແຕ່ ປີ 2012 ເປັນຕົ້ນໄປ, (2) ບັນດາສິນຄ້າທີ່ມີແຫຼ່ງກໍາເນີດຈາກຫວຽດນາມ ທີ່ນອນໃນບັນຊີລາຍການສິນຄ້າທີ່ຕ້ອງໄດ້ສະຫງວນໄວ້ຖາວອນ ຂອງ ສປປ ລາວ ຈະບໍ່ໄດ້ຮັບບູລິມະສິດອັດຕາພາສີນໍາເຂົ້າ 0% ນັບແຕ່ປີ 2012. ພ້ອມກັນນັ້ນ, ສອງຝ່າຍຍັງໄດ້ ຕົກລົງເປັນເອກະພາບກັນ ສືບຕໍ່ນໍາໃຊ້ນະໂຍບາຍການໃຫ້ບູລິມະສິດດ້ານອັດຕາພາສີນໍາເຂົ້າດັ່ງກ່າວໃນ ປີ 2014 ແລະ ສ້າງເງື່ອນໄຂສະດວກ ໃຫ້ບັນດາວິສາຫະກິດສາມາດນໍາໃຊ້ຜົນປະໂຫຍດ ຈາກການໃຫ້ບູລິມະສິດດັ່ງກ່າວຢ່າງ ເຕັມເມັດເຕັມໜ່ວຍ ໂດຍສະເພາະແມ່ນການຫຼຸດຜ່ອນຂັ້ນຕອນການຂໍໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ແລະ ການແຈ້ງ ສິນຄ້າຜ່ານດ່ານຊາຍແດນ. ເພື່ອເປັນການຜັນຂະຫຍາຍເນື້ອໃນຈິດໃຈທີ່ກ່າວມານັ້ນ ກະຊວງ ອຸດສາຫະກໍາ ແລະ ການຄ້າ ສປປ ລາວ ກໍ່ໄດ້ມອບສິດໃຫ້ບັນດາພະແນກອຸດສາ ຫະກໍາ ແລະ ການຄ້າແຂວງ ສາມາດອອກຟອມ S ໄດ້.

ຜ່ານການຈັດຕັ້ງປະຕິບັດ ເຫັນໄດ້ວ່າ ການໃຫ້ບູລິມາສິດຫຼຸດຜ່ອນອັດຕາພາສີນໍາເຂົ້າໃຫ້ແກ່ກັນ ໂດຍການນໍາ ໃຊ້ ຟອມ S ນັບມື້ນັບມີບົດບາດສໍາຄັນໃນການອໍານວຍຄວາມສະດວກ ໃຫ້ແກ່ສິນຄ້າທີ່ມີແຫຼ່ງກໍາເນີດຈາກສອງ ປະເທດເຂົ້າມາສູ່ຕະຫຼາດຂອງກັນແລະກັນ ປະກອບສ່ວນເຮັດໃຫ້ມູນຄ່າການຄ້າ ລາວ-ຫວຽດນາມ ນັບມື້ນັບເພີ່ມ ຂຶ້ນ, ໃນປີ 2012 ມູນຄ່າສິນຄ້າສົ່ງອອກຂອງລາວ ທີ່ສົ່ງອອກໄປຫວຽດນາມ ພາຍໃຕ້ຟອມ S ມີມູນຄ່າຫຼາຍກວ່າ 49.23 ລ້ານ ໂດລາສະຫະລັດ ແລະ ປີ 2013 ສາມາດປະຕິບັດໄດ້ຫຼາຍກວ່າ 76,73 ລ້ານ ໂດລາສະຫະລັດ.

4. ວຽກງານການອໍານວຍຄວາມສະດວກທາງດ້ານການຄ້າ ໃຫ້ແກ່ການເຄື່ອນໄຫວນໍາເຂົ້າ-ສົ່ງອອກ, ການຜ່ານ ແດນ ແລະ ຂາອອກຕໍ່ ລະຫວ່າງ ລາວ-ຫວຽດນາມ ແມ່ນວຽກງານໜຶ່ງທີ່ຂະແໜງອຸດສາຫະກໍາ ແລະ ການຄ້າ

ເປັນໃຈກາງປະສານງານ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ເຊັ່ນ: ຂະແໜງການເງິນ, ຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນໆ ພ້ອມທັງບັນດາແຂວງທີ່ມີຊາຍແດນຮ່ວມກັນກັບ ສສ ຫວຽດນາມ ເຊິ່ງຜ່ານມາ ໄດ້ມີການປະສານງານກັນຢ່າງໃກ້ຊິດ ໃນການຕິດຕາມການຈັດຕັ້ງຜັນຂະຫຍາຍເນື້ອໃນຂອງບັນດາສັນຍາ ແລະ ອານຸສັນຍາຕ່າງໆ ທີ່ຕິດພັນກັບວຽກງານຂອງຕົນ ໃນນັ້ນ, ມີການເຄື່ອນໄຫວວຽກສຳຄັນຈຳນວນໜຶ່ງ ເຊັ່ນ:

- ລົງກວດກາການຈັດຕັ້ງປະຕິບັດ ຂໍ້ຕົກລົງ ຮ່າໂນຍ 2007 ກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ ຄົນ, ພາຫະນະ ແລະ ສິນຄ້າ ຜ່ານດ່ານຊາຍແດນ ລາວ-ຫວຽດນາມ ໃນປີ 2013 ແລະ ປີ 2014 ຢູ່ບັນດາດ່ານຈຸດສຸມ ໃນການພັດທະນາ ເພື່ອຕິດຕາມສະພາບບັນຫາທີ່ເປັນອຸປະສັກໃນການພັດທະນາການຄ້າຮ່ວມກັນ ແລະ ແກ້ໄຂບັນຫາພື້ນຖານໃນຂອບເຂດໜ້າວຽກກັບທີ່ ໃຫ້ແກ່ບັນດາດ່ານ.

- ໃນເດືອນ ມິຖຸນາ 2014 ທີ່ຜ່ານມາ ຄຽງຄູ່ກັບການລົງກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງ ຮ່າໂນຍ 2007 ສອງຝ່າຍໄດ້ແຕ່ງຕັ້ງຄະນະໄປຮ່ວມເຮັດວຽກກັບຜູ້ຕາງໜ້າຈາກບັນດາ ຂະແໜງການຄຸ້ມຄອງ ຂອງ ແຂວງຄຳມ່ວນ ແລະ ແຂວງກວາງບິງ ກ່ຽວກັບບັນຫາການເກັບຄ່າທຳນຽມຢູ່ເບື້ອງດ່ານຈາລໍ ຂອງ ຫວຽດນາມ ທີ່ເປັນຜົນກະທົບຕໍ່ທຸລະກິດການຂົນສົ່ງຂອງລາວ, ຄະນະໄດ້ຊີ້ແຈງເຖິງຄວາມຈຳເປັນໃນການສົ່ງເສີມການອຳນວຍຄວາມສະດວກທາງດ້ານການຄ້າລະຫວ່າງກັນ, ການປະຕິບັດສັນຍາກ່ຽວກັບການຂົນສົ່ງທາງບົກຜ່ານແດນ ທີ່ສອງຝ່າຍ ລາວ-ຫວຽດນາມ ໄດ້ລົງນາມ ໃນວັນທີ 15 ກັນຍາ 2010 ມາດຕາ 32 ວ່າດ້ວຍຄ່າທຳນຽມທີ່ພົວພັນກັບການຂົນສົ່ງຜ່ານແດນ ແລະ ສະເໜີໃຫ້ແຂວງກວາງບິງ ຊ່ວຍຄົ້ນຄວ້າພິຈາລະນາແກ້ໄຂອັດຕາການເກັບຄ່າທຳນຽມ ເພື່ອຫຼຸດຜ່ອນຕົ້ນທຶນການສົ່ງອອກສິນຄ້າຂອງຝ່າຍລາວ ແລະ ຄວາມສະເໝີພາບໃນການຂົນສົ່ງຂອງທັງສອງຝ່າຍ.

5. **ການຮ່ວມມືຊ່ວຍເຫຼືອທາງດ້ານວິຊາການໃນວຽກງານການຄຸ້ມຄອງການຄ້າຊາຍແດນ:** ອີງຕາມເນື້ອໃນບົດບັນທຶກກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ນັບແຕ່ປີ 2011 ມາເຖິງປະຈຸບັນ ຝ່າຍຫວຽດນາມໄດ້ໃຫ້ການຊ່ວຍເຫຼືອ ແລະ ສ້າງເງື່ອນໄຂໃຫ້ແກ່ຄະນະວິຊາການກະຊວງອຸດສາຫະກຳ ແລະ ການຄ້າຂອງລາວ ເດີນທາງໄປຖອດຖອນບົດຮຽນ ກ່ຽວກັບ ນະໂຍບາຍການຄຸ້ມຄອງວຽກງານການຄ້າຊາຍແດນ ຂອງຫວຽດນາມກັບບັນດາປະເທດເພື່ອນບ້ານ ໂດຍເດີນທາງໄປເບິ່ງຕົວຈິງສະພາບການເຄື່ອນໄຫວຢູ່ຈຸດດ່ານຊາຍແດນຫວຽດນາມ-ຈີນ ໃນປີ 2011 ແລະ ຫວຽດນາມ-ກຳປູເຈຍ ໃນປີ 2013 ພ້ອມທັງເຮັດວຽກກັບບັນດາແຂວງກ່ຽວຂ້ອງ ກ່ຽວກັບການຜັນຂະຫຍາຍທິດຊີ້ນຳການຈັດຕັ້ງຄຸ້ມຄອງການຄ້າຊາຍແດນຂອງແຂວງຕົນ. ຜ່ານການໄປຖອດຖອນບົດຮຽນນັ້ນ ຝ່າຍລາວຖືວ່າຖືວ່າເປັນບົດຮຽນອັນດີ ທີ່ຄວນຈະນຳມາຜັນຂະຫຍາຍໃນຂັ້ນຕໍ່ໄປ.

## III. <u>ຂໍ້ຫຍຸ້ງຍາກ ແລະ ບັນດາຂໍ້ຄົງຄ້າງ</u>

ເຖິງແມ່ນວ່າ, ທັງສອງຝ່າຍໄດ້ພ້ອມກັນຕັ້ງໜ້າປະຕິບັດບັນດາວຽກ ທີ່ໄດ້ກ່າວມາຂ້າງເທິງນັ້ນເປັນຢ່າງດີ ສາມາດຍາດໄດ້ໝາກຜົນການຮ່ວມມືໃນຫຼາຍດ້ານ ແຕ່ກໍຍັງມີຫຼາຍບັນຫາທີ່ຍັງຄ້າງຄາ ສອງຝ່າຍຈະຕ້ອງສືບຕໍ່ຊອກວິທີແກ້ໄຂຮ່ວມກັນ ເຊັ່ນ:

1. **ການຊອກຫາແຫຼ່ງທຶນ ເພື່ອກໍ່ສ້າງ, ພັດທະນາຕາໜ່າງຕະຫຼາດຊາຍແດນ:** ເຖິງແມ່ນວ່າການສ້າງແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020 ຈະສຳເລັດຕາມເປົ້າໝາຍ ແຕ່ຂັ້ນຕອນການຈັດຕັ້ງຜັນຂະຫຍາຍກໍຍັງພົບຄວາມຫຍຸ້ງຍາກຫຼາຍປະການ ໂດຍສະເພາະແມ່ນການລະດົມນັກລົງທຶນ ແລະ ການຊອກຫາແຫຼ່ງທຶນເພື່ອມາກໍ່ສ້າງໂຄງການ ແມ່ນຍັງເປັນບັນຫາທີ່ທັງສອງຝ່າຍຈະຕ້ອງໄດ້ຮ່ວມກັນສືບຕໍ່ຄົ້ນຄວ້າ.

2. **ການລົງຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງ ຮ່າໂນຍ 2007 ເພື່ອອຳນວຍຄວາມສະດວກໃນການນຳເຂົ້າ-ສົ່ງອອກສິນຄ້າ ແລະ ສົ່ງເສີມການພັດທະນາການຄ້າຊາຍແດນ** ແມ່ນພົບຄວາມຫຍຸ້ງຍາກຍ້ອນສະພາບພູມສັນຖານຊາຍແດນຂອງສອງປະເທດ ທີ່ເປັນເຂດພູດອຍ, ເສັ້ນທາງບາງດ່ານກໍໄປມາຫຍຸ້ງຍາກ ເຮັດໃຫ້ການລົງເຮັດວຽກແຕ່ລະເທື່ອຕ້ອງໃຊ້ເວລາດົນ. ອີກດ້ານໜຶ່ງ, ຝ່າຍລາວເອງແມ່ນຂາດແຄນທາງດ້ານງົບປະມານໃນການເຮັດວຽກ ຈຶ່ງບໍ່ສາມາດປະຕິບັດການລົງກວດກາ 2 ຄັ້ງ/ປີ ໄດ້ຕາມເນື້ອໃນຈິດໃຈຂອງບົດບັນທຶກ ແລະ ສັນຍາທີ່ທັງສອງລັດຖະບານໄດ້ລະບຸໄວ້.

3. **ບັນຫາທີ່ຕິດພັນກັບການອຳນວຍຄວາມສະດວກທາງດ້ານການຄ້າ ທີ່ເປັນອຸປະສັກ** ເຊັ່ນ: ບັນຫາການເກັບຄ່າທຳນຽມທີ່ບໍ່ທັນເປັນເອກະພາບຂອງທັງສອງຝ່າຍ ສ້າງໃຫ້ເກີດຄວາມສັບສົນຕໍ່ພາກທຸລະກິດໃນການຈັດຕັ້ງປະຕິບັດ, ເພີ່ມລາຍຈ່າຍໃນການຂົນສົ່ງ ເຮັດໃຫ້ເພີ່ມຕົ້ນທຶນສິນຄ້ານຳເຂົ້າ-ສົ່ງອອກສູງຂຶ້ນຕື່ມ. ນອກຈາກນັ້ນ, ການອະນຸມັດນຳສິນຄ້າຜ່ານແດນ ຫວຽດນາມ ເຂົ້າມາລາວ ໃນປະເພດສິນຄ້າທີ່ລັດຖະບານຫວຽດນາມຄຸ້ມຄອງ ກໍ່ຍັງພົບບັນຫາຫຍຸ້ງຍາກ ຍ້ອນຂັ້ນຕອນໃຊ້ເວລາແກ່ຍາວ ເຊິ່ງເປັນສາເຫດໃຫ້ຄ່າໃຊ້ຈ່າຍໃນການຝາກສາງເພີ່ມຂຶ້ນ ແລະ ບໍ່ສາມາດນຳໃຊ້ໄດ້ທັນຕາມສະພາບຄວາມຕ້ອງການຕົວຈິງ.

4. **ການພົວພັນແລກປ່ຽນຂໍ້ມູນຂ່າວສານ ແລະ ແກ້ໄຂບັນຫາຮ່ວມກັນ ລະຫວ່າງ ບັນດາແຂວງທີ່ມີຊາຍແດນຕິດຈອດກັນ:** ຜ່ານມາ ຫຼາຍແຂວງທີ່ມີຊາຍແດນຕິດຈອດກັບຫວຽດນາມ ໄດ້ມີການພົວພັນແລກປ່ຽນຂໍ້ມູນຂ່າວສານກັນຢ່າງເປັນປົກກະຕິ ແຕ່ສຳລັບການແກ້ໄຂບັນຫາທີ່ເກີດຂຶ້ນຢູ່ດ່ານຊາຍແດນແມ່ນຍັງບໍ່ໄດ້ດີເທົ່າທີ່ຄວນເພາະບັນ ຫາສ່ວນຫຼາຍແມ່ນຕິດພັນກັບການຈັດຕັ້ງປະຕິບັດບັນດາສັນຍາ ທີ່ມີຄວາມເຂົ້າໃຈແຕກຕ່າງກັນ ເຮັດໃຫ້ການຜັນຂະຫຍາຍບໍ່ຖືກຕ້ອງ ຕົວຢ່າງ: ຄວາມເຂົ້າໃຈໃນການເກັບຄ່າທຳນຽມໃຫ້ຖືກຕ້ອງຕາມສັນຍາ ທີ່ສອງຝ່າຍໄດ້ເຊັນຮ່ວມກັນ.

5. **ການໃຫ້ບູລິມະສິດຫຼຸດຜ່ອນອັດຕາພາສີພາຍໃຕ້ ຟອມ S** ແມ່ນການໃຫ້ບູລິມະສິດຫຼຸດຜ່ອນອັດຕາພາສີຂາເຂົ້າແກ່ກັນແບບພິເສດສຸດ ຂອງສອງຝ່າຍແຕ່ຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ວິສາຫະກິດທັງສອງຝ່າຍບັງບໍ່ທັນນຳໃຊ້ໄດ້ໝົດທ່າແຮງຂອງການໃຫ້ບູລິມະສິດດັ່ງກ່າວ ສ່ວນໃຫຍ່ແມ່ນນຳໃຊ້ກັບສິນຄ້າທີ່ມີການພົວພັນຊື້-ຂາຍເປັນຈຳນວນຫຼາຍ ຖ້າມູນຄ່ານ້ອຍ, ການຄ້າຂາຍຕາມຊາຍແດນແມ່ນບໍ່ມີການນຳໃຊ້. ສາເຫດອາດເປັນຍ້ອນຫ້ອງການຂອງໜ່ວຍງານອອກຟອມຕັ້ງຢູ່ໄກຈາກຊາຍແດນ.

## <u>ພາກທີ II</u>
## ແຜນການຮ່ວມມືໃນຕໍ່ໜ້າ

### I. <u>ແຜນການຮ່ວມມືພັດທະນາການຄ້າຊາຍແດນ ໄລຍະ 2015-2020</u>

ເພື່ອເປັນການເພີ່ມທະວີສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງລັດຖະບານ ລາວ-ຫວຽດນາມ ກໍ່ຄືການເພີ່ມທະວີການຮ່ວມມື ລະຫວ່າງ ຂະແໜງອຸດສາຫະກຳ ແລະ ການຄ້າ ຂອງສອງປະເທດ ແລະ ເພື່ອເປັນການກະກຽມຄວາມພ້ອມໃຫ້ແກ່ການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ຫຼື AEC ໃນທ້າຍປີ 2015 ນີ້. ທັງສອງຝ່າຍຈະຕ້ອງຮີບຮ້ອນເຮັດສຳເລັດບັນດາແຜນການຮ່ວມມື ໂດຍສະເພາະໃນຂົງເຂດການຮ່ວມມືພັດທະນາການຄ້າຊາຍແດນ ດັ່ງນີ້:

1. ສືບຕໍ່ຊຸກຍູ້ໃຫ້ຂະແໜງການ ແລະ ບັນດາທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດໂຄງການພັດທະນາການຄ້າລະຫວ່າງ ສອງປະເທດ ໄລຍະ 2008-2015 ໃຫ້ບັນລຸເປົ້າໝາຍ 2015 ໃຫ້ໄດ້ 02 ຕື້ ໂດລາສະຫະລັດ.
2. ສືບຕໍ່ປະສານກັບທ້ອງຖິ່ນກ່ຽວຂ້ອງຂອງລາວ ຈັດຕັ້ງຜັນຂະຫຍາຍ "ແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020" ສາມາດຈັດຕັ້ງປະຕິບັດ ໃຫ້ປາກົດຜົນເປັນຈິງ.
3. ປະສານກັນຄົ້ນຄວ້າສ້າງ "ແຜນແມ່ບົດພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ວິໄສທັດຮອດປີ 2025" ແລະ "ກົນໄກການຄຸ້ມຄອງຕະຫຼາດຊາຍແດນ ລາວ-ຫວຽດນາມ" ໃຫ້ສຳເລັດຕາມແຜນການ.
4. ສືບຕໍ່ປະສານກັນລົງກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງຮ່າໂນ້ຍ 2007 ກ່ຽວກັບການສ້າງເງື່ອນໄຂສະດວກໃຫ້ແກ່ຄົນ, ພາຫະນະ, ສິນຄ້າຜ່ານຊາຍແດນສອງປະເທດ ແລະ ບັນຫາໃດຍັງຂ້ອງຄາ ພ້ອມກັນຄົ້ນຄວ້າແກ້ໄຂກັບທີ່.
5. ປະສານຊຸກຍູ້ປະຕິບັດການກວດກາປະຕູດຽວ, ຈຸດດຽວ ຢູ່ດ່ານສາກົນແດນສະຫວັນ-ລາວບາວ.
6. ສືບຕໍ່ເພີ່ມທະວີການແລກປ່ຽນຂໍ້ມູນຂ່າວສານ ແລະ ບົດຮຽນໃນການຄຸ້ມຄອງຕະຫຼາດຊາຍແດນ ກັບບັນດາຂະແໜງການກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ສອງປະເທດ ລາວ-ຫວຽດນາມ ໃຫ້ເປັນປົກກະຕິ.

7. ສືບຕໍ່ເພີ່ມທະວີການປະສານສົມທົບກັນ ໃນວຽກງານການຄຸ້ມຄອງຕະຫຼາດ ແນໃສ່ຫຼຸດຜ່ອນການຄ້າຂາຍນອກລະບົບ ໂດຍສະເພາະກັບບັນດາສິນຄ້າປະເພດ: ໄມ້, ຢາສູບ, ສັດປ່າ ທີ່ນອນໃນບັນຊີຄຸ້ມຄອງ.

## II. <u>ການສ້າງມາດຕະການ ແລະ ກົນໄກການຮ່ວມມືກັນ</u>

ການສົ່ງເສີມພັດທະນາການຄ້າຢູ່ຕາມຊາຍແດນ ລາວ-ຫວຽດນາມ ແມ່ນຈຸດພິເສດສະເພາະ, ທັງເປັນທ່າແຮງ ແລະ ເປັນມູນເຊື້ອຂອງປະຊາຊົນສອງປະເທດພວກເຮົາມາແຕ່ດົນນານແລ້ວ ສະນັ້ນ, ໃນການສ້າງນະໂຍບາຍສົ່ງເສີມຈຶ່ງມີບົດບາດສຳຄັນ ແລະ ເປັນໂຕວັດແທກຜົນສຳເລັດຂອງການພັດທະນາການຄ້າຊາຍແດນ ຂອງສອງປະເທດພວກເຮົາ ບັນດາມາດຕະການ ແລະ ກົນໄກນັ້ນຈະລວມມີ:

1. ສ້າງກົນໄກການປະສານງານ ໃນຂອດການພົວພັນແລກປ່ຽນຂໍ້ມູນຂ່າວສານ ທີ່ຕິດພັນກັບການຄຸ້ມຄອງວຽກງານການຄ້າຊາຍແດນຂອງສອງປະເທດ ແນໃສ່ແກ້ໄຂບັນຫາທີ່ຍັງຄົງຄ້າງ ໃຫ້ລຸລ່ວງໄປໂດຍໄວ.

- ປຶກສາຫາລື ກ່ຽວກັບ ສະພາບຄວາມບໍ່ເປັນເອກະພາບກັນໃນການກຳນົດເກັບຄ່າທຳນຽມ ຢູ່ບັນດາດ່ານຊາຍແດນ ຂອງເບື້ອງຫວຽດນາມ.

- ຮ່ວມກັນຄົ້ນຄວ້າແກ້ໄຂຂໍ້ຫຍຸ້ງຍາກໃນຂັ້ນຕອນ ທີ່ເຮັດໃຫ້ແກ່ຍາວເວລາໃນການເຄື່ອນຍ້າຍອາວຸດ, ລູກປືນ, ທາດລະເບີດ ຫຼື ອຸປະກອນເຕັກນິກ, ພາຫະນະການທະຫານ ສຳລັບປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ເປັນສາເຫດໃນການເພີ່ມຄ່າໃຊ້ຈ່າຍຝາກສາງ ແລະ ບໍ່ສາມາດນຳໃຊ້ໄດ້ທັນຕາມຄວາມຮຽກຮ້ອງຕ້ອງການຕົວຈິງ.

2. ແຕ່ງຕັ້ງຄະນະຄົ້ນຄວ້າສ້າງແຜນແມ່ບົດພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ວິໄສທັດຮອດປີ 2025 ລົງເລິກການຄົ້ນຄວ້າທິດທາງແຜນການພັດທະນາການຄ້າຊາຍແດນ ຂອງສອງປະເທດ ພາຍຫຼັງການເຂົ້າເປັນສະມາຊິກປະຊາຄົມເສດຖະກິດອາຊຽນ ຫຼື AEC ເພື່ອສ້າງນະໂຍບາຍຄຸ້ມຄອງການຄ້າຊາຍແດນ ທີ່ມີປະສິດທິພາບ ແລະ ເປັນເອກະພາບກັນ.

3. ຊຸກຍູ້ສົ່ງເສີມການມີສ່ວນຮ່ວມຂອງພາກທຸລະກິດ ເຂົ້າມາມີສ່ວນຮ່ວມໃນການພັດທະນາການຄ້າຊາຍແດນ, ການສ້າງຕະຫຼາດຊາຍແດນ ໂດຍສະເພາະແມ່ນບັນດາຕະຫຼາດທີ່ນອນຢູ່ໃນແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ລາວ-ຫວຽດນາມ ຮອດປີ 2020.

4. ສະເໜີໃຫ້ບັນດາແຂວງຊາຍແດນ ລາວ-ຫວຽດນາມ ທີ່ຕິດຈອດກັນນັ້ນ ໃຫ້ສົມທົບກັນນຳພາພາກທຸລະກິດຢູ່ເຂດຊາຍແດນສອງປະເທດເຂົ້າໄປຄົ້ນຄວ້າປຶກສາຫາລື ແລະ ໄປເບິ່ງສິນຄ້າຕົວຈິງຂອງສອງຝ່າຍ ວ່າມີຊະນິດໃດສາມາດຊື້ຂາຍນຳກັນໄດ້ ຫຼື ສາມາດຮ່ວມມືກັນຜະລິດເປັນສິນຄ້າເພື່ອສົ່ງອອກ ກໍໃຫ້ເຊັນຮ່ວມມືນຳກັນໂລດ ແລະ ພ້ອມກັນຊອກທຸກວິທີທາງສືບຕໍ່ຄົ້ນຄວ້າສ້າງ ແລະ ເປັນເອກະພາບ ກ່ຽວກັບ ບັນດາລະບຽບການຄຸ້ມຄອງໃນຂົງເຂດການຄ້າຊາຍແດນ ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ພາກທຸລະກິດ ແລະ ເພື່ອເປັນການຊຸກຍູ້ສົ່ງເສີມການເພີ່ມມູນຄ່າການຄ້າສອງຝ່າຍໃຫ້ໄດ້ຕາມຄາດໝາຍແຜນການທີ່ສອງລັດຖະບານວາງອອກ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
******

ແຂວງຜົ້ງສາລີ
ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 0792 /ອຄ.ຜລ
ຜົ້ງສາລີ, ວັນທີ 13 ສິງຫາ 2014

# ສະຫຼຸບການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມໃນ 05ປີ ແລະ 6 ເດືອນ ,ຕົ້ນປີ 2014 ທີ່ຜ່ານມາ( ນັບແຕ່ປີ 2009 – 6 ເດືອນຕົ້ນປີ 2014 ) ແລະ ແຜນການໃນ 05 ປີຕໍ່ໜ້າ

- ອີງຕາມ ແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2114/ຫອຄ.ກຂອ.ຊດ ລົງວັນທີ 31 ກໍລະກົດ 2014.
- ອີງຕາມ ບົດບັນທຶກກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມ ຄັ້ງທີ 8 ຄັ້ງວັນທີ 18 ຕຸລາ ປີ 2012, ທີ່ແຂວງເຊກອງ.
- ອີງຕາມ ການຈັດຕັ້ງປະຕິບັດວຽກງານການນຳເຂົ້າ ແລະ ສົ່ງອອກ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງຜົ້ງສາລີ ໃນໄລຍະ 05 ປີ ແລະ 6 ເດືອນຜ່ານມາ.

I. ສະພາບການພັດທະນາວຽກງານການຄ້າຊາຍແດນຂອງແຂວງ.

1. ສະພາບໂດຍລວມຂອງແຂວງ.

ແຂວງຜົ້ງສາລີ ເປັນແຂວງພູດອຍ ຕັ້ງຢູ່ເໜືອສຸດຂອງປະເທດລາວ ມີເນື້ອທີ່ທັງໝົດ 16,270ກມ$^2$ ທົ່ວແຂວງປະກອບມີ 7 ຕົວເມືອງເມືອງ ແລະ ມີຊາຍແດນຕິດຈອດກັບສອງປະເທດເພື່ອນບ້ານຄື: ທິດຕາເວັນອອກຕິດກັບ ສສ ຫວຽດນາມ ມີຄວາມຍາວ 320 ກມ ແລະ ທິດຕາເວັນຕົກສຽງເໜືອຕິດກັບ ສປ ຈີນ ມີຄວາມຍາວ 330ກມ. ໃນນັ້ນ, ມີດ່ານສາກົນທີ່ຕິດກັບແຂວງດຽນບຽນ ສສ ຫວຽດນາມ 1 ແຫ່ງ ( ດ່ານປາງຫົກ )ແລະ ດ່ານປະເພນີ 1 ດ່ານຄືດ່ານຊີປາພິນ.

ປະຈຸບັນແຂວງຜົ້ງສາລີ ມີນັກທຸລະກິດແຂວງດຽນບຽນ ທີ່ເຂົ້າມາລົງທຶນໃນຂະແໜງການລົງທຶນມີ 01 ຫົວໜ່ວຍ ແລະ ຂະແໜງການບໍລິການ 74 ຫົວໜ່ວຍ.

- ໃນທຸກໆ 2 ປີ ໄດ້ມີການພົບປະແລກປ່ຽນບົດຮຽນທາງດ້ານວິຊາການ ເຊິ່ງໄດ້ພັດປ່ຽນກັນເປັນເຈົ້າພາບລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງຜົ້ງສາລີ ແລະ ແຂວງດຽນບຽນ ສສ ຫວຽດນາມ.

2. ການເຄື່ອນໄຫວວຽກງານການຄ້າຊາຍແດນ

ຜ່ານການຈັດຕັ້ງປະຕິວຽກງານການຄ້າຊາຍແດນ ຂອງພະແນກອຸດສາຫະກຳ ແລະ ການຄ້າ ໃນໄລຍະ 05 ປີ ແລະ 6 ເດືອນຕົ້ນປີ 2014. ໂດຍສະເພາະແມ່ນການພົວພັນຈໍລະຈອນສິນຄ້າ ກັບແຂວງດຽນບຽນ ສສ ຫວຽດນາມ, ຜ່ານມາມີການຕິດຕາມ ແລ ຄຸ້ມຄອງການນຳເຂົ້າ - ສົ່ງອອກສິນຄ້າ ໂດຍສະເພາະແມ່ນການສົ່ງອອກປະເພດສິນຄ້າກະສິກຳ ແລະ ເຄື່ອງປ່າຂອງດົງຈຳນວນໜຶ່ງ, ທີ່ສ້າງ

ລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າຕາມແລວຊາຍແດນຫຼາຍສົມຄວນ ແລະ ຈຳກັດການນຳເຂົ້າປະເພດສິນຄ້າທີ່ບໍ່ຈຳເປັນໂດຍສະເພາະແມ່ນສິນຄ້າທີ່ນອນຢູ່ໃນບັນຊີຫ້າມນຳເຂົ້າຂອງລັດຖະບານ.

3. ວຽກງານການນຳເຂົ້າ ແລະ ສົ່ງອອກ

ໃນໄລຍະຜ່ານມາ ພະແນກອຸດສາຫະກຳ ແລະ ການຄ້າກໍໄດ້ເອົາໃຈໃສ່ຊຸກຍູ້ບັນດາຫົວໜ່ວຍທຸລະກິດ ແລະ ປະຊາຊົນຕາມແລວຊາຍແດນໃຫ້ມີການແລກປ່ຽນ ແລະ ສົ່ງອອກສິນຄ້າຢ່າງເປັນຂະບວນຟົດຟື້ນ ໂດຍສະເພາະການສົ່ງອອກສິນຄ້າພືດກະສິກຳ, ເຄື່ອງປ່າຂອງດົງ ແລະ ອື່ນໆ ຊຶ່ງສະແດງອອກມູນຄ່າການນຳເຂົ້າ ແລະ ສົ່ງອອກຂອງແຕ່ລະປີ ໃນຕາຕະລາງລຸ່ມນີ້:

( ຫົວໜ່ວຍໂດລາ ອັດຕາແລກປ່ຽນ 8000 ກີບ/$)

| ລ/ດ | ປີ 2009 | ປີ 2010 | ປີ 2011 | ປີ 2012 | ປີ 2013 | 6 ເດືອນ ສົກປີ 2014 |
|---|---|---|---|---|---|---|
| ມູນຄ່າລວມ | 821,300 | 1,051,419 | 1,829,056 | 1,543,869 | 2,181,598 | 905,045 |
| -ນຳເຂົ້າ | 628,744 | 815,057 | 1,570,851 | 1,163,477 | 1,594,275 | 640,028 |
| -ສົ່ງອອກ | 192,556 | 236,362 | 258,205 | 380,392 | 587,323 | 265,017 |

## II. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານການຄ້າຊາຍແດນ.

❖ ,ຂໍ້ສະດວກ

- ໃນທຸກໆປີ ທັງສອງແຂວງໄດ້ແຕ່ງຄະນະຜູ້ແທນຂັ້ນສູງ ແລະ ຜູ້ແທນຂັ້ນຕ່າງໆພົບປະແລກປ່ຽນເຊິ່ງກັນ ແລະ ກັນ ໂດຍພັດປ່ຽນກັນເປັນເຈົ້າພາບ.
- ປະຊາຊົນຕາມແລວຊາຍແດນ ຂອງບັນດາເມືອງທີ່ຕິດຈອດກັບຊາຍແດນໄດ້ມີການແລກປ່ຽນຊື້ - ຂາຍສິນຄ້າຢ່າງຟົດຟື້ນ ແລະ ມີປະລິມານເພີ່ມຂຶ້ນ..
- ພາຍຫຼັງເສັ້ນທາງ 2E ເປີດນຳໃຊ້ຢ່າງເປັນທາງການ ເຮັດໃຫ້ປະຊາຊົນບັນດາເຜົ່າ ແລະ ນັກທຸລະກິດ ສສ ຫວຽດນາມທີ່ເຂົ້າມາດຳເນີນທຸລະກິດດ້ານການຄ້າ, ການບໍລິການນັບມື້ນັບເພີ່ມຂຶ້ນ ແລະ ການຄົມມະນາຄົມຂົນສົ່ງໂດຍສານ ແລະ ສິນຄ້າກໍ່ເດີນແລ່ນສະດວກ.

❖ ຂໍ້ຫຍຸ້ງຍາກ

- ນັກທຸລະກິດ ສສ ຫວຽດນາມທີ່ເຂົ້າມາລົງທຶນດ້ານການປູກພືດກະສິກຳ ແລະ ພືດອຸດສາຫະກຳເພື່ອສົ່ງອອກແມ່ນຍັງບໍ່ທັນມີ.
- ປະຊາຊົນຈຳນວນໜຶ່ງຍັງມີການລັກລອບຄ້າຂາຍຕາມແລວຊາຍແດນແບບຜິດກົດໝາຍ ໂດຍອາໃສ່ທາງທ່ຽວຂອງພໍ່ແມ່ປະຊາຊົນເປັນທາງຜ່ານ.
- ການສ້າງຕະຫຼາດນັດຊາຍແດນທີ່ມີທິດທາງພົວພັນຮ່ວມມື ແຕ່ຍັງບໍ່ສາມາດຈັດຕັ້ງປະຕິບັດ, ດັ່ງນັ້ນ ຈຶ່ງເຮັດໃຫ້ການແລກປ່ຽນຊື້ - ຂາຍສິນຄ້າບໍ່ທັນຂະຫຍາຍຕົວເທົ່າທີ່ຄວນ.

## III. ທິດທາງ ແລະ ແຜນການໃນຕໍ່ໜ້າ

- ທັງສອງຝ່າຍສືບຕໍ່ອໍານວຍຄວາມສະດວກໃຫ້ແກ່ຫົວໜ່ວຍທຸລະກິດຂອງສອງຝ່າຍ ແລະ ແລກປ່ຽນສິນຄ້າຊື້-ຂາຍນໍາກັນນັບມື້ນັບຫຼາຍຂຶ້ນ.
- ສືບຕໍ່ພັດທະນາວຽກງານການຄ້າຊາຍແດນ, ການຄ້າຜ່ານແດນ ໃນການຊື້- ຂາຍ ຢ່າງເປັນປົກກະຕິ, ເຮັດໃຫ້ການນໍາເຂົ້າ ແລະ ສົ່ງອອກມີຄວາມສະດວກ, ວ່ອງໄວ ແລະ ຮັດກຸມຖືກຕ້ອງຕາມກົດໝາຍ.
- ຊຸກຍູ້ໃຫ້ບັນດາຫົວໜ່ວຍທຸລະກິດແຂວງດຽນບຽນ ເຂົ້າມາລົງທຶນດ້ານອຸດສາຫະກໍາ ແລະ ປຸງແຕ່ງ, ປູກພືດກະສິກໍາ ແລະ ຕົ້ນໄມ້ອຸດສາຫະກໍາ ແລະ ອື່ນໆຢູ່ແຂວງຜົ້ງສາລີ.
- ທັງສອງຝ່າຍສືບຕໍ່ພ້ອມກັນຕ້ານ ແລະ ສະກັດກັ້ນການຄ້າຂາຍທີ່ຜິດກົດໝາຍ ເປັນຕົ້ນແມ່ນການສົ່ງອອກສິນຄ້າຕາມແລວຊາຍແດນ ລາວ - ຫວຽດນາມ.
- ສືບຕໍ່ຈັດຕັ້ງປະຕິບັດຮ່ວມມືແລກປ່ຽນບົດຮຽນວຽກງານເສດຖະກິດສັງຄົມ ແລະ ດ້ານວິຊາການຂອງສອງແຂວງ.

❖ ຂໍ້ສະເໜີ

- ສະເໜີໃຫ້ ສສ ຫວຽດນາມ ປຸກລະດົມ, ຊຸກຍູ້ນັກທຸລະກິດຫວຽດນາມ ເພື່ອເຂົ້າມາລົງທຶນຢູ່ແຂວງຜົ້ງສາລີເປັນຕົ້ນແມ່ນທາງດ້ານການຄ້າ, ການທ່ອງທ່ຽວ, ການບໍລິການ ແລະ ອື່ນໆ ໃຫ້ນັບມື້ນັບຫຼາຍຂຶ້ນ.
- ສະເໜີໃຫ້ເຈົ້າໜ້າທີ່ປະຈໍາຢູ່ຕາມຊາຍແດນຂອງສອງປະເທດໃຫ້ຄວາມສະດວກ ແລະ ສົ່ງເສີມໃຫ້ປະຊາຊົນສອງປະເທດ ທີ່ຢູ່ລຽບຕາມຊາຍແດນມີການແລກປ່ຽນຊື້ - ຂາຍເຊິ່ງກັນ ແລະ ກັນໃຫ້ນັບມື້ນັບຫຼາຍຂຶ້ນ.
- ສະເໜີໃຫ້ລັດຖະບານ ສະໜອງງົບປະມານສ້າງຕະຫຼາດຊາຍແດນຢູ່ດ່ານປາງຮົກ, ເມືອງໃໝ່, ແຂວງຜົ້ງສາລີ 1 ແຫ່ງ.

**ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ** **ຜູ້ສັງລວມ**

ບຸນທັນ ສົມດີ ຄໍາໄລ ຄູນສະຫ່ງາ

ຂະແໜງນໍາເຂົ້າ ແລະ ສົ່ງອອກ
ຕິດຕໍ່: 020 55889695, email: khamlai2007@yahoo.com
030 5159017

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

1334 .

ແຂວງ ຫຼວງພະບາງ

ພະແນກ ອຸດສາຫະກຳ ແລະ ການຄ້າ

ເລກທີ່......./ພອຄ.ຫຼບ.ຂຂອ

ຫຼວງພະບາງ,ວັນທີ່...18 AUG 2014

**ສະຫຼຸບການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມການຮ່ວມມືພັດທະນາ ການຄ້າຊາຍແດນ ລາວ-ຫວຽດນາມ 5 ປີຜ່ານມາ(ແຕ່ປີ 2009-9 ເດືອນສົກປີ 2014)**

- ອີງຕາມ ໜັງສືຂອງຫ້ອງການ,ກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ່ 2114/ຫອຄ.ກຂອ.ຊດ, ລົງວັນທີ່ 30/07/2014

ພະແນກ ອຸດສາຫະກຳ ແລະ ການຄ້າຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ຜົນການຈັດຕັ້ງ ແລະ ຜັນຂະຫຍາຍ ເນື້ອໃນກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໃນ 5 ປີ ຜ່ານມາ ດັ່ງລຸ່ມນີ້:

**1. ສະພາບການຈັດຕັ້ງປະຕິບັດ**

ຜ່ານໄລຍະ 5 ປີ ການຈັດຕັ້ງ ແລະ ຜັນຂະຫຍາຍເນື້ອໃນຈິດໃຈບົດບັນທຶກກອງປະຊຸມການຮ່ວມມືພັດທະນາວຽກງານການຄ້າຊາຍແດນ ຂອງສອງລັດຖະບານ ກໍ່ຄືກະຊວງ ອຸດສາຫະກຳ ແລະ ການຄ້າ ລາວ ແລະ ຫວຽດນາມ, ທາງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແຂວງຫຼວງພະບາງ ແລະ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ດຽນບຽນກໍ່ໄດ້ຈັດຕັ້ງຜັນຂະຫຍາຍເປັນເນື້ອໃນຍ່ອຍໂດຍສ້າງເປັນບົດບັນທຶກຮ່ວມມືລະຫວ່າງສອງຝ່າຍເຊິ່ງໄດ້ເຊັນກັນ 2 ຄັ້ງ ເຊິ່ງໄດ້ເລີ່ມມາແຕ່ປີ 2010 ທີ່ແຂວງຫຼວງພະບາງເປັນຄັ້ງທີ່ I ແລະ ແຂວງ ດຽນບຽນເປັນຄັ້ງທີ່ II ເນື້ອໃນໄດ້ເອົາໃຈໃສ່ ວຽກງານຊຸກຍູ້ສົ່ງເສີມດ້ານການຄ້າ-ການລົງທຶນ ແລະ ການພັດທະນາການຄ້າຊາຍແດນ,ຕະຫຼາດຊາຍແດນ.

ອຳນາດການປົກຄອງທັງສອງແຂວງກໍ່ໄດ້ເອົາໃຈໃສ່ໃນຂົງເຂດວຽກງານການຄ້າ, ການຄ້າຊາຍແດນ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງຫຼວງພະບາງ ໄດ້ປະສານສົມທົບກັບ ຫ້ອງການຕົວແທນ ພະແນກ ອຸດສາຫະກຳ ແລະ ການຄ້າ, ທ່ອງທ່ຽວແຂວງ ດຽນບຽນ ປະຈຳຫຼວງພະບາງ ໂດຍຜັນຂະຫຍາຍເນື້ອໃນບົດບັນທຶກ ກອງປະຊຸມຂອງສອງລັດຖະບານໄດ້ເຊັນກັນແຕ່ລະຄັ້ງ ແລະ ເພີ່ມທະວີພັດທະນາວຽກງານການຄ້າ, ການຄ້າຊາຍແດນ, ແລກປ່ຽນຂໍ້ມູນເຊິ່ງກັນແລະກັນດ້ານນະໂຍບາຍພາສີ ສິນຄ້າສອງຝ່າຍ. ຊຸກຍູ້ໃຫ້ນັກທຸລະກິດທັງສອງຝ່າຍໃຫ້ມີການເຂົ້າມາລົງທຶນ ຢູ່ບັນດາເມືອງທີ່ມີຊາຍແດນຕິດຈອດກັນ, ສ້າງເງື່ອນໄຂສະດວກໃຫ້ປະຊາຊົນສອງຝ່າຍໄດ້ໄປມາ ຊື້-ຂາຍ ຜ່ານດ່ານລະດັບຊາດດ່ານ 30 ນາຊອນ.

**2. ການຮ່ວມມືດ້ານການຄ້າ,ການຄ້າຊາຍແດນ ແລະ ຕະຫຼາດຊາຍແດນ**

**ກ. ການພົວພັນການຄ້າ**

ທັງສອງຝ່າຍຕັ້ງໜ້າລຸນໃສ່ການພັດທະນາເສດຖະກິດ,ການຄ້າ-ການລົງທຶນ ແລະ ການຊອກຮູ້ດ້ານການຕະຫຼາດສິນຄ້າເຊິ່ງກັນ ແລະ ກັນ, ການສົ່ງອອກສິນຄ້າລະຫວ່າງ ຫຼວງພະບາງ ກັບ ສສ ຫວຽດນາມ ນັບມື້ນັບເພີ່ມຂຶ້ນໂດຍຜ່ານຫຼາຍດ່ານເຊັ່ນ: ດ່ານສາກົນປາງຮົກ ແຂວງ ຜົ້ງສາລີ, ດ່ານລະດັບຊາດ ດ່ານ 30 ນາຊອນ ແຂວງ ຫຼວງພະບາງ, ດ່ານສາກົນນ້ຳກັນ ແຂວງ ຊຽງຂວາງ ແລະ ດ່ານສາກົນນ້ຳພາວ ແຂວງ ບໍລິຄຳໄຊ.

ທາງພະແນກໄດ້ປະສານຮ່ວມມືກັບກົງສຸນຫວຽດນາມປະຈຳຫຼວງພະບາງ ເປີດກອງປະຊຸມພົບປະທຸລະກິດຈາກ 8 ແຂວງ ພາກເໜືອຂອງລາວກັບທຸລະກິດສະມະຄົມຍິງອ່າໄນຍ 30 ຫົວໜ່ວຍ ແລະ ທຸລະກິດຫວຽດທີ່ດຳເນີນທຸລະກິດຢູ່ແຂວງຫຼວງພະບາງເຂົ້າຮ່ວມພົບປະຫາລືເພື່ອສ້າງຕັ້ງສາຂາຕົວແທນຈຳໜ່າຍສິນຄ້າຢູ່ພາກເໜືອຂອງລາວ

ການຄ້າສອງຝ່າຍລະຫວ່າງ ແຂວງ ຫຼວງພະບາງ ກັບບັນດາແຂວງຂອງ ສສ ຫວຽດນາມມີການຂະຫຍາຍຕົວດີຂຶ້ນທັງສອງຝ່າຍ ແລະ ໄດ້ມີການແລກປ່ຽນບັນດາສິນຄ້າທີ່ເປັນທ່າແຮງໃນການຜະລິດຂອງປະຊາຊົນພາຍໃນແຂວງເຊັ່ນ: ໄມ້ສັກທ່ອນ, ເຂົ້າເປືອກໜຽວ, ໄມ້ປະກອບໂຕະ-ຕັ່ງ-ຕູ້ ແລະ ການນຳເຂົ້າປະເພດສິນຄ້າທີ່ຈຳເປັນ: ເຄື່ອງຈັກ, ເຄື່ອງກໍ່ສ້າງອື່ນໆ, ເຄື່ອງຮັບໃຊ້ການຜະລິດ, ເຫຼັກເສັ້ນ, ໃບຢາສູບ, ນ້ຳມັນກະຊອນ. ເຊິ່ງມັນສະແດງໃຫ້ເຫັນ ໃນຕາຕະລາງມູນຄ່າການຄ້າສອງຝ່າຍນັບແຕ່ປີ 2009 ເຖິງ 9 ເດືອນ ສົກປີ 2014.

**ຕາຕະລາງສະຖິຕິສອງຝ່າຍແຕ່ 2009- 9 ເດືອນ 2014**

ຫົວໜ່ວຍ: 1.000 ກີບ

| ສົກປີ | ມູນຄ່າການສົ່ງອອກ | ມູນຄ່າການນຳເຂົ້າ | ຍອດມູນຄ່າລວມ | ອັດຕາເພີ່ມທຽບຕໍ່ປີ% | ປະຕິບັດໄດ້ |
|---|---|---|---|---|---|
| 2008-2009 | 4.014.514 | 2.128.703 | 6.143.217 | 14,17 | 7,05 |
| 2009-2010 | 5.450.760 | 985.546 | 6.436.306 | 13,53 | 7,39 |
| 2010-2011 | 18.509,222 | 465,896 | 18.975.118 | 4,59 | 21,79 |
| 2011-2012 | 9.218.836 | 4.590.250 | 13.809.086 | 6,31 | 15,86 |
| 2012-2013 | 8.739.774 | 18.298.313 | 27.038.087 | 3,22 | 31,05 |
| 9 ເດືອນ 2013-14 | 9.106.818 | 5.570.489 | 14.677.307 | 5,93 | 16,86 |

ສຳລັບບຸລິມະສິດດ້ານອັດຕາພາສີການນຳເຂົ້າ ແລະ ສົ່ງອອກ ລະຫວ່າງ ລາວ-ຫວຽດນາມ ມີສິນຄ້າ 32 ລາຍການທີ່ໄດ້ລຸດອັດຕາພາສີ 50 % ພາຍໃຕ້ກອບການຄ້າເສລີສອງຝ່າຍ (AFTA/ATIGA) ແລະ ອັດຕາພາສີ 0 % ມີ 155 ລາຍການ. ທັງສອງຝ່າຍລະຫວ່າງສອງແຂວງ ຫຼວງພະບາງ-ດຽນບຽນ ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດເປັນທາງການເທື່ອ ນີ້ກໍ່ຍ້ອນເງື່ອນໄຂຄວາມຕ້ອງການຂອງພາກທຸລະກິດ ແລະ ສະພາບຄວາມພ້ອມຂອງດ່ານ ນາຊອນ-ຫວ້ຍປວກ. ດ່ານຝ່າຍລາວ ດ່ານ 30 ນາຊອນ ແຂວງ ຫຼວງພະບາງຍັງບໍ່ທັນມີການຈັດຕັ້ງຄົບຊຸດ ປະຈຸບັນມີ 3 ໜ່ວຍງານຄື: ເຈົ້າໜ້າທີ່ພາສີເຂດ II, ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າເມືອງ ແລະ ເຈົ້າໜ້າທີ່ດ້ານສຸຂະນາໄມພືດ-ສັດຈາກກະສິກຳ-ປ່າໄມ້.

**ຂ. ການຄ້າຊາຍແດນ**

ທັງສອງຝ່າຍລະຫວ່າງ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ຫຼວງພະບາງ ແລະ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ດຽນບຽນ ໄດ້ເພີ່ມທະວີເຄື່ອນໄຫວການຄ້າຊາຍແດນ, ໂດຍສຸມໃສ່ຊຸກຍູ້ສົ່ງເສີມການສົ່ງອອກ ແລະ ນຳເຂົ້າ ສິນຄ້າທີ່ທ້ອງຖິ່ນທີ່ຢູ່ລຽບຕາມຊາຍແດນຂອງຕົນ ທີ່ມີທ່າແຮງ ແລະ ສາມາດຜະລິດໄດ້ເຊັ່ນ: ສິນຄ້າເຄື່ອງປ່າຂອງດົງ ແລະ ກະສິກຳ, ອຸປະກອນຮັບໃຊ້ ແລະ ຊີມັງ._ພິເສດທັງສອງຝ່າຍກໍ່ໄດ້ໃຫ້ບໍລິມະສິດກັນໃນການອະນຸຍາດນຳເຂົ້າສິນຄ້າເຊິ່ງກັນ ແລະ ກັນເພື່ອມາຮັບໃຊ້ເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງຢູ່ບັນດາເມືອງທີ່ມີຊາຍແດນຕິດຈອດກັນເຊິ່ງມັນສະແດງອອກຄື: ການນຳເຂົ້າສິນຄ້າຈາກແຂວງດຽນບຽນແມ່ນ ເຫຼັກເສັ້ນຈຳນວນ 30 ໂຕນ ເປັນ*ມູນຄ່າ 135.209.100 ກີບ* ແລະ ສິນຄ້າສົ່ງອອກຈາກແຂວງ ຫຼວງພະບາງໄປແຂວງ ດຽນບຽນແມ່ນ ເຄື່ອງປ່າຂອງດົງເປັນຈຳນວນ 32.400 ກິໂລ *ມູນຄ່າ 64.800.000 ກີບ* ( ຕາມຂໍ້ມູນບົດສະຫຼຸບຂອງພາສີຊາຍແດນ ປະຈຳດ່ານ 30 ນາຊອນ ສົກປີ 1012-2013 )

**ຄ. ຕະຫຼາດຊາຍແດນ**

ເພື່ອເປັນການສົ່ງເສີມ ແລະ ຊອກຕະຫຼາດສິນຄ້າ ສອງຝ່າຍ ລະຫວ່າງພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ຫຼວງພະບາງ ແລະ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ດຽນບຽນ ໄດ້ສົມທົບກັນໃນການຈັດງານ ຕະຫຼາດນັດຊາຍແດນລະຫວ່າງສອງແຂວງ, ເຊິ່ງແມ່ນຝ່າຍ ຫຼວງພະບາງເປັນເຈົ້າພາບໃນການຈັດງານຕະຫຼາດນັດຊາຍ ແດນທີ່ບ້ານ ວັງຊຽງ, ເມືອງ ໂພນທອງ ຄັ້ງທີ່ I ລະຫວ່າງວັນທີ່ 10-15/03/2013 ມີຫ້ອງວາງສະແດງ ແລະ ຂາຍຈຳ ນວນ 30 ຫ້ອງ ເປັນມູນຄ່າລວມປະມານ 400.000.000 ກີບ. ໃນນັ້ນ ຫ້ອງຂາຍ ຂອງທຸລະກິດພາຍໃນແຂວງມີ 25 ຫ້ອງ, ປະເພດສິນຄ້າ ເສື້ອຜ້າຂອງລາວ, ແຜ່ນແພ, ເຄື່ອງອຸປະໂພກບໍລິໂພກ ແລະ ອື່ນໆ ເຊິ່ງເປັນມູນຄ່າປະມານ 300.000.000 ກີບ, ສ່ວນທຸລະກິດຈາກແຂວງ ດຽນບຽນມີ 5 ຫ້ອງ. ປະເພດສິນຄ້າມີ: ອຸປະກອນເຄື່ອງໃຊ້ໄຟຟ້າ, ເຄື່ອງອຸປະໂພກບໍລິໂພກ,ເຄື່ອງໃຊ້ຄົວເຮືອນ,ຊີມັງ ເປັນມູນຄ່າປະມານ 100.000.000 ກີບ.

ນອກນັ້ນທາງພະແນກໄດ້ນຳພານັກທຸລະກິດພາຍໃນແຂວງເຂົ້າຮ່ວມງານພົບປະແລກປ່ຽນສິນຄ້າ ທີ່ສຳຄັນຕ່າງໆ ຢູ່ບັນດາ ແຂວງພາກເໜືອຂອງຫວຽດນາມເຊັ່ນ: ຮ່ວມງານຕະຫຼາດນັດແຂວງເຊີນລາ 2 ຄັ້ງ, ດຽນບຽນ 2 ຄັ້ງ ໂອກາດ ສະເຫຼີມ ສະຫຼອງວັນເຊັນສົນທິສັນຍາ ລາວ-ຫວຽດນາມ ແລະ ວັນໄຊຊະນະດຽນດຽນຟູ

**3. ຂໍ້ສະດວກ ແລະ ຫຍຸ້ງຍາກ**

**ກ. ຂໍ້ສະດວກ**

- ການນຳທັງສອງແຂວງກໍ່ຄືສອງລັດຖະບານໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນການຮ່ວມມືພັດທະນາດ້ານການ ຄ້າຊາຍແດນ, ຕະຫຼາດຊາຍແດນ ແລະ ພະແນກການກ່ຽວຂ້ອງກໍ່ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານ ດັ່ງກ່າວເປັນຢ່າງດີ.
- ການປະສານງານລະຫວ່າງສອງພະແນກ, ສະຖານກົງສຸນໃຫ່ຍ ສສ ຫວຽດນາມ ກໍ່ມີຄວາມສະດວກຫຼາຍໃນການ ປະສານງານກັນໂດຍມີຫ້ອງການຕົວແທນ ອຸດສາຫະກຳ ແລະ ການຄ້າ-ທ່ອງທ່ຽວ ປະຈຳຢູ່ແຂວງໃຜລາວເຊິ່ງເຮັດໜ້າທີ່ ເປັນເສນາທິການໃຫ້ແກ່ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ຫຼວງພະບາງ ແລະ ດຽນບຽນ
- ບັນດາພາກທຸລະກິດທັງສອງຝ່າຍໃຫ້ຄວາມສຳຄັນໃນເຂົ້າຮ່ວມພົບປະແລກປ່ຽນສິນຄ້າ ແລະ ຂໍ້ມູນ ການຜະລິດ ເຊິ່ງກັນແລະກັນຢູ່ໃນງານ. ການຈັດງານຕະຫຼາດນັດຊາຍແດນແມ່ນບາດກ້າວອັນດີໃນການກະຕຸກຊຸກຍູ້ ແລະ ສົ່ງເສີມ ການຜະລິດສິນຄ້າຂອງປະຊາຊົນ ແລະ ທຸລະກິດສອງຝ່າຍ. ເປັນຜົນດີໃຫ້ແກ່ປະຊາຊົນມີລາຍຮັບເພີ່ມຂຶ້ນຖືກຕາມ ແນວທາງນະໂຍບາຍຂອງພັກວາງອອກ.

**ຂ. ຂໍ້ຫຍຸ້ງຍາກ**

- ລະບົບເສັ້ນທາງຄົມມະນາຄົມລະຫວ່າງຫຼວງພະບາງ-ດຽນບຽນເປ່ເພຫຼາຍ, ນຳໃຊ້ໄດ້ແຕ່ລະດູແລ້ງ ສ່ວນລະດູຝົນ ແມ່ນໃຊ້ບໍ່ໄດ້ ສ້າງຄວາມຫຍຸ້ງຍາກໃນການຄົມມະນາຄົມ ແລະ ຂົນສົ່ງສິນຄ້າຜ່ານດ່ານ, ດ້ານພື້ນຖານໂຄງລ່າງຢູ່ບໍລິເວນ ຊາຍແດນຍັງບໍ່ພ້ອມເຊັ່ນ: ລະບົບໄຟຟ້າຍັງບໍ່ປົກກະຕິ, ລະບົບນ້ຳສະອາດຍັງບໍ່ທັນມີ, ລະບົບສື່ສານກໍ່ບໍ່ປົກະຕິ, ລະບົບສື່ ສານມີພຽງລາວໂທລະຄົມເຄືອຄ່າຍດຽວ.
- ສະຖານທີ່ຈະຕັ້ງເປັນ ຕະຫຼາດຊາຍແດນ ຢູ່ເບື້ອງລາວຍັງມີຄວາມຫຍຸ້ງຍາກ ດ້ານເສັ້ນທາງຄົມມະນາຄົມເຂົ້າໄປຫາ ສະຖານທີ່ຈະຕັ້ງເປັນຕະຫຼາດ, ລະບົບໄຟຟ້າຍັງບໍ່ມີ ການຜະລິດຂອງປະຊາຊົນໃນບໍລິເວນນັ້ນຍັງບໍ່ທັນຂະຫຍາຍຕົວ ການຜະລິດເປັນສິນຄ້າຍັງແບບອີງໃສ່ທຳມະຊາດ.

**4. ທິດທາງແຜນການ**

- ສືບຕໍ່ຜັນຂະຫຍາຍເນື້ອໃນກອງປະຊຸມຂອງສອງກະຊວງ ແລະ ບົດບັນທຶກຮ່ວມມືລະຫວ່າງສອງພະແນກໃນ ການຮ່ວມມືພັດທະນາເຂດການຄ້າຊາຍແດນ, ຕະຫຼາດຊາຍແດນໃຫ້ໄດ້ຕາມຄາດໝາຍ.

- ກະກຽມການເຂົ້າຮ່ວມງານຕະຫຼາດນັດຊາຍແດນ ຫ້ວຍປວກ-ນາຊອນ ເຊິ່ງແມ່ນຝ່າຍດຽນບຽນຈະເປັນເຈົ້າພາບໃນການຈັດຕັ້ງ ຕາມບົດບັນທຶກສັນຍາຮ່ວມມືສອງພະແນກ.

- ສົມທົບກັບຫ້ອງການຕົວແທນ ພະແນກ ອຸດສາຫະກຳ ແລະ ການຄ້າແຂວງດຽນບຽນ ລົງເກັບກຳຂໍ້ມູນຕ່າງໆທີ່ຈຳເປັນຢູ່ເຂດຊາຍແດນເພື່ອລາຍງານຂັ້ນເທິງກ່ຽວກັບສະຖານທີ່, ຄວາມພ້ອມຂອງຝ່າຍໃດ ແລະ ສະຖານທີ່ຝ່າຍໃດເໝາະສົມທີ່ຈະສ້າງເປັນຕະຫຼາດນັດຊາຍແດນ.

- ຈັດຕັ້ງເຜີຍແຜ່ເນື້ອໃນ ແລະ ຜົນໄດ້ຮັບຂອງບົດບັນທຶກສັນຍາຮ່ວມມືພັດທະນາຕະຫຼາດຊາຍແດນໃຫ້ແກ່ປະຊາຊົນ ພາກລັດ ແລະ ເອກະຊົນຊາບ. ພ້ອມທັງປະສານສົມທົບກັບພາກສ່ວນຂະແໜງການກ່ຽວຂ້ອງໃຫ້ຄວາມຮ່ວມມືໃຫ້ໄດ້ຮັບດີຢ່າງຂຶ້ນ.

**5. ຂໍ້ສະເໜີ**

- ສະເໜີຕໍ່ອຳນາດການປົກຄອງທ້ອງຖິ່ນ ແລະ ລັດຖະບານ ເລັ່ງປັບປຸງເສັ້ນທາງຄົມມະນາຄົມແຕ່ເມືອງງອຍເຖິງເທດສະບານເມືອງ ໂພນທອງ ແລະ ແຕ່ໂພນທອງຫາຊາຍແດນໃຫ້ມີຄຸນນະພາບດີສາມາດໃຊ້ໄດ້ທຸກລະດູ.

- ສະເໜີຕໍ່ພາກສ່ວນກ່ຽວຂ້ອງ ຂັ້ນສູນກາງປະສານສົມທົບກັບຂັ້ນທ້ອງຖິ່ນ ເລັ່ງປັບປຸງດ້ານພື້ນຖານໂຄງລ່າງຢູ່ບໍລິເວນຊາຍແດນເຊັ່ນ: ການແຈ້ງເຂົ້າອອກເມືອງຂອງປະຊາຊົນສອງຝ່າຍ, ການບໍລິການຕ່າງໆຢູ່ກັບດ່ານໃຫ້ມີຄວາມສະດວກດີຂຶ້ນເທື່ອລະກ້າວ.

- ສະເໜີຕໍ່ສອງລັດຖະບານຍົກລະດັບດ່ານຂຶ້ນເປັນດ່ານສາກົນ ເພື່ອສະດວກໃນການຂົນສົ່ງສິນຄ້າຜ່ານໄປປະເທດທີສາມ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນສອງແຂວງໄດ້ໄປມາສະດວກ ແລະ ທັງເປັນໂອກາດໃນການເຮັດໃຫ້ເຂດດັ່ງກ່າວມີການເຄື່ອນໄຫວຄ້າ-ຂາຍສິນຄ້າເພີ່ມຂຶ້ນ, ເຂດດັ່ງກ່າວກໍ່ຈະໄດ້ຮັບການພັດທະນາດ້ານພື້ນຖານໂຄງລ່າງ ແລະ ກາຍເປັນຕົວເມືອງນ້ອຍ ຫຼື ເຂດເສດຖະກິດໃນອານາຄົດ.

ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ

ຄຳພູຍ ພົມມະວົງ
Khamphouy PHOMMAVONG

ຂະແໜງ ການນຳເຂົ້າ-ສົ່ງອອກ

ນ.ທອງເພັງ ຜາສຸກ

ສະຫຼຸບລາຍງານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ
ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 502/ອຄ.ຫພ
ຊຳເໜືອ, ວັນທີ 14 ສິງຫາ 2014

# ບົດລາຍງານ

**ຮຽນ: ທ່ານ ຫົວໜ້າ ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.**
**ເລື່ອງ: ລາຍງານກ່ຽວກັບການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມ ການພັດທະນາການຄ້າຊາຍແດນລາວ - ຫວຽດນາມ ຄັ້ງທີ VIII ທີ່ ແຂວງເຊກອງ.**

- ອີງຕາມ ແຈ້ງການຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2114/ຫອຄ.ກຂອ.ຊດ, ລົງວັນທີ 31 ກໍລະກົດ 2014 ກ່ຽວກັບ ການສະຫລຸບການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໃນ 5 ປີ ຜ່ານມາ ( ນັບແຕ່ປີ 2009 ແລະ 06 ເດືອນຕົ້ນປີ 2014) ແລະ ແຜນການ 05 ປີຕໍ່ໜ້າ.
- ອີງຕາມ ການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມ ການພັດທະນາການຄ້າຊາຍແດນລາວ - ຫວຽດນາມ ຄັ້ງທີ VIII ໃນທ້າຍປີ 2012 ທີ່ ແຂວງເຊກອງ ໃນຂອບເຂດແຂວງຫົວພັນ ໄລຍະທີ່ຜ່ານມາ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງຫົວພັນ ຂໍຖືເປັນກຽດລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມຮ່ວມມືພັດທະນາການຄ້າຊາຍແດນລາວ-ຫວຽດນາມ ຄັ້ງວັນທີ 17-19 ຕຸລາ 2012 ແລະ ສັງລວມບັນດາແຜນການຮ່ວມມືໂຄງການຕ່າງໆທີ່ພົວພັນເຖິງວຽກງານການຄ້າຊາຍແດນ ລະຫວ່າງແຂວງຫົວພັນ ກັບແຂວງເງິນລາ, ແທັງຮວ່າ, ເງ້ອານ ຂອງ ສສ. ຫວຽດນາມ ດັ່ງນີ້:

## 1. ສະພາບລວມ

ແຂວງຫົວພັນເປັນແຂວງທີ່ມີດ່ານຊາຍແດນຕິດຈອດກັບ ສ ສ ຫວຽດນາມ ຫລາຍກວ່າແຂວງອື່ນໆ ເຊິ່ງມີດ່ານສາກົນ 1 ແຫ່ງ, ດ່ານແຫ່ງຊາດ 3 ແຫ່ງ ແລະ ດ່ານທ້ອງຖິ່ນ 9 ແຫ່ງ ເຊິ່ງໄດ້ເປັນເງື່ອນໄຂອັນດີໃຫ້ແກ່ການອໍານວຍຄວາມສະດວກໃນການແລກປ່ຽນຊື້ຂາຍສິນຄ້າ ລະຫວ່າງ ປະຊາຊົນສອງຟາກຊາຍແດນ ກໍ່ຄືນັກທຸລະກິດຂອງສອງປະເທດ ເວົ້າລວມ, ເວົ້າສະເພາະແມ່ນ ແຂວງຫົວພັນ ກັບ ແຂວງເງິນລາ, ແທັງຮວ່າ, ແລະ ເງ້ອານ.

ໃນໄລຍະຜ່ານມາ ເຫັນວ່າ ປະຊາຊົນ ແລະ ທຸລະກິດທັງສອງຝ່າຍໄດ້ມີການພົວພັນແລກປ່ຽນຊື້-ຂາຍນຳກັນເປັນປົກກະຕິ, ສ່ວນພາກລັດກໍ່ໄດ້ຊຸກຍູ້-ສົ່ງເສີມໃຫ້ທຸລະກິດຂອງ ສ ສ ຫວຽດນາມ (ໂດຍສະເພາະແຂວງ ເງິນລາ, ແທັງຮວ່າ, ເງ້ອານ) ເຂົ້າມາລົງທຶນຢູ່ແຂວງຫົວພັນນັບມື້ຫລາຍຂຶ້ນເລື້ອຍໆ, ການພົວພັນທາງດ້ານການຄ້າ - ການລົງທຶນດັ່ງກ່າວໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນລຽບຕາມສອງຟາກຊາຍແດນ ກໍ່ຄື ພາກທຸລະກິດຂອງສອງປະເທດ

2. ສະພາບການຈັດຕັ້ງປະຕິບັດວຽກງານຕາມບົດບັນທຶກກອງປະຊຸມຄັ້ງທີ *VIII* ທີ່ ແຂວງເຊກອງ.

1). ໄດ້ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດດ້ານການເອື້ອອຳນວຍຄວາມສະດວກທາງການຄ້າ ໂດຍສະເພາະແມ່ນການຄ້າຊາຍແດນ, ຕະຫລາດຊາຍແດນ ບົນພື້ນຖານຕາມເນື້ອໃນບົດບັນທຶກກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ VIII ທີ່ ແຂວງເຊກອງ ແລະ ຂໍ້ລິງຮ່າໂນ້ຍ 2007 ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ ຄົນ, ພາຫະນະຂົນສົ່ງສິນຄ້າ ນຳເຂົ້າ ແລະ ສົ່ງອອກ.

2). ໄດ້ຮ່ວມມືກັບບັນດາແຂວງທີ່ມີຊາຍແດນຕິດຈອດກັບແຂວງຫົວພັນພົບປະ ແລະ ແລກປ່ຽນບົດຮຽນທາງດ້ານການຄ້າຊາຍແດນ, ການຈັດງານຕະຫລາດນັດ ເພື່ອຊຸກຍູ້ການລົງທຶນ ແລະ ການແລກປ່ຽນ, ຊື້-ຂາຍນຳກັນຈຳນວນ 02 ຄັ້ງ, ນອກຈາກນີ້ກໍ່ໄດ້ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ນັກທຸລະກິດຂອງລາວເຂົ້າຮ່ວມງານວາງສະແດງ ແລະ ຂາຍສິນຄ້າ ຢູ່ ສ ສ ຫວຽດນາມ ໄດ້ຈຳນວນ 16 ຄັ້ງ, ມີຫົວໜ່ວຍທຸລະກິດເຂົ້າຮ່ວມ 75 ເທື່ອຫົວໜ່ວຍ ພ້ອມກັນນີ້ກໍ່ໄດ້ສົ່ງເສີມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ນັກທຸລະກິດຂອງບັນດາແຂວງທີ່ມີຊາຍແດນຕິດຈອດຂອງ ສສ ຫວຽດນາມ ເຂົ້າຮ່ວມງານວາງສະແດງ ແລະ ຂາຍສິນຄ້າ ຢູ່ ແຂວງຫົວພັນ ໄດ້ຈຳນວນ 3 ຄັ້ງ, ມີຫົວໜ່ວຍທຸລະກິດເຂົ້າຮ່ວມ 16 ຫົວໜ່ວຍ.

3). ໄດ້ໃຫ້ຄວາມຮ່ວມມືກັບກະຊວງອຸດສາຫະກຳ ແລະ ການຄ້າໃນການສະໜອງຂໍ້ມູນສຳລັບການສ້າງແຜນແມ່ບົດພັດທະນາຕາໜ່າງຕະຫລາດຊາຍແດນ ໃນຂອບເຂດຄວາມຮັບຜິດຊອບຂອງແຂວງຫົວພັນ.

4). ນຳສະເໜີເຈົ້າໜ້າທີ່ດ່ານທ້ອງຖິ່ນ, ແລະ ອອກແຈ້ງການໃຫ້ບາງເມືອງ ແລະ ກຸ່ມບ້ານຈຳນວນໜຶ່ງກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກຜົນຜະລິດກະສິກຳ (ສາລີ) ຂອງປະຊາຊົນໃນເຂດຊາຍແດນ ແລະ ບ້ານສາມສ້າງ ທັງນີ້ ກໍ່ເພື່ອເຮັດໃຫ້ປະຊາຊົນ ແລະ ຫົວໜ່ວຍທຸລະກິດຂະໜາດນ້ອຍໃນເຂດຊາຍແດນໄດ້ຮັບຄວາມສະດວກ ແລະ ໄດ້ມີລາຍຮັບຈາກການສົ່ງອອກສິນຄ້າຫລາຍຂຶ້ນ.

5). ສັງລວມບັນດາຂໍ້ຫຍຸ້ງຍາກຂອງການພົວພັນດ້ານການຄ້າ ໂດຍສະເພາະແມ່ນ ຂໍ້ຄົງຄ້າງທາງດ້ານການອຳນວຍຄວາມສະດວກຕໍ່ການຂົນສົ່ງສິນຄ້າຂອງຝ່າຍດ່ານຊາຍແດນຫວຽດນາມ ໃຫ້ພະແນກພົວພັນຕ່າງປະເທດຂອງແຂວງຫົວພັນໄດ້ຮັບຊາບນຳເພື່ອເປັນຂໍ້ມູນໃນການພົວພັນຮ່ວມມື ລະຫວ່າງກັນ.

6). ສຳເລັດການກຳນົດສະຖານທີ່ກໍ່ສ້າງຕະຫລາດຊາຍແດນນ້ຳໂສຍ-ນາແມວ ເພື່ອເປັນຂໍ້ມູນໃນການກໍ່ສ້າງ ແລະ ການຄຸ້ມຄອງໃນຕໍ່ໜ້າ.

3. ສັງລວມບັນດາຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານການຄ້າຊາຍແດນ.

3.1 ຂໍ້ສະດວກ

1). ມີບັນດາລະບຽບກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

2). ຍ້ອນໄດ້ຮັບການຊີ້ນຳຢ່າງໃກ້ຊິດຈາກກະຊວງອຸດສາຫະກຳ ແລະ ການຄ້າ ເວົ້າລວມ, ເວົ້າສະເພາະແມ່ນກົມການນຳເຂົ້າ ແລະ ສົ່ງອອກ.

3). ພະແນກອຸດສາຫະກຳ ແລະ ການຄ້າແຂວງຫົວພັນມີບຸກຄະລາກອນຈຳນວນໜຶ່ງທີ່ມີຄວາມຮູ້, ຄວາມສາມາດໃນການຊີ້ນຳ-ນຳພາ ແລະ ຈັດຕັ້ງປະຕິບັດວຽກງານ.

4). ຍ້ອນໄດ້ຮັບຄວາມຮ່ວມມືທີ່ດີສົມຄວນຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ.

3.2 ຂໍ້ຫຍຸ້ງຍາກ

1). ຢູ່ດ່ານສອງຟາກດ່ານຊາຍແດນຍັງບໍ່ທັນມີສາງພັກສິນຄ້າ ເຮັດໃຫ້ບໍ່ມີຄວາມສະດວກຕໍ່ເຈົ້າໜ້າທີ່ດ່ານໃນການກວດກາສິນຄ້ານຳເຂົ້າ ແລະ ສົ່ງອອກ.

2). ຢູ່ດ່ານດ່ານຊາຍແດນເບື້ອງລາວຍັງບໍ່ທັນມີຕະຫລາດຊາຍແດນ ເຊິ່ງເຮັດໃຫ້ການຄ້າຂາຍໃນສອງຟາກດ່ານຊາຍແດນບໍ່ມີຄວາມສະດວກເທົ່າທີ່ຄວນ.

3). ພື້ນຖານໂຄງລ່າງຂອງແຂວງຫົວພັນບໍ່ທັນຕອບສະໜອງໄດ້ ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາການຄ້າຊາຍແດນ ໂດຍສະເພາະແມ່ນບາງເສັ້ນທາງອອກສູ່ດ່ານຊາຍແດນແຫ່ງຊາດ, ດ່ານທ້ອງຖິ່ນ ແລະ ສຳນັກງານຫ້ອງການຂອງເຈົ້າໜ້າທີ່ດ່ານກໍ່ບໍ່ທັນເປັນລະບົບ ແລະ ຖາວອນ.

4). ສະພາບການຊື້-ຂາຍ ຢູ່ລຽບຕາມຊາຍແດນຍັງມັກມີປາກົດການລັກລອບການນຳເຂົ້າ-ສົ່ງອອກໂດຍບໍ່ໄດ້ຮັບອານຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ການລັກລອບຕັດໄມ້, ການຊື້ຂາຍສັດ ລ້ຽງ, ສັດປ່າ(ສັດປະເພດຫວງຫ້າມ).

5). ການຈັດຕັ້ງປະຕິບັດຂໍ້ຕົກລົງສິດທິພິເສດໃນການຫລຸດຜ່ອນອັດຕາພາສີ ລາວ-ຫວຽດນາມ ສຳລັບ ສິນຄ້າທີ່ມີແຫລ່ງກຳເນີດສິນຄ້າຈາກແຕ່ລະປະເທດ (ຟອມ S) ແມ່ນຍັງປະຕິບັດໄດ້ໜ້ອຍຫລາຍ ຍ້ອນຜູ້ປະກອບການນຳເຂົ້າ ແລະ ສົ່ງອອກບໍ່ທັນໃຫ້ຄວາມສົນໃຈ ແລະ ການອຳນວຍຄວາມສະດວກຕາມຂໍ້ຕົກລົງດັ່ງກ່າວຂອງເຈົ້າໜ້າທີ່ດ່ານຝ່າຍຫວຽດນາມກໍ່ຍັງບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ.

4. ແຜນການໃນຕໍ່ໜ້າ

1). ພົບປະຢ້ຽມຢາມເພື່ອເພີ່ມທະວີການແລກປ່ຽນຂໍ້ມູນຂ່າວສານທາງການຕະຫລາດ ແລະ ຖອດຖອນບົດຮຽນການຄຸ້ມຄອງການຄ້າຊາຍແດນກັບຝ່າຍຫວຽດນາມໃຫ້ໄດ້ຢ່າງໜ້ອຍ 01 ຄັ້ງຕໍ່ປີ.

2). ສືບຕໍ່ຊຸກຍູ້ສົ່ງເສີມໃຫ້ນັກທຸລະກິດລົງທຶນກໍ່ສ້າງຕະຫລາດດ່ານຊາຍແດນ ແລະ ກໍ່ສ້າງຕະຫລາດດ່ານຊາຍແດນທີ່ມີເງື່ອນໄຂ ໂດຍສະເພາະແມ່ນຕະຫລາດຊາຍແດນສາກົນ ນ້ຳໂສຍ-ນາແມວ ແລະ ດ່ານແຫ່ງຊາດ ບ້ານດ່ານ-ຊຽງເຂືອງ ຕາມໂຄງການແຜນແມ່ບົດພັດທະນາຕາໜ່າງຕະຫລາດຊາຍແດນ ລາວ -ຫວຽດນາມ ແລະ ຫວຽດ ນາມ-ລາວ ຮອດ ປີ 2020.

5. ຂໍ້ສະເໜີ

1). ສະເໜີໃຫ້ກົມການນຳເຂົ້າສົ່ງອອກສືບຕໍ່ໃຫ້ທິດຊີ້ນຳ ແລະໃຫ້ການຊ່ວຍເຫລືອ ພະແນກອຸດສາຫະກຳ ແລະ ການຄ້າແຂວງຫົວພັນ ເພື່ອສ້າງຕັ້ງຕລາດຊາຍແດນສາກົນນ້ຳໂສຍ-ນາແມວ ແລະ ບັນດາຕະຫລາດຊາຍແດນອື່ນໆທີ່ມີເງື່ອນໄຂ.

2). ສະເໜີໃຫ້ກົມການນຳເຂົ້າ ແລະ ສົ່ງອອກຊ່ວຍຝຶກອົບຮົມໃຫ້ພະນັກງານພະແນກອຸດສາຫະກຳ ແລະ ການຄ້າແຂວງຫົວພັນ ກ່ຽວກັບວຽກງານການຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ ໂດຍສະເພາະແມ່ນວຽກງານພັດທະນາຕະຫລາດຊາຍແດນ.

ດັ່ງນັ້ນ, ຈຶ່ງຖືເປັນກຽດຮຽນລາຍງານມາຍັງທ່ານເພື່ອຮັບຊາບ ແລະ ເພື່ອມີທິດຊີ້ນຳ.

ຮຽນລາຍງານມາດ້ວຍຄວາມເຄົາລົບຢ່າງສູງ.

**ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ**

ພະແນກ

ຂອນສານ ວິໄລເມັ້ງ

<u>ບ່ອນນຳສົ່ງ</u>

- ຫ້ອງການກະຊວງ ອຄ 01 ສະບັບ.
- ສຳເນົາ 02 ສະບັບ.

ກະຊວງ... ການຄ້າ
480
13 AUG 2014

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
----===0000===----

ແຂວງຊຽງຂວາງ
ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ່ 2369/ອຄ,ຊຂ
ວັນທີ່ 11 AUG 2014

# ບົດສະຫຼູບ

## ການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ສ.ປ.ປ ລາວ ( ແຂວງຊຽງຂວາງ ) - ສສ ຫວຽດນາມໃນ 5 ປີ ຜ່ານມາ (ແຕ່ປີ2009-06 ເດືອນ ຕົ້ນປີ2014) ແລະ ທິດທາງແຜນການ 5 ປີຕໍ່ໜ້າ

- ອີງຕາມແຈ້ງການ ຂອງຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບ ເລກທີ່ 2114/ຫອຄ.ກຊອ.ຊດ ລົງວັນທີ່ 31 ກໍລະກົດ 2014 ກ່ຽວກັບການສະຫຼູບການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາ ການຄ້າຊາຍແດນ ລາວ-ຫວຽດ ຄັ້ງທີ່ VIII ທີ່ ແຂວງເຊກອງ ສ.ປ.ປ.ລາວ.

ເພື່ອເປັນການຈັດຕັ້ງ ຜັນຂະຫຍາຍເນື້ອໃນບົດບັນທຶກຂອງກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນລາວ-ຫວຽດ ຄັ້ງທີ່ VIII ໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງຊຽງຂວາງ ສາມາດສະຫຼູບສັງລວມວຽກງານບາງດ້ານໂດຍຫຍໍ້ໄດ້ດັ່ງລຸ່ມນີ້:

### I. ສະພາບລວມ.

#### 1. ຕີລາຄາສະພາບລວມ.

ສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກດ້ານການຄ້າ, ການບໍລິການໃຫ້ແກ່ນັກທຸລະກິດລາວ - ຫວຽດທັງສອງປະເທດເວົ້າລວມ, ເວົ້າສະເພາະ ແຂວງຊຽງຂວາງ ກັບ ແຂວງເງະອານ (ສ.ສ ຫວຽດນາມ ) ນັບທັງພາກລັດ-ເອກະຊົນ. ໃນການພົວພັນແລກປ່ຽນສິນຄ້າ, ການບໍລິການຄ້າຂາຍຕາມຊາຍແດນ ແລະ ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ແກ່ນັກທຸລະກິດລາວ ແລະ ນັກທຸລະກິດ ຫວຽດນາມ ໃຫ້ສະດວກ, ວ່ອງໄວ ແລະ ໃຫ້ນັບມື້ນັບຂະຫຍາຍຕົວຂຶ້ນເປັນກ້າວໆ.

ທັງສອງຝ່າຍໄດ້ຮ່ວມມືກັນວາງແຜນນະໂຍບາຍໃນວຽກງານການຄ້າ, ຊຸກຍູ້ສົ່ງເສີມປຸກລະດົມໃຫ້ນັກທຸລະກິດມາລົງທຶນເປີດກວ້າງທາງດ້ານການປູກຝັງແລະລ້ຽງສັດ. ຕິດພັນກັບການປຸງແຕ່ງເປັນສິນຄ້າຂາອອກເຮັດໃຫ້ທຸລະກິດເຂົ້າເຖິງດ້ານການບໍລິການ, ການລົງທຶນໃຫ້ມີປະສິດທິຜົນສູງດ້ານເສດຖະກິດຂອງແຂວງຊຽງຂວາງ-ເງະອານ, ມູນຄ່າການຄ້າຂອງ ແຂວງຊຽງຂວາງ ແລະ ສສ.ຫວຽດນາມ ໃນ5ປີຜ່ານມາ (ນັບແຕ່ປີ2009-2014) ບັນລຸໄດ້ 179.646.483,76 ໂດລາ.

#### 2. ການເຕີບໂຕດ້ານການ ຊື້-ຂາຍ ຢູ່ຕະຫຼາດຊາຍແດນ.

ດ້ານການ ຊື້-ຂາຍ ແລະ ການບໍລິການຢູ່ໃນຕະຫຼາດ ຊາຍແດນໃນ ໄລຍະ 5 ປີ ຜ່ານມາເຫັນວ່າມີທ່າກ້າວ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີການແລກປ່ຽນສິນຄ້າຮ່ວມມືກັນລະຫວ່າງແຂວງຕໍ່ແຂວງ ແລະ ມີເມືອງຕໍ່ເມືອງທີ່ມີຊາຍ ແດນຕິດຕໍ່ກັນ, ເຊິ່ງມັນສະແດງອອກມີສິນຄ້າສົ່ງອອກເພື່ອຈຳໜ່າຍ ແລະ ສິນຄ້ານຳເຂົ້າມາວາງຂາຍເຊັ່ນ:

- ສິນຄ້າສົ່ງອອກສ່ວນຫຼາຍແມ່ນສິນຄ້າກະສິກຳ, ໄມ້ ແລະ ຜະລິດຕະພັນໄມ້, ແຮ່ທາດ ແລະ ເຄື່ອງປ່າຂອງດົງ.
- ສິນຄ້ານຳເຂົ້າສ່ວນຫຼາຍແມ່ນປະເພດນໍ້າມັນເຊື້ອໄຟ-ອາຍແກັດ, ສິນຄ້າຮັບໃຊ້ການລົງທຶນ ແລະ ສິນຄ້າຈຳໜ່າຍທົ່ວໄປ.

3. ວຽກງານການຄ້າຊາຍແດນ.

ການຄ້າຊາຍແດນຢູ່ ແຂວງຊຽງຂວາງ ປະຈຸບັນເຫັນວ່າມີທ່າກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ, ນັບມື້ນັບດີຂຶ້ນ ເຊັ່ນ: ການນຳເຂົ້າ-ສົ່ງອອກ ຂອງນັກທຸລະກິດ ໄດ້ມີຄວາມສະດວກ, ວ່ອງໄວ ແລະ ຖືກຕ້ອງສອດຄ່ອງກັບລະບຽບ ກົດໝາຍ ແລະ ສິດທິພິເສດອື່ນໆ ຕາມເງື່ອນໄຂ, ຄວາມເປັນຈິງຂອງການຊື້ຂາຍສິນຄ້າສິນຄ້ານຳກັ່ນເປັນຕົ້ນສິນຄ້າສົ່ງອອກ ຂອງແຂວງຊຽງຂວາງໄປ ສສ ຫວຽດນາມ ລາຍລະອຽດມີຕາຕະລາງສະແດງດັ່ງລຸ່ມນີ້:

ຕາຕະລາງ 01: ສະແດງລາຍການສິນຄ້າສົ່ງອອກ ແລະ ນຳເຂົ້າແຕ່ສົກປີ 2009-2014

| ລ/ດ | - ລາຍການສິນຄ້າ | - ມູນຄ່າ ($) | | | | |
|---|---|---|---|---|---|---|
| ກ | - **<u>ສິນຄ້າສົ່ງອອກ</u>** | **2009-2010** | **2010-2011** | **2011-2012** | - **2012-2013** | - **2013-2014** |
| 1 | ໄມ້ ແລະ ຜະລິດຕະພັນໄມ້ | 4.662.775,91 | 3.059.106,77 | 1.765.264,26 | 425.789,32 | 4.660.189,19 |
| 2 | ສິນຄ້າກະສິກຳ-ສັດລ້ຽງ | 2.395.098,40 | 9.730.528,26 | 14.321.716,05 | 27.525.815,13 | 24.567.252,10 |
| 3 | ເຄື່ອງປ່າຂອງດົງ | 3.952,80 | 44.542,39 | 398.565,43 | 116.241,93 | 173.435,67 |
| 4 | ແຮ່ທາດຕ່າງໆ | | 11.091,71 | 8.565,45 | 7.141,62 | 2.413.267,20 |
| 5 | ອື່ນໆ | 199,27 | | 4.227,80 | 1.910,82 | 4.898,70 |
| 6 | ການຄ້າຊາຍແດນ | 817.343,41 | | | | |
| | - <u>ລວມ</u> | <u>7.879.369,79</u> | <u>12.845.269,13</u> | <u>16.498.338,99</u> | <u>28.076.898,82</u> | <u>31.819.042,86</u> |
| ຂ | - **<u>ສິນຄ້ານຳເຂົ້າ</u>** | - | - | - | - | - |
| <u>I</u> | **<u>ສິນຄ້າລັດຖະບານຄຸ້ມຄອງ</u>** | <u>9.134.715,98</u> | <u>9.405.497,80</u> | <u>9.175.380,24</u> | <u>12.899.281,36</u> | <u>12.864.084,44</u> |
| 1 | ນ້ຳມັນເຊື້ອໄຟ ແລະ ອາຍແກັດ | 9.134.715,98 | 9.405.497,80 | 9.175.380,24 | 12.899.281,36 | 12.864.084,44 |
| <u>II</u> | **<u>ສິນຄ້ານຳເຂົ້າເພື່ອຈຳໜ່າຍທົ່ວໄປ</u>** | <u>3.407.312,94</u> | <u>2.050.202,52</u> | <u>2.544.733,27</u> | <u>2.627.367,04</u> | <u>3.524.358,74</u> |
| 1 | ສະບຽງອາຫານ | 315.180,51 | 164.391,00 | 193,726.23 | 254.371,50 | 292.686,00 |
| 2 | ສິນຄ້າຟຸມເຟືອຍ | | 485.00 | 165.00 | 2.075,00 | 1.035,00 |
| 3 | ເຄື່ອງໃຊ້ຫ້ອງການ | 12,00 | | 240.00 | 128.562.00 | 381.476,52 |
| 4 | ອຸປະກອນ ແລະ ເຄື່ອງກໍ່ສ້າງ | 1.825.417,88 | 1.648.480,72 | 1.980.279,44 | 1.958.965,99 | 1.905.139,01 |
| 5 | ອຸປະກອນ ແລະ ເຄື່ອງໄຟຟ້າ | 127.733,70 | 88.075,10 | 52.088,95 | 11.669,05 | 27.455,95 |
| 6 | ເຄື່ອງນຸ່ງຫົ່ມແລະເຄື່ອງໃຊ້ສອຍປະຈຳວັນ | 312.011,11 | 231.842,00 | 219.434,00 | 200.193,50 | 272.328,50 |
| 7 | ຮັບໃຊ້ການຜະລິດກະສິກຳ | 82.696,90 | 76.913,40 | 95.014,00 | 59.495,00 | 86.910,00 |
| 8 | ຮັບໃຊ້ການຜະລິດອຸດສາຫະກຳ | 367.923,25 | 2.346,20 | 432,50 | 2.700,00 | 116.665,00 |
| 9 | ອາໄຫຼ່ລົດທຸກຊະນິດ | 230,00 | | 3.353,10 | 9.335,00 | 440.662,76 |
| <u>III</u> | - **<u>ສິນຄ້າຮັບໃຊ້ການລົງທືນ</u>** | <u>2.730.875,85</u> | <u>1.238.701,52</u> | <u>3.134.424,94</u> | <u>5.236.144,65</u> | <u>2.554.482,88</u> |
| 1 | ພາຫະນະ ແລະ ສິ້ນສ່ວນ | | 183.838,00 | 115.440,00 | 614.438,56 | 33.636,04 |
| 2 | ສະບຽງອາຫານ | | | | 3.652,00 | |
| 3 | ອຸປະກອນ ແລະ ເຄື່ອງກໍ່ສ້າງ | | 543.226,70 | 1.349.750,87 | 3.672.860,79 | 952.740,93 |
| 4 | ອຸປະກອນ ແລະ ເຄື່ອງໃຊ້ໄຟຟ້າ | | | 178.882,47 | 45.153,20 | 645.804,79 |
| 5 | ເຄື່ອງນຸ່ງຫົ່ມແລະເຄື່ອງໃຊ້ສອຍປະຈຳວັນ | | | | 28.845,00 | |
| 6 | ຮັບໃຊ້ການຜະລິດກະສິກຳ | | 515.288,68 | 718.945,00 | 449.105,62 | 538.833,60 |
| 7 | ຮັບໃຊ້ການຜະລິດ ອຸດສາຫະກຳ | | 260.348,14 | 771.406,60 | 422.116,30 | 383.467,52 |
| | - <u>ລວມ</u> | <u>15.272.904,77</u> | <u>12.694.401,84</u> | <u>14.854.538,45</u> | <u>20.762.793,05</u> | <u>18.942.926,06</u> |

ຕາຕະລາງ02: ມູນຄ່າການສົ່ງອອກສິນຄ້າໃນໄລຍະ 5 ປີ ແຕ່ 2009-2014.

| - ລາຍການສິນຄ້າ | - ມູນຄ່າ ໂດລາສະຫະລັດ |
|---|---|
| ໄມ້ ແລະ ຜະລິດຕະພັນໄມ້ | 14.573.125,45 |
| ສິນຄ້າກະສິກຳ-ສັດລ້ຽງ | 78.540.409,94 |
| ແຮ່ທາດຕ່າງໆ | 2.440.065,98 |
| ເຄື່ອງປ່າຂອງດົງ | 736.738,22 |
| ການຄ້າຊາຍແດນ | 817.343,41 |
| ອື່ນໆ | 11.236,59 |
| <u>ລວມ</u> | <u>97.118.919.59</u> |




ໃນໄລຍະ 5 ປີ ຜ່ານມາ (2009-2014) ສິນຄ້າສົ່ງອອກໄປຫວຽດນາມມີມູນຄ່າ 97.118.919,59 ໂດລາ; ສິນຄ້າທີ່ສົ່ງອອກຫຼາຍແມ່ນ ສິນຄ້າກະສິກຳກວມ 81% (ສາລີ ມີມູນຄ່າ 75.504.065 ໂດລາ; ເຂົ້າມີມູນຄ່າ 503.520,93 ໂດລາ; ມັນຕົ້ນ ແລະ ແປ້ງມັນຕົ້ນມູນຄ່າ 351.406,53 ໂດລາ); ໄມ້ ແລະ ຜະລິດຕະພັນໄມ້ກວມ 15%, ແຮ່ທາດຕ່າງໆ 2%; ເຄື່ອງປ່າຂອງດົງ 1%.

ຕາຕະລາງ03: ມູນຄ່າການນຳເຂົ້າສິນຄ້າໃນໄລຍະ 5 ປີ ແຕ່ 2009-2014.

| - ລາຍການສິນຄ້າ | - ມູນຄ່າ ໂດລາສະຫະລັດ |
|---|---|
| ນ້ຳມັນເຊື້ອໄຟ ແລະ ອາຍແກັດ | 53.478.959,82 |
| ສິນຄ້າຈຳໜ່າຍທົ່ວໄປ | 14.153.974,51 |
| ສິນຄ້າຮັບໃຊ້ການລົງທຶນ | 14.894.629,84 |
| <u>ລວມ</u> | <u>82.527.564,17</u> |




- ໃນໄລຍະ 5 ປີ ຜ່ານມາ (2009-2014) ສິນຄ້ານຳເຂົ້າຈາກຫວຽດນາມມີມູນຄ່າ 82.527.564,17 ໂດລາສະຫະລັດ; ສິນຄ້າທີ່ນຳເຂົ້າຫຼາຍກວ່າໝູ່ ແມ່ນນ້ຳມັນເຊື້ອໄຟ ແລະ ອາຍແກັດ ກວມ 65% ; ອັນດັບສອງ ແມ່ນສິນຄ້າຮັບໃຊ້ການລົງທຶນກວມ 18%; ແລະ ສິນຄ້າຈຳໜ່າຍທົ່ວໄປກວມ 17%.

4. ດຸນການຄ້າລະຫວ່າງ ສ.ປ.ປ.ລາວ ( ແຂວງຊຽງຂວາງ ) ແລະ ສສ.ຫວຽດນາມ ໃນໄລຍະ 5 ປີຜ່ານມາແຕ່ປີ 2009 - 2014 ແມ່ນເກີນດຸນ 14.591.355,42 ໂດລາສະຫະລັດ.

5. ມູນຄ່າການສົ່ງອອກ - ນຳເຂົ້າສິນຄ້າໄລຍະ 5 ປີສົກປີ 2009-2014.




| | 2009-2010 | 2010-2011 | 2011-2012 | 2012-2013 | 2013-2014 |
|---|---|---|---|---|---|
| ■ ມູນຄ່າການສົ່ງອອກ | 7879369.79 | 12845269.13 | 16498338.99 | 28076898.82 | 31819042.86 |
| ■ ມູນຄ່າການນຳເຂົ້າ | 15272904.77 | 12694401.84 | 14854538.45 | 20762793.05 | 18942926.06 |

## II ການຕີລາຄາ, ປະເມີນຜົນດ້ານການຄ້າຊາຍແດນ ແລະ ຕະຫຼາດຊາຍແດນ.

1. ຂໍ້ສະດວກ .

- ໄດ້ມີຂໍ້ກຳນົດ, ກົດໝາຍ ແລະ ບັນດານິຕິກຳຕ່າງໆເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ວຽກງານຕົວຈິງໃນຫຼາຍໆດ້ານເປັນແຕ່ລະໄລຍະ.
- ປະຕິບັດມະຕິຄຳສັ່ງ, ຂໍ້ຕົກລົງ, ລະບຽບກົດໝາຍໃຫ້ມີຄວາມຍຸດຕິທຳ ແລະ ໂປ່ງໃສ, ປຸກລະດົມ ຊຸກຍູ້ນັກທຸລະກິດທັງສອງຝ່າຍ (ແຂວງຊຽງຂວາງ ແລະແຂວງເງະອານ) ກັບບັນດາເມືອງທີ່ມີຊາຍແດນຕິດຈອດກັນ, ໃຫ້ມີຊາວຄ້າຂາຍ ແລະ ນັກທຸລະກິດຕ່າງໆ, ເພື່ອໃຫ້ມີການແລກປ່ຽນ ຊື້-ຂາຍສິນຄ້າຮ່ວມກັນ.
- ໄດ້ເອົາໃຈໃສ່ປະສານສົມທົບກັບ ບັນດາຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ເພື່ອໃຫ້ມີຄວາມ ສະດວກ ແລະ ວ່ອງໄວໃນການຈັດຕັ້ງປະຕິບັດຜັນຂະຫຍາຍບັນດາຂໍ້ກຳນົດ, ກົດໝາຍ ແລະ ນິຕິກຳຕ່າງໆຕໍ່ກັບການ ດຳເນີນທຸລະກິດດ້ານການຄ້າ, ການບໍລິການ ແລະ ການລົງທຶນຢູ່ພາຍໃນກັບຕ່າງປະເທດ ລະຫວ່າງສອງ ແຂວງຄື: ແຂວງຊຽງຂວາງ ແລະ ແຂວງເງະອານ ໂດຍສະເພາະປະຊາຊົນທີ່ອາໃສຢູ່ລຽບຕາມຊາຍແດນຄື: ເມືອງກີ່ ເຊີນ ສສ ຫວຽດນາມ ກັບເມືອງໜອງແຮດ ແລະ ເມືອງໝອກ ຂອງແຂວງຊຽງຂວາງ ລະຫວ່າງ 3 ເມືອງນີ້ ອຳນາດການປົກຄອງແຕ່ລະເມືອງ ກໍ່ໄດ້ສ້າງສາຍພົວພັນຮ່ວມມືກັນໃນແຕ່ລະຂົງເຂດວຽກງານ ຂອງແຕ່ລະເມືອງ ແລະ ເປັນເມືອງແຮກສ່ຽວນຳກັນກັບດ້ານການຄ້າ, ການລົງທຶນ ຕາມຈຸດພິເສດຂອງແຕ່ລະເມືອງ ຢ່າງເປັນປະຈຳ.
- ເຮັດໃຫ້ທຸລະກິດມີຄວາມສະດວກ, ວ່ອງໄວໃນການປະກອບເອກະສານ, ການປະຕິບັດລະບຽບກົດໝາຍຕ່າງໆ ຕະຫຼອດຮອດການເກັບຄ່າທຳນຽມ ແລະ ອື່ນໆ ມີຄວາມຊັດເຈນຂຶ້ນເປັນກ້າວໆ.
- ໄດ້ເອົາໃຈໃສ່ປຸກລະດົມນັກທຸລະກິດຢູ່ສອງເມືອງ ເມືອງໜອງແຮດ ແລະ ເມືອງກີ່ເຊີນ ແລກປ່ຽນຊື້ຂາຍໂດຍຕ່າງຝ່າຍ ຕ່າງມີຜົນປະໂຫຍດ, ເພື່ອເຮັດໃຫ້ມີມູນຄ່າທາງດ້ານການຄ້າເພີ່ມຂຶ້ນຕາມອັດຕາສ່ວນສະເລ່ຍບໍ່ໃຫ້ຫຼຸດ 8-10 % ຕໍ່ປີ, ສາເຫດທີ່ເຮັດໃຫ້ແຂວງຊຽງຂວາງ ບັນລຸຕົວເລກຕາມແຜນການນັ້ນ, ຍ້ອນວ່າມີປັດໃຈໃນຫຼາຍດ້ານລະຫວ່າງ ສອງພັກ, ສອງລັດ ລາວ ແລະ ຫວຽດນາມມີສິດທິພິເສດ ທາງດ້ານການຄ້າຕາມບົດບັນທຶກຂອງກອງປະຊຸມ ໄດ້ຕົກລົງຮ່ວມກັນໃນແຕ່ລະ ດ້ານລະຫວ່າງ ສ.ປ.ປ.ລາວ ແລະ ສສ.ຫວຽດນາມ.

2. ຂໍ້ຫຍຸ້ງຍາກ, ຄວນປັບປຸງແກ້ໄຂ ແລະ ບາງຂໍ້ສະເໜີ.

2.1 ຂໍ້ຫຍຸ້ງຍາກ.

- ເຖິງວ່າຜ່ານມາການພົວພັນຮ່ວມມືທາງດ້ານການຄ້າຊາຍແດນລະຫວ່າງສອງພັກ, ສອງລັດລາວ ແລະ ຫວຽດນາມ ເວົ້າລວມ, ເວົ້າສະເພາະ ແຂວງຊຽງຂວາງ, ມີມູນຄ່າການຄ້າເພີ່ມຂຶ້ນກໍ່ຕາມ ແຕ່ເຫັນວ່າມູນຄ່າການຄ້າຊາຍແດນຮ່ວມກັນຍັງຕໍ່າຢູ່, ການຈັດຕັ້ງປະຕິບັດພັນທະ, ສັນຍາທີ່ມີຕໍ່ກັນ ແລະ ສິດທິພິເສດອື່ນໆ ບາງອັນກໍ່ຍັງປະຕິບັດບໍ່ທັນໄດ້ດີເທົ່າທີ່ຄວນເຊິ່ງມັນສະແດງອອກບາງດ້ານດັ່ງນີ້: ໂຄງການພັດທະນາການຄ້າຊາຍແດນ, ການປັບປຸງຕະຫຼາດຊາຍແດນນ້ຳກັ່ນ ເພື່ອໃຫ້ກາຍເປັນສູນການຄ້າ ກໍ່ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດແຕ່ຢ່າງໃດ.
- ການສົ່ງອອກສັດ ໄປປະເທດຫວຽດນາມກໍ່ຍັງບໍ່ທັນສາມາດສົ່ງອອກຜ່ານດ່ານນ້ຳກັ່ນໄດ້, ແຕ່ໃນໄລຍະຜ່ານມານັກທຸລະກິດ, ແມ່ຄ້າ ແລະ ຊາວຄ້າຂາຍແມ່ນໄດ້ຈ້າງປະຊາຊົນຈູງສັດຂ້າມຊາຍແດນ ຫ່າງຈາກດ່ານສາກົນນ້ຳກັ່ນປະມານ 1 KM.

2.2 ວິທີທາງແກ້ໄຂ.

ຄຽງຄູ່ກັບດ້ານດີ, ບາງຂໍ້ຫຍຸ້ງຍາກທີ່ກ່າວມາຂ້າງເທິງນັ້ນ ແຕ່ກໍ່ຍັງມີບາງດ້ານ, ບາງເງື່ອນໄຂທີ່ສອງແຂວງ ຍັງຈະໄດ້ເພີ່ມທະວີ ຮ່ວມມືກັນແກ້ໄຂ ເວົ້າລວມ, ເວົ້າສະເພາະ ສອງພັກ-ສອງລັດລາວ ແລະ ຫວຽດນາມ ເພື່ອຍົກລະດັບການຄ້າຂາຍ, ການສົ່ງອອກ ແລະ ນຳເຂົ້າໃນຫຼາກຫຼາຍສາຂາວິຊາອາຊີບ ນັບມື້ນັບ ຫຼາຍຂຶ້ນ ໂດຍຕິດພັນກັບການປັບປຸງ, ສ້ອມແປງພື້ນຖານໂຄງລ່າງໃນຕະຫຼາດຊາຍແດນສາກົນນ້ຳກັ່ນ.

- ຫາວິທີທາງແກ້ໄຂຄວາມຫຼຸດໂຕນກັນລະຫວ່າງສິນຄ້າສົ່ງອອກ ແລະ ສິນຄ້ານຳເຂົ້າລະຫວ່າງ ແຂວງຊຽງຂວາງ ແລະ ແຂວງເງະອານ ສ.ສ.ຫວຽດນາມ.
- ເອົາໃຈໃສ່ປະສານງານໃນການປະຕິບັດສັນຍາທີ່ໄດ້ລົງນາມຮ່ວມກັນ, ບັນຫາທີ່ຍັງບໍ່ທັນປະຕິບັດໄດ້ດີບໍ່ໄດ້ປັບປຸງແກ້ໄຂ.

- ປະສານສົມທົບນຳກັນຄວນປັບປຸງຂອດການສົ່ງອອກປະເພດສັດລ້ຽງ: ງົວ, ຄວາຍໃນຈຸດດ່ານສາກົນນ້ຳກັ່ນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນກັບເວລາ.

2.3 ບາງຂໍ້ສະເໜີ.

- ປະສານສົມທົບຮ່ວມກັນຊອກຫາແຫຼ່ງທຶນເພື່ອປັບປຸງ-ສ້າງສາງພັກສິນຄ້າ (ສາງເກັບມ້ຽນສິນຄ້າ) ແລະ ຕະຫຼາດຊາຍແດນນ້ຳກັ່ນຕາມການສຳຫຼວດ ແລະ ອອກແບບເບື້ອງຕົ້ນເພື່ອຮັບໃຊ້ ການບໍລິການໃຫ້ແກ່ນັກທຸລະກິດ ແລະ ຊາວຄ້າຂາຍໃຫ້ມີຄວາມສະດວກ ແລະ ວ່ອງໄວ, ແຕ່ໃນໄລຍະຜ່ານມາຍັງບໍ່ມີນັກລົງທຶນພາກສ່ວນໃດໃຫ້ທຶນເພື່ອປັບປຸງວຽກໃນດ້ານນີ້.
- ຊຸກຍູ້ສົ່ງເສີມ ແລະ ຂະຫຍາຍກຸ່ມທຸລະກິດ ດ້ານການຄ້າຊາຍແດນໃຫ້ຫຼາຍ ແລະ ເຂັ້ມແຂງ, ຕ້ອງມີການແລກປ່ຽນຊື້ຂາຍໃຫ້ຫຼາຍຂຶ້ນກ່ວາເກົ່າ.
- ການສັນຈອນພົບກັບຄວາມຫຍຸ້ງຍາກ, ສະຖານຈອດລົດຄັບແຄບ, ແອອັດໃນມື້ລົງຕະຫຼາດ, ຕະຫຼາດເປິເປື້ອນສົ່ງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມຜູ້ມາບໍລິການ.
- ສະເໜີໃຫ້ຂັ້ນເທິງຊ່ວຍຄົ້ນຄວ້າໃຫ້ທຶນ, ໃນການກໍ່ສ້າງສາງພັກສິນຄ້າດ່ານນ້ຳກັ່ນ, ຕະຫຼາດຊາຍແດນນ້ຳກັ່ນ ໃຫ້ດີຂຶ້ນ ແລະ ທັນສະໄໝ.
- ຄວນປັບປຸງຂອດການສົ່ງອອກປະເພດສັດລ້ຽງ: ງົວ, ຄວາຍໃນຈຸດດ່ານສາກົນນ້ຳກັ່ນໃຫ້ມີຄວາມສະດວກ ແລະທັນກັບເວລາ.
- ຂໍເປີດດ່ານຊາຍແດນຕື່ມ 1 ແຫ່ງ ເປັນດ່ານປະເພນີ ລ້ອງຫ້ ເຂດສາມແຈ ເມືອງໜອກ ແຂວງຊຽງຂວາງເພື່ອສະດວກໃນການແລກປ່ຽນສິນຄ້າບ້ານທີ່ລຽບຕາມຊາຍແດນລະຫວ່າງເມືອງກີ່ເຊີນ ສສ ຫວຽດນາມ ແລະ ເມືອງ ໜອກຂອງແຂວງຊຽງຂວາງ.

## III. ທິດທາງແຜນການຄຸ້ມຄອງການຄ້າຊາຍແດນໃນຊຸມປີຕໍ່ໜ້າ.

1. ຄາດໝາຍສູ້ຊົນ.

- ສືບຕໍ່ຈັດຕັ້ງປະຕິບັດສົນທິສັນຍາລະຫວ່າງສອງປະເທດ ສ.ປ.ປ.ລາວ ແລະ ສ.ສ.ຫວຽດນາມ, ເວົ້າລວມ, ເວົ້າສະເພາະຕາມບົດບັນທຶກຂອງກອງປະຊຸມ ຄັ້ງທີ VIII, ກ່ຽວກັບວຽກງານການຄ້າຊາຍແດນ, ຕະຫຼາດ ຊາຍແດນ ລາວ-ຫວຽດ ທີ່ແຂວງເຊກອງໃຫ້ໄດ້ຮັບຜົນສູງສຸດ ແລະ ບົດບັນທຶກຮ່ວມກັນອື່ນໆ. ໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ດ້ານເສດຖະກິດໃຫ້ຂະຫຍາຍຕົວ ຢ່າງຕໍ່ເນື່ອງ ໃນລະດັບ 8-10 % ຕໍ່ປີ.

2. ດ້ານການພັດທະນາການຄ້າຊາຍແດນ.

- ສືບຕໍ່ຊອກແຫຼ່ງທຶນດ້ານງົບປະມານນຳມາຂະຫຍາຍຕະຫຼາດຊາຍແດນນ້ຳກັ່ນກໍ່ສ້າງສາງພັກສິນຄ້າ, ຕະຫຼາດໃຫ້ມີຄວາມຈົບງາມພຽງພໍກັບສັງຄົມ ແລະ ມີຫ້ອງຂາຍສິນຄ້າເປັນປະຈຳ, ສ້າງຕະຫຼາດຊາຍແດນນ້ຳກັ່ນກາຍເປັນຕະຫຼາດສິນຄ້ານິດຕະພາບ ລາວ - ຫວຽດນາມ ແລະ ທັນສະໄໝ.
- ສິນຄ້າສົ່ງອອກພາຍໃນໃຫ້ມີອັດຕາສ່ວນຂະຫຍາຍຕົວ ສະເລ່ຍບໍ່ໃຫ້ຫຼຸດ 10-12% ຕໍ່ປີ.
- ສິນຄ້ານຳເຂົ້າໃຫ້ມີອັດຕາສ່ວນສະເລ່ຍບໍ່ເກີນ 8% ຕໍ່ປີ.

3. ມາດຕະການຈັດຕັ້ງປະຕິບັດ.

ແຂວງຊຽງຂວາງ ສປ.ປ.ລາວ ກັບແຂວງເຫງະອານ ສ.ສ.ຫວຽດນາມ, ຕ້ອງໄດ້ເອົາໃຈໃສ່ ຄຸ້ມຄອງ, ຕິດຕາມ, ກວດກາ, ປະເມີນຜົນເປັນປະຈຳໃນການຈັດຕັ້ງປະຕິບັດການຮ່ວມມືລະຫວ່າງ ແຂວງຊຽງຂວາງ ແລະ ແຂວງເຫງະອານຕ້ອງວາງແຜນການເປົ້າໝາຍຍຸດທະສາດສະເພາະໜ້າທັນເປັນແຜນການ, ໂຄງການອັນລະອຽດຢ່າງມີຈຸດສຸມໃນແຕ່ລະດ້ານຂົງເຂດການຄ້າຊາຍແດນ ແລະ ຕະຫຼາດຊາຍແດນ ໃຫ້ບັນລຸຕາມຈຸດປະສົງເປົ້າໝາຍເພື່ອການພັດທະນາດ້ານອຸດສາຫະກຳ ແລະ ການຄ້າ, ການຄ້າຊາຍແດນໃຫ້ມີການພັດທະນາໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ.

ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ
ແຂວງຊຽງຂວາງ

ດຣ. ຄຳປາວ
Dr. Khampao

ສາທາລະນະລັດ ປະຊາທິປໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ແຂວງ ບໍລິຄຳໄຊ

ພະແນກອຸດສາຫະກຳ ແລະ ການຄ້າ                                   ເລກທີ 1167/ອຄ.ຂບຊ

ບໍລິຄຳໄຊ, ວັນທີ 12 ສິງຫາ 2014

ຮຽນ: ທ່ານ ຫົວໜ້າຫ້ອງການ, ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລື່ອງ: ສະຫຼຸບການຈັດຕັ້ງປະຕິບັດ ເນື້ອໃນບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໃນ 05 ປີ ຜ່ານມາ (ນັບແຕ່ປີ 2009- 06 ເດືອນຕົ້ນປີ 2014) ແລະ ແຜນການ 05 ປີຕໍ່ໜ້າ.

- ອີງຕາມ ໜັງສືຂອງຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2114/ຫອຄ.ກຂອ.ຊດ, ລົງວັນທີ 31 ກໍລະກົດ 2014.

ພະແນກ ອຸດສາຫະກຳ ແລະ ການຄ້າແຂວງບໍລິຄຳໄຊ ຂໍຖືເປັນກຽດ ສະຫຼຸບລາຍງານການຈັດຕັ້ງປະຕິບັດ ເນື້ອໃນບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໃນ 05 ປີ ຜ່ານມາ (ນັບແຕ່ປີ 2009-06 ເດືອນຕົ້ນປີ 2014) ແລະ ແຜນການໃນ 05 ປີຕໍ່ໜ້າດັ່ງນີ້:

I. ສະພາບລວມ:

ແຂວງ ບໍລິຄຳໄຊ ເປັນແຂວງໜຶ່ງທີ່ນອນຢູ່ໃນພາກກາງ ຂອງ ປະເທດລາວ ຊຶ່ງມີເນື້ອທີ່ທັງໝົດ 15.972 ກິໂລຕາແມັດ, ທົ່ວແຂວງປະກອບດ້ວຍ 07 ຕົວເມືອງ ຄື: ປາກຊັນ, ທ່າພະບາດ, ບໍລິຄັນ, ປາກກະດິງ, ຄຳເກີດ, ວຽງທອງ ແລະ ໄຊຈຳພອນ. ໃນນັ້ນ, ມີ 03 ຕົວເມືອງຕິດກັບ ສສ ຫວຽດນາມ ຄື: ເມືອງຄຳເກີດ, ເມືອງໄຊຈຳພອນ ແລະ ເມືອງວຽງທອງ. ມີດ່ານຊາຍແດນຕິດກັບ ສສ ຫວຽດນາມ 4 ແຫ່ງ. ໃນນັ້ນ, ມີດ່ານສາກົນ 01 ແຫ່ງ ຄື: ດ່ານສາກົນນ້ຳພາວ-ເກົາແຈວ (ເມືອງຄຳເກີດ) ເບື້ອງຫວຽດນາມ ແມ່ນເມືອງເຮືອງເຊີນ ແຂວງ ຮ່າຕິງ ແລະ ດ່ານປະເພນີ 3 ແຫ່ງ ຄື: ດ່ານນ້ຳອ້ອນ-ແຖງທຸຍ (ເມືອງໄຊຈຳພອນ) ເບື້ອງຫວຽດນາມ ແມ່ນເມືອງແທງເຈືອງ ແຂວງ ເງາະອານ ແລະ ດ່ານທອງມີໄຊ-ຕາມທີນ (ເມືອງວຽງທອງ) ເບື້ອງຫວຽດນາມ ແມ່ນເມືອງເຕືອງເຢືອງ ແຂວງ ເງາະອານ.

II. ສະພາບການຮ່ວມມືດ້ານການຄ້າໃນ 05 ປີຜ່ານມາ (ນັບແຕ່ປີ 2009-06 ເດືອນຕົ້ນປີ 2014)

1. ຕົວເລກການສົ່ງອອກສິນຄ້າ.

ມູນຄ່າການສົ່ງອອກສິນຄ້າ ຈາກ ລາວ ໄປ ຫວຽດນາມ ມີມູນຄ່າທັງໝົດ 55.184.384,07 ໂດລາສະຫະລັດ. ໃນນັ້ນ, ເປັນສິນຄ້າຂອງແຂວງສົ່ງອອກ ມີມູນຄ່າ 40.804.133,32 ໂດລາສະຫະລັດ. ສິນຄ້າສົ່ງອອກຕົ້ນຕໍ ມີ: ແປ້ງມັນຕົ້ນ, ມັນຕົ້ນແຫ້ງ, ຢາງພາລາ, ເປືອກບົງ, ດອກແຂມ, ຂີ້ຊີ, ຜະລິດຕະພັນໄມ້ ແລະ ອື່ນໆ.

2. ຕົວເລກການນຳເຂົ້າສິນຄ້າ

ມູນຄ່າການນຳເຂົ້າສິນຄ້າ ຈາກ ສສ ຫວຽດນາມ ມີມູນຄ່າທັງໝົດ 386.360.911,05 ໂດລາສະຫະລັດ. ໃນນັ້ນ, ສິນຄ້ານຳເຂົ້າທີ່ແຂວງຄຸ້ມຄອງ ມີມູນຄ່າທັງໝົດ 54.664.143 ໂດລາສະຫະລັດ ແລະ ສິນຄ້ານຳເຂົ້າລາຍຍ່ອຍຕາມ

ຊາຍແດນ ມີມູນຄ່າ 1.215.040,36 ໂດລາສະຫະລັດ. ສິນຄ້ານຳເຂົ້າທີ່ແຂວງຄຸ້ມຄອງ ມີ: ສະບຽງອາຫານ, ອຸປະກອນເຄື່ອງກໍ່ສ້າງ, ອຸປະກອນໄຟຟ້າ, ເຄື່ອງນຸ່ງຫົ່ມ, ສິນຄ້າຟຸມເຟືອຍ ແລະ ອື່ນໆອີກ.

3. ສິນຄ້າຜ່ານແດນ.

ມູນຄ່າສິນຄ້າຜ່ານແດນທັງໝົດ ມີມູນຄ່າ 143.185.355,72 ໂດລາສະຫະລັດ. ໃນນັ້ນ, ສິນຄ້າຜ່ານແດນ ຈາກຫວຽດນາມ ໄປ ໄທ ມີມູນຄ່າ 3.621.355,80 ໂດລາສະຫະລັດ ແລະ ຈາກໄທ ໄປ ຫວຽດນາມ ມີມູນຄ່າ 139.563.999,92 ໂດລາສະຫະລັດ. ສ່ວນຫລາຍເປັນປະເພດສິນຄ້າ ເຄື່ອງໃຊ້ໄຟຟ້າ, ເຄື່ອງອຸປະໂພກ ບໍລິໂພກ ແລະ ເຄື່ອງໃຊ້ສອຍຕ່າງໆ.

4. ການຮ່ວມມືດ້ານການຄ້າອື່ນໆ.

ໃນໄລຍະຜ່ານມາ ພະແນກອຸດສາຫະກຳ ແລະ ການຄ້າແຂວງບໍລິຄຳໄຊ ກໍ່ໄດ້ເຂົ້າຮ່ວມກອງປະຊຸມການຄ້າສອງຝ່າຍລາວ-ຫວຽດນາມ ທີ່ຫວຽດນາມເປັນເຈົ້າພາບຈັດ ແລະ ລາວເປັນເຈົ້າພາບຫລາຍຄັ້ງ ເຊັ່ນ: ເຂົ້າຮ່ວມກອງປະຊຸມພົບປະແລກປ່ຽນຢ່າງເປັນທາງການ ລະຫວ່າງຄະນະຜູ້ແທນຂັ້ນສູງສອງແຂວງ ແຂວງບໍລິຄຳໄຊ ແລະ ແຂວງຮ່າຕິງ ທີ່ແຂວງຮ່າຕິງ ໃນ17-19/9/2012, ເຂົ້າຮ່ວມກອງປະຊຸມການຮ່ວມມືການຄ້າຊາຍແດນລາວ-ຫວຽດນາມຄັ້ງທີ່ VIII ທີ່ ແຂວງເຊກອງ, ກອງປະຊຸມ 3 ປະເທດ 9 ແຂວງທີ່ ຫວຽດນາມ ແລະ ອື່ນໆອີກ.

ນອກນັ້ນ, ໃນການຊຸກຍູ້ສົ່ງເສີມທຸລະກິດໃນການຮ່ວມມືການຄ້າສອງຝ່າຍລາວ-ຫວຽດນາມ ກໍ່ຄື ການຈັດຕັ້ງປະຕິບັດຕາມແນວທາງນະໂຍບາຍຂອງລັດຖະບານ ສອງປະເທດ ເພື່ອຊຸກຍູ້ສົ່ງເສີມໃຫ້ການຮ່ວມມືການຄ້າສອງຝ່າຍ ສາມາດບັນລຸໄດ້ 2 ຕື້ ໂດລາສະຫະລັດ ໃນປີ 2015 ນັ້ນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງບໍລິຄຳໄຊ ກໍ່ໄດ້ລະດົມທຸລະກິດ ແລະ ຜູ້ປະກອບການຕ່າງໆເຂົ້າຮ່ວມງານວາງສະແດງສິນຄ້າໃນໂອກາດສຳຄັນຕ່າງໆ ເຊັ່ນ: ງານຕະຫຼາດນັດສາກົນ ທີ່ສະໜາມຫຼວງ ນະຄອນຮ່າຕິງ ສສ ຫວຽດນາມ, ງານວາງສະແດງ ແລະ ຈຳໜ່າຍສິນຄ້າສາກົນ ທີ່ ກວາງບິ່ງ ສສ ຫວຽດນາມ ແລະ ອື່ນໆ.

III. ການສົ່ງອອກພາຍໃຕ້ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ (ຟອມ S).

ນັບແຕ່ມີການເຊັນສັນຍາຂໍ້ຕົກລົງວ່າດ້ວຍການໃຫ້ບຸລິມະສິດຫລຸດຜ່ອນອັດຕາພາສີຂາເຂົ້າເຊິ່ງກັນ ແລະ ກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ ໄດ້ມີການຈັດຕັ້ງປະຕິບັດໃນເດືອນ ກໍລະກົດ 2005 ເປັນຕົ້ນມາ ເຊິ່ງໄດ້ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ເປັນຜູ້ຄຸ້ມຄອງ ແລະ ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ພາຍໃຕ້ຟອມເອັສ ນັບແຕ່ປີ 2010 ຫາ 6 ເດືອນຕົ້ນປີ 2014 ເຫັນວ່າການສົ່ງອອກສິນຄ້າຂອງແຂວງບໍລິຄຳໄຊ ນັບມື້ນັບຫລາຍຂຶ້ນ ແລະ ມີສິນຄ້າຫລາກຫລາຍປະເພດ ສະແດງອອກ ມູນຄ່າການສົ່ງອອກສິນຄ້າຈາກລາວໄປ ຫວຽດນາມພາຍໃຕ້ຟອມເອັສ ມີມູນຄ່າ 27.927.549,76 ໂດລາສະຫະລັດ. ສ່ວນຫລາຍເປັນປະເພດແປ້ງມັນຕົ້ນ, ມັນຕົ້ນຟານຕາກແຫ້ງ, ຢາງພາລາ, ເຂົ້າສານ, ສາລີແຫ້ງ ແລະ ສິນຄ້າອື່ນໆ.

IV. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ.

- ຂໍ້ສະດວກ: ປະຊາຊົນສອງຊາດລາວ - ຫວຽດນາມ ແມ່ນມີມູນເຊື້ອຄ້າຂາຍຮ່ວມກັນແຕ່ດົນນານມາແລ້ວ ແລະ ທັງສອງຊາດຍັງມີນະໂຍບາຍແບບພິເສດຕໍ່ກັນ ຊຶ່ງເປັນເງື່ອນໄຂສະດວກໃນການພັດທະນາການຄ້າຂາຍຮ່ວມກັນຢ່າງເປັນປົກກະຕິ.

- ຂໍ້ຫຍຸ້ງຍາກ: ຍັງມີການລັກລອບຄ້າຂາຍຜິດກົດໝາຍຕາມຊາຍແດນ ແລະ ການຂົນສົ່ງຍັງຫຍຸ້ງຍາກ ໂດຍສະເພາະເສັ້ນທາງຖືກຕັດຂາດໃນລະດູຝົນ.

V. ພາກສະເໜີ.

- ສະເໜີໃຫ້ຂັ້ນເທິງມີມາດຕະການການຄວບຄຸມການລັກລອບຄ້າຂາຍຜິດກົດໝາຍຕາມຊາຍແດນ.

- ສະເໜີໃຫ້ຝ່າຍຫວຽດນາມໃຫ້ຄວາມສະດວກໃນການສົ່ງອອກສິນຄ້າປະເພດກະສິກຳ ເຊັ່ນ: ແປ້ງມັນຕົ້ນ, ມັນຕົ້ນຝານຕາກແຫ້ງ, ເຂົ້າ, ສາລີ, ຢາງພາລາ ແລະ ອື່ນໆ.

- ສະເໜີໃຫ້ມີການຈັດການພົບປະລະຫວ່າງນັກທຸລະກິດ ລາວ-ຫວຽດນາມ ເພື່ອຈະໄດ້ມີການແລກປ່ຽນບົດຮຽນ ແລະ ຊອກຫາຊ່ອງທາງໃນການຮ່ວມມືລົງທຶນນຳກັນ ໂດຍສະເພາະການປູກ, ເກັບຊື້ ແລະ ລົງທຶນສ້າງໂຮງງານປຸງແຕ່ງຂະໜາດນ້ອຍ, ຂະໜາດກາງ ບັນດາສິນຄ້າທີ່ເປັນທ່າແຮງຂອງແຂວງ ເຊັ່ນ: ມັນຕົ້ນ, ສາລີ, ຢາງພາລາ, ແລະ ອື່ນໆ.

- ສະເໜີໃຫ້ຝ່າຍຫວຽດນາມໃຫ້ການຊ່ວຍເຫລືອ ຈັດຝຶກອົບຮົມທາງດ້ານວິຊາການ ໃຫ້ແກ່ບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ ໂດຍສະເພາະແຂວງທີ່ມີຊາຍແດນຕິດຈອດກັບຫວຽດນາມ ໃນຫົວຂໍ້ຕ່າງໆ ເຊັ່ນ:

1. ຝຶກອົບຮົມກ່ຽວກັບບົດຮຽນຂອງ ສສ ຫວຽດນາມ ໃນການຄຸ້ມຄອງວຽກງານການຄ້າຊາຍແດນ.
2. ຝຶກອົບຮົມກ່ຽວກັບບົດຮຽນໃນຄຸ້ມຄອງການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ.
3. ຝຶກອົບຮົມກ່ຽວກັບການກຽມຄວາມພ້ອມຂອງ ສສ ຫວຽດນາມ ໃນການເຂົ້າເປັນປະຊາຄົມເສດຖະກິດອາຊຽນ ໃນປີ 2015.

VI. ທິດທາງແຜນການໃນຊຸມປີຕໍ່ໜ້າ.

- ຕາມແຜນແມ່ບົດພັດທະນາຕາໜ່າງຕະຫຼາດຊາຍແດນ ສປປ ລາວ - ຫວຽດນາມ ແລະ ຫວຽດນາມ - ສປປ ລາວ ຮອດປີ 2020 ຂອງກະຊວງອຸດສາຫະກຳ ແລະ ການຄ້າ ນັ້ນ ຈະນຳສະເໜີແຂວງເອົາເຂົ້າແຜນປະຈຳປີ ເພື່ອລະດົມ ແລະ ຊອກຫາແຫຼ່ງທຶນໃນການກໍ່ສ້າງຕະຫຼາດດ່ານຊາຍແດນ ນ້ຳທາງ, ຊຶ່ງຕິດພັນກັບເຂດເສດຖະກິດຊາຍແດນນ້ຳທາງ ຂອງໂຄງການແຜນແມ່ບົດສ້າງເຂດເສດຖະກິດດ່ານສາກົນນ້ຳພາວ ຂອງແຂວງບໍລິຄຳໄຊ.

- ຕິດພັນກັບດ່ານທ້ອງຖິ່ນ ຈະຊຸກຍູ້ສົ່ງເສີມໃຫ້ມີຕະຫຼາດດ່ານຊາຍແດນ ເປັນຕະຫຼາດຊຸມຊົນ ຈຸດຫຼັກແມ່ນເພື່ອປະຊາຊົນສອງຟາກຊາຍແດນແລກປ່ຽນຊື້ຂາຍສິນຄ້າຮັບໃຊ້ການຜະລິດ ແລະ ຊີວິດປະຈຳວັນ ແລະ ພ້ອມນັ້ນກໍ່ສົ່ງເສີມໃຫ້ມີການພັດທະນາກາຍເປັນດ່ານສາກົນໃນອານາຄົດ.

- ຊຸກຍູ້ສົ່ງເສີມພໍ່ແມ່ປະຊາຊົນຜະລິດສິນຄ້າເພື່ອສົ່ງອອກ ເປັນຕົ້ນແມ່ນສິນຄ້າກະສິກຳ ເຊັ່ນ: ມັນຕົ້ນ, ສາລີ , ຢາງພາລາ ແລະ ສິນຄ້າອື່ນໆ ທີ່ຕະຫຼາດຕ່າງປະເທດມີຄວາມຕ້ອງການ.

- ຕິດຕາມຄຸ້ມຄອງການນຳເຂົ້າສິນຄ້າທີ່ລັດຄຸ້ມຄອງການນຳເຂົ້າ ເພື່ອໃຫ້ມີການນຳເຂົ້າຖືກຕ້ອງຕາມລະບຽບກົດໝາຍ.

- ນຳສະເໜີກະຊວງ ແລະ ແຂວງ ຊ່ວຍຄົ້ນຄວ້າພິຈາລະນາ ໃນການເກັບກຳຂໍ້ມູນຢູ່ດ່ານພາສີ ແມ່ນຍັງມີຄວາມຫຍຸ້ງຍາກ ຊັກຊ້າ ບໍ່ທັນເວລາ ໂດຍສະເພາະ ຂໍ້ມູນການນຳເຂົ້າລາຍຍ່ອຍຕາມຊາຍແດນແມ່ນບໍ່ຄົບຖ້ວນ ຊຶ່ງບາງດ່ານບໍ່ສາມາດສະໜອງໃຫ້ໄດ້. ສຳລັບຂໍ້ມູນການສົ່ງອອກສິນຄ້າລາຍຍ່ອຍຕາມຊາຍແດນແມ່ນດ່ານບໍ່ສາມາດສະໜອງໃຫ້ໄດ້ເລີຍ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບດ້ວຍ.

ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ແຂວງ ຄຳມ່ວນ
ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 0342 /ອຄ.ຄມ
ຄຳມ່ວນ, ວັນທີ 12 ສິງຫາ 2014

# ບົດລາຍງານ

ຮຽນ: ທ່ານ ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ ກະຊວງ ອຸດສາຫະກຳ ແລະ ການຄ້າ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກ ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ໃນ 05 ປີ ຜ່ານມາ (ນັບແຕ່ປີ 2009-06 ເດືອນຕົ້ນປີ 2014) ແລະ ແຜນການ 05 ປີ ຕໍ່ໜ້າ.

- ອີງຕາມ ໜັງສືຂອງຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2114/ຫອຄ.ກຂອ.ຊດ, ລົງວັນທີ 31 ກໍລະກົດ 2014.

ພະແນກອຸດສາຫະກຳ ແລະ ການຄ້າແຂວງຄຳມ່ວນ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ເພື່ອຊາບ ກ່ຽວກັບສະພາບການຮ່ວມມືພັດທະນາການຄ້າຊາຍແດນ, ການເຂົ້າຮ່ວມຕະຫຼາດນັດ, ງານວາງສະແດງສິນຄ້າ, ວຽກງານການນາເຂົ້າ-ສົ່ງອອກ ພະແນກອຸດສາຫະກຳ ແລະ ການຄ້າແຂວງຄຳມ່ວນ ກັບແຂວງ ກວາງບິງ ສສ ຫວຽດນາມ, ໃນ 05 ປີຜ່ານມາ (ນັບແຕ່ 2009-06 ເດືອນຕົ້ນປີ 2014) ແລະ ແຜນການ 05 ປີຕໍ່ໜ້າ ຊຶ່ງສາມາດສັງລວມຜົນຂອງການຈັດຕັ້ງປະຕິບັດລະອຽດດັ່ງນີ້:

## I. ສະພາບລວມ:

ນັບແຕ່ ສປປ ລາວ ໄດ້ເປີດການຄ້າກັບຕ່າງປະເທດໄດ້ມີການພົວພັນການຄ້າກັບບັນດາປະເທດໃນໂລກຫຼາຍ ກ່ວາ 30 ປະເທດເວົ້າລວມ, ເວົ້າສະເພາະແມ່ນແຂວງຄຳມ່ວນກໍ່ໄດ້ມີການພົວພັນທາງດ້ານການກັບຕ່າງປະເທດ ໂດຍສະເພາະແມ່ນບັນດາປະເທດໃກ້ຄຽງເປັນຕົ້ນແມ່ນ: ສສ ຫວຽດນາມ, ໄທ, ສປ ຈີນ. ພາຍຫຼັງ ສປປ ລາວເຮົາໄດ້ເຂົ້າເປັນສະມາຊິກອາຊຽນໃນປີ 1997, ມັນເປັນໂອກາດອັນດີໃນການພົວພັນທາງດ້ານການຄ້າໃນກຸ່ມອາຊຽນດ້ວຍກັນ, ນອກນັ້ນແລ້ວ ສປປ ລາວ ຍັງໄດ້ຮັບສິດທິພິເສດທາງດ້ານການຍົກເວັ້ນພາສີນຳເຂົ້າ (GSP) ເຊິ່ງໄດ້ສົ່ງຜົນເຮັດໃຫ້ການສົ່ງອອກສິນຄ້າລາວເຮົາມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ.

ການພັດທະນາທາງດ້ານເສດຖະກິດ-ສັງຄົມ ແຕ່ປີ 2009 ເປັນຕົ້ນມາ, ລັດຖະບານໄດ້ມອບໝາຍໃຫ້ກະຊວງອຸດສາຫະກຳ ແລະ ການຄ້າເວົ້າລວມ, ເວົ້າສະເພາະແມ່ນພະແນກອຸດສາຫະກຳ ແລະ ການຄ້າແຂວງຄຳມ່ວນ ເພີ່ມທະວີການສົ່ງອອກຢ່າງແຂງແຮງ ໂດຍເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງໃນການປັບປຸງບັນດານິຕິກຳທີ່ພົວພັນເຖິງການນຳເຂົ້າ ແລະ ສົ່ງອອກສິນຄ້າ ລວມທັງຂໍ້ກຳນົດຕ່າງໆ ກ່ຽວກັບການຄ້າຜ່ານແດນ, ການຄ້າຂາອອກຕໍ່, ການຄ້າຊາຍແດນໃຫ້ມີຄວາມສະດວກ ແລະ ວ່ອງໄວ. ການຄ້າໃນຖານະ "ຕ່ອງໂສ້" ຕົ້ນຕໍຂອງການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້ານັ້ນເປັນປັດໃຈໜຶ່ງທີ່ສຳຄັນ ແລະ ຈຳເປັນໃນການປະກອບສ່ວນຊຸກຍູ້ໃຫ້ບັນລຸເປົ້າໝາຍຂອງການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະ ເພື່ອພັດທະນາແຂວງຄຳມ່ວນ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກຢ່າງສິ້ນເຊີງ. ເຖິງຢ່າງໃດກໍ່ຕາມແຂວງຄຳມ່ວນກໍ່ແມ່ນສ່ວນໜຶ່ງຂອງບັນດາແຂວງໃນ ສປປ ລາວ ການກະກຽມຄວາມພ້ອມກ້າວເຂົ້າເປັນສະມາຊິກປະຊາຄົມອາຊຽນໃນປີ 2015.

ດັ່ງນັ້ນຈຶ່ງສາມາດເວົ້າໄດ້ວ່າ: ການອຳນວຍຄວາມສະດວກທາງດ້ານການຄ້າແມ່ນການຈັດຕັ້ງປະຕິບັດລະບຽບການ, ຂັ້ນຕອນຂອງການຄ້າກັບຕ່າງປະເທດ ແລະ ພາສີໃຫ້ມີຄວາມຈະແຈ້ງ, ກະທັດຮັດ, ວ່ອງໄວເປັນໄປໃນລວງດຽວກັນ ແລະ ມີຄວາມທັນສະໄໝງ່າຍຂຶ້ນຕໍ່ການຈັດຕັ້ງປະຕິບັດ, ເພື່ອແນ່ໃສ່ຫຼຸດຜ່ອນສິ່ງກີດຂວາງທາງດ້ານການຄ້າຕໍ່ການດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າ, ໂດຍທົ່ວໄປແມ່ນພົວພັນເຖິງການຈັດຕັ້ງປະຕິບັດລວມທັງການນຳໃຊ້ເຕັກໂນໂລຊີ, ຂໍ້ມູນຂ່າວສານເຂົ້າໃນການເຜີຍແຜ່ຂໍ້ມູນຂ່າວສານທາງດ້ານການຄ້າ ແລະ ຫຼຸດຜ່ອນຂັ້ນຂອດ.

ສສ ຫວຽດນາມ ເປັນປະເທດຄູ່ຄ້າລາຍໃຫຍ່ຂອງ ສປປ ລາວ. ສະນັ້ນ, ການພົວພັນທາງດ້ານການຄ້າແມ່ນໄດ້ຮັບການພັດທະນາ ແລະ ມີຈັງຫວະການຂະຫຍາຍຕົວດີພໍສົມຄວນ, ນອກນັ້ນນະໂຍບາຍດ້ານສິດທິພິເສດທາງດ້ານການຄ້າກໍ່ເປັນປັດໃຈໜຶ່ງ ທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວພົວພັນການຄ້າລະຫວ່າງສອງ ຊາດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະແມ່ນ ບັນດາຫົວໜ່ວຍທຸລະກິດພາຍໃນແຂວງຄຳມ່ວນກັບຫົວໜ່ວຍທຸລະກິດຂອງ ແຂວງກວາງບິ່ງ ສສ ຫວຽດນາມ ກໍ່ໄດ້ເປັນຄູ່ຄ້າກັນມາແຕ່ດົນນານ ຈຶ່ງສະດວກໃນການຊອກຫາຄວາມເປັນເອກກະພາບ ໃນການດຳເນີນທຸລະກິດສອງຝ່າຍ, ເຊິ່ງສະແດງໃຫ້ເຫັນກ່ຽວກັບການຮ່ວມມືພັດທະນາການຄ້າຊາຍແດນ ແລະ ຕະຫຼາດນັດຊາຍແດນ ເພື່ອຍົກສູງຊີວິດການເປັນຢູ່ຂອງປະຊາຊົນສອງຊາດໃຫ້ດີຂຶ້ນເທື່ອລະກ້າວ.

## II. ການຮ່ວມມືທາງດ້ານການຄ້າ ແລະ ການລົງທຶນກັບ ສສ ຫວຽດນາມ

### 1. ດ້ານການຄ້າ.

ໃນການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ VIII ມາຮອດປະຈຸບັນ, ເຊິ່ງໄດ້ປະກອບສ່ວນໃນການເພີ່ມທະວີການພົວພັນເສດຖະກິດສັງຄົມເວົ້າລວມລະຫວ່າງສອງປະເທດ, ເວົ້າສະເພາແມ່ນໄດ້ປະກອບສ່ວນເຂົ້າໃນການແລກປ່ຽນ ຊື້-ຂາຍ ສິນຄ້າຜ່ານດ່ານຊາຍແດນສອງແຂວງ.

ສອງຝ່າຍໄດ້ເອົາໃຈໃສ່ຕັ້ງໜ້າ ເພື່ອຈັດຕັ້ງປະຕິບັດໂຄງການພັດທະນາການຄ້າ ລາວ-ຫວຽດນາມ ໃນໄລຍະ 2009-06 ເດືອນຕົ້ນປີ 2014. ເຖິງແມ່ນວ່າຈະໄດ້ຮັບຜົນສະທ້ອນທາງດ້ານວິກິດການຕ່າງໆ ທັງພາຍໃນ ແລະ ພາຍນອກແຕ່ການພົວພັນການຄ້າ ລາວ-ຫວຽດນາມ ພັດມີທ່າອ່ຽງຂະຫຍາຍຕົວດີຂຶ້ນຕາມລຳດັບສະແດງອອກດັ່ງນີ້:

ການສົ່ງອອກສິນຄ້າສຳລັບແຂວງຄຳມ່ວນເປັນຕົ້ນແມ່ນ: ການສົ່ງອອກຜະລິດຕະພັນໄມ້, ໄມ້ປູກ,ຢາງພາລາ,

ຫີນກາວ, ແຮ່ກົ່ວ, ແຮ່ເຫຼັກ, ເກືອກາລີ ແລະ ແຮ່ທາດອື່ນໆ ນອກນັ້ນຍັງມີສິນຄ້າກະສິກຳເຊັ່ນ: ເຂົ້າສານ, ເຄື່ອງປ່າຂອງດົງ, ເຄື່ອງຫັດຖະກຳ ແລະ ອື່ນໆ.

ການພົວພັນການຄ້າສອງຝ່າຍ ໃນໄລຍະ 2009-06 ເດືອນຕົ້ນປີ 2014 ສສ ຫວຽດນາມ ມີມູນຄ່າການສົ່ງອອກເຖິງ 205,151,151.74 ໂດລາ, ກວມອັດຕາສ່ວນ 50.01 % ຂອງມູນຄ່າສົ່ງອອກທັງໝົດ, ຕໍ່ມາແມ່ນປະເທດຈີນມີມູນຄ່າການສົ່ງອອກເຖິງ 131,477,686.11 ໂດລາ, ກວມອັດຕາສ່ວນ 32.05 % ຂອງມູນຄ່າສົ່ງອອກ, ໄທມີມູນຄ່າ 33,877,609.15 ໂດລາ, ກວມອັດຕາສ່ວນ 8.25 % ຂອງມູນຄ່າສົ່ງອອກ ແລະ ປະເທດອື່ນໆ ອີກປະມານ 9.67%.

ຕົວເລກການນຳເຂົ້າ ແລະ ສົ່ງອອກສິນຄ້າຜ່ານດ່ານສາກົນ (ນາເພົ້າ-ຈາລໍ່) ໃນ5 ປີຜ່ານມາ (ນັບແຕ່ປີ 2009-06 ເດືອນຕົ້ນປີ 2014) ມີລາຍລະອຽດລຸ່ມນີ້:

- <u>ການສົ່ງອອກສິນຄ້າ.</u>

➢ ມູນຄ່າສົ່ງອອກສິນຄ້າທັງໝົດ = 205,151,151.74 $

+ ສົ່ງອອກຕາມແຜນດຸ່ນ = 62,433,584.94 $

+ ສົ່ງອອກນອກແຜນດຸ່ນ = 142,717,566.80 $

- <u>ການນຳເຂົ້າສິນຄ້າ.</u>

➢ ມູນຄ່າສິນຄ້າຂາເຂົ້າທັງໝົດ = 565,877,682.20 $

+ ນຳເຂົ້າຕາມແຜນ = 331,921,540.73 $

+ ໂຄງການນຳເຂົ້າຍົກເວັ້ນພາສີ = 155,149,026.93 $

+ ໂຄງການນຳເຂົ້າ 1 % = 14,632,206.61 $

+ ນຳເຂົ້ານອກແຜນ = 64,174,907.93 $

- ສິນຄ້າຜ່ານແດນ ແລະ ຂາອອກຕໍ່.

➢ ມູນຄ່າສິນຄ້າຜ່ານແດນທັງໝົດ = 884,459,861.94 $

+ ມູນຄ້າສິນຄ້າຜ່ານແດນ ປະເທດໄທ ໄປ ສສ ຫວຽດນາມ = 279,784,925.21 $

+ ມູນຄ້າສິນຄ້າຜ່ານແດນ ສສ ຫວຽດນາມ ໄປ ປະເທດໄທ = 604,674,936.73 $

- ການນຳເຂົ້າ ແລະ ສົ່ງອອກສິນຄ້າຜ່ານດ່ານທ້ອງຖິ່ນ.

➢ ມູນຄ່າສົ່ງອອກທັງໝົດ = 1,042,765.00 $

- ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (CO).

➢ ມູນຄ່າສົ່ງອອກສິນຄ້າທັງໝົດ = 199,386,969.76 $

+ Form A = 641,001.33 $

+ Form D = 78,299,839.01$

+ Form S = 120,446,129.41$

2. ດ້ານການລົງທຶນ.

ເພື່ອເປັນການດຶງດູດເອົານັກລົງທຶນຈາກ ສສ ຫວຽດນາມ ເຂົ້າມາລົງທຶນໃນສາຂາວິຊາຊີບຕ່າງໆ ພາຍໃນປະເທດເວົ້າລວມ, ເວົ້າສະເພາະແມ່ນແຂວງຄຳມ່ວນ ໃຫ້ນັບມື້ຫຼາຍຂຶ້ນ. ພັກ ແລະ ລັດຖະບານຕະຫຼອດເຖິງອຳນາດການປົກຄອງທຸກຂັ້ນໄດ້ພະຍາຍາມທຸກວິທີທາງເພື່ອວາງລະບຽບການ, ນະໂຍບາຍຕ່າງໆ ເພື່ອອຳນວຍຄວາມສະດວກຕໍ່ກັບແມ່ນທຸລະກິດທັງພາຍໃນ ແລະ ຕ່າງປະເທດ, ທັງນີ້ກໍ່ເພື່ອເປັນການສົ່ງເສີມການຜະລິດພາຍໃນໃຫ້ນັບມື້ຂະຫຍາຍຕົວສາມາດຕອບສະໜອງຕະຫຼາດພາຍໃນ ແລະ ສາມາດສົ່ງອອກຂາຍຕ່າງປະເທດ ໃຫ້ນັບມື້ຫຼາຍຂຶ້ນ. ທາງນະຫາພາກກໍ່ຄືພະແນກ ອຄຂ ກໍ່ໄດ້ເອົາໃຈໃສ່ຢ່າງແທ້ຈິງເພື່ອກະຕຸກຊຸກຍູ້ຫົວໜ່ວຍທຸລະກິດພາຍໃນ, ພ້ອມທັງເປັນການຊອກຫາຕະຫຼາດອັນແນ່ນອນ ເພື່ອສ້າງທຸກເງື່ອນໄຂອັນເອື້ອອຳນວຍໃຫ້ແກ່ທຸລະກິດໄດ້ເຄື່ອນໄຫວຢ່າງຕໍ່ເນື່ອງ ແລະ ມີປະສິດທິຜົນ ເພື່ອສ້າງຂີດຄວາມສາມາດໃນການແຂ່ງຂັນດ້ານການຄ້າກັບຫົວໜ່ວຍທຸລະກິດຕ່າງປະເທດ. ສະນັ້ນ, ຜ່ານການຈັດຕັ້ງປະຕິບັດຜ່ານມາຈຶ່ງສາມາດສະຫຼຸບລວມໄດ້ບາງບັນຫາດັ່ງລຸ່ມນີ້:

- ການລົງທຶນຮູບແບບສຳປະທານ(ພະແນກແຜນການ ແລະ ການລົງທຶນແຂວງເປັນຜູ້ອະນຸຍາດ ) ແລະ ລົງທຶນທົ່ວໄປ(ພະແນກ ອຄຂ ເປັນຜູ້ອະນຸຍາດ) ຂອງ ສສ ຫວຽດນາມ ແຕ່ຕົ້ນເຖິງປະຈຸບັນມີທັງໝົດ 38 ຫົວໜ່ວຍ, ມີທຶນຈົດທະບຽນທັງໝົດ 3,439,489,506,700 ກີບ ແລະ 431,130,094.00 ໂດລາ.
- ໄດ້ຈັດ ແລະ ເຂົ້າຮ່ວມງານຕະຫຼາດນັດວາງສະແດງສິນຄ້າ:
+ ໄດ້ຈັດງານຕະຫຼາດນັດ ແລະ ວາງສະແດງສິນຄ້າ ພາຍໃນແຂວງທັງໝົດ 9 ຄັ້ງ, ມີຫ້າງຮ້ານເຂົ້າຮ່ວມ 2,124 ຮ້ານ, ມູນຄ່າ 34,617,796,000 ກີບ.
+ ໄດ້ເຂົ້າຮ່ວມງານຕະຫຼາດນັດ ແລະ ວາງສະແດງສິນຄ້າຢູ່ ສສ ຫວຽດນາມ 4 ຄັ້ງ, ມີ 21 ຫົວໜ່ວຍ, ມີມູນຄ່າ 3,647,500,000 ກີບ.
+ ໄດ້ໄປຖອດຖອນບົດຮຽນກ່ຽວກັບວຽກງານອຸດສາຫະກຳ ແລະ ການຄ້າ ກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງກວາງບິ່ງ ສສ ຫວຽດນາມ 1 ຄັ້ງ.

**III. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ພາກສະເໜີ ແລະ ທິດທາງແຜນການ.**

**1. ຂໍ້ສະດວກ.**

- ຍ້ອນມີສາຍພົວພັນມິດຕະພາບແບບພິເສດ, ຄວາມຮັກແພງສາມັກຄີ ແລະ ນ້ຳໃຈເຊີດຊູຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຂອງສອງຊາດ ລາວ-ຫວຽດນາມ ທີ່ມີມາແຕ່ດົນນານແລ້ວ ເວົ້າລວມ, ເວົ້າສະເພາະ ແຂວງຄຳມ່ວນກັບແຂວງທີ່ມີຊາຍແດນຕິດຈອດກັນຄື: ແຂວງກວາງບິ່ງ ແລະ ບັນດາແຂວງທີ່ໃກ້ຄຽງກໍ່ໄດ້ມີສາຍພົວພັນແບບພິເສດ ເພື່ອຮ່ວມກັນພັດທະນາເສດຖະກິດ-ສັງຄົມ ຢ່າງຕັ້ງໜ້າ ແລະ ຍາດມາໄດ້ຜົນສຳເລັດ ພ້ອມປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.
- ຍ້ອນບັນດານະໂຍບາຍທາງດ້ານການຄ້າ, ກົນໄກດ້ານບູລິມາສິດດ້ານການຄ້າ ຈຶ່ງເປັນສິ່ງອຳນວຍຄວາມສະດວກສູງສຸດຕໍ່ການເຄື່ອນໄຫວດຳເນີນທຸລະກິດຫົວໜ່ວຍທຸລະກິດສອງຊາດ.
- ບັນດາຫົວໜ່ວຍທຸລະກິດກໍ່ໄດ້ມີການພົວພັນແລກປ່ຽນ ຊື້-ຂາຍ ສິນຄ້ານຳກັນຢ່າງປົກກະຕິ ແລະ ເປັນຄູ່ຮ່ວມຄ້າກັນມາແຕ່ດົນນານ.

- ຍ້ອນກຳລັງການຜະລິດເປັນສິນຄ້າເພື່ອສົ່ງອອກຂອງພາຍໃນຍັງຈຳກັດ, ເນື່ອງຈາກວ່າແຂວງຄຳມ່ວນ ຍັງບໍ່ມີໂຮງງານປຸງແຕ່ງລັກຊະນະສ້າງວິຊາຊີບຕ່າງໆ ແບບຖາວອນບໍ່ສາມາດຂຸດຄົ້ນໄດ້ທ່າແຮງອັນບົ່ມຊ້ອນໄດ້ດີເທົ່າທີ່ຄວນ ເພື່ອຜະລິດເປັນສິນຄ້າ ເພື່ອສົ່ງອອກຕ່າງປະເທດກໍ່ຄື ສສ ຫວຽດນາມ.

- ບັນດາຫົວໜ່ວຍທຸລະກິດພາຍໃນຍັງດຳເນີນທຸລະກິດແຕ່ຂາເຂົ້າເປັນສ່ວນໃຫຍ່ ໂດຍບໍ່ຄຳນຶງເຖິງການຜະລິດສິນຄ້າເພື່ອສົ່ງອອກ ຫຼື ສົ່ງອອກ ກໍ່ສົ່ງອອກເປັນປະເພດວັດຖຸດິບ. ສະນັ້ນ, ການສ້າງມູນຄ່າການສົ່ງອອກ ໂດຍລວມແລ້ວແມ່ນຍັງພົບຂໍ້ຫຍຸ້ງຍາກຫຼາຍສົມຄວນ.

- ບັນດາຫົວໜ່ວຍທຸລະກິດພາຍໃນຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບການນຳໃຊ້ລະບົບສິດທິພິເສດທາງດ້ານການຄ້າເດັ່ນສ່ວນ ແລະ ຄວາມອາດສາມາດໃນການສ້າງສຳລະສະສາງຍັງນອກລະບົບ ຈຶ່ງສົ່ງຜົນກະທົບຕໍ່ການເຄື່ອນໄຫວດຳເນີນທຸລະກິດຂາເຂົ້າ-ຂາອອກ.

- ເສັ້ນທາງເລກທີ 12 ໃນການຈໍລະຈອນສິນຄ້າໃນໄລຍະປະຈຸບັນແມ່ນຖືກເປ່ເພຫຼາຍ, ມີຄວາມຄັບແຄບ, ບາງຄັ້ງມີອຸບັດຕິເຫດເກີດ ຂຶ້ນໄດ້ເຮັດໃຫ້ການຄົມມະນາຄົມຂົນສົ່ງສິນຄ້າຢຸດສະງັດປະມານ 1-2 ວັນ.

3. ຂໍ້ສະເໜີ.

- ສະເໜີປະເທດຫວຽດນາມ ຫຼຸດຜ່ອນອັດຕາພາສີໃຫ້ເປັນ 0% ສຳລັບທຸກໆ ລາຍການສິນຄ້າທີ່ມີແຫຼ່ງກຳເນີດຢູ່ ສປປ ລາວ ທີ່ຕ້ອງການນຳເຂົ້າ ສສ ຫວຽດນາມ.

ສະເໜີປະເທດຫວຽດນາມ ເປີດກ້ວາງຕະຫຼາດພາຍໃນ ເພື່ອຮັບຮອງສິນຄ້າຈາກ ສປປ ລາວ ເຂົ້າໄປຈຳໜ່າຍໃນປະເທດ ສສ ຫວຽດນາມ ເປັນຕົ້ນ: ຊີ້ນໝູ, ເຂົ້າ, ຢາງພາລາ, ມັນຕົ້ນ ແລະ ບາງລາຍການສິນຄ້າທີ່ ສປປ ລາວ ສາມາດຜະລິດໄດ້, ພ້ອມທັງສ້າງທຸກເງື່ອນໄຂ ເພື່ອອຳນວຍຄວາມສະດວກໃຫ້ແກ່ສິນຄ້າຂອງ ສປປ ລາວ ໃຫ້ມີການແລກປ່ຽນຊື້-ຂາຍ ໃນທ້ອງຕະຫຼາດຂອງ ສສ ຫວຽດນາມ.

- ສະເໜີໃຫ້ຝ່າຍ ສສ ຫວຽດນາມ ປຸກລະດົມ, ຊຸກຍູ້ນັກທຸລະກິດພາກລັດ ແລະ ພາກເອກະຊົນ ເພື່ອເຂົ້າມາລົງທຶນຢູ່ແຂວງຄຳມ່ວນ ເປັນຕົ້ນແມ່ນທາງດ້ານການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ ໃຫ້ນັບມື້ນັບຫຼາຍຂຶ້ນ ໂດຍສະເພາະແມ່ນເຂດເສດຖະກິດສະເພາະທ່າແຂກ(ສົ້ນຂວາມິດຕະພາບ III ມີເນື້ອທີ່ 1,035 ເຮັກຕາ), ເຂດເສດຖະກິດພູຂຽວ, ເຂດນິຄົມອຸດສາຫະກຳຈຸດສຸມລົງຄັງ ເມືອງບົວລະພາ(ປະຈຸບັນຢູ່ໃນຂັ້ນຕອນປັກຫຼັກໝາຍເຂດແດນມີເນື້ອທີ່ທັງໝົດ 600 ເຮັກຕາ. ໃນນັ້ນ, ມີເຂດນິຄົມອຸດສາຫະກຳ 300 ເຮັກຕາ, ມີເຂດການຄ້າຊາຍແດນ 300 ເຮັກຕາ).

- ສະເໜີໃຫ້ຝ່າຍ ສສ ຫວຽດນາມ ຊ່ວຍເຫຼືອ ສປປ ລາວ ໃນການຈັດຝຶກອົບຮົມວິຊາການ ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອສ້າງເປັນນັກວິຊາການຊຳນານງານ ເພື່ອກຽມຄວາມພ້ອມໃນການກ້າວເຂົ້າສູ່ປະຊາຄົມອາຊຽນ(AEC)ເປັນຕົ້ນແມ່ນ:

1. ການຝຶກອົບຮົມ ກ່ຽວກັບການສົ່ງເສີມການຜະລິດເປັນສິນຄ້າເປັນຕົ້ນດ້ານອຸດສາຫະກຳປຸງແຕ່ງ, ການຜະລິດກະສິກຳ ແລະ ອື່ນໆ ໂດຍນຳໃຊ້ສີມືແຮງງານພາຍໃນ ແລະ ວັດຖຸດິບ ພາຍໃນ ເພື່ອຈຳກັດການສົ່ງອອກວັດຖຸດິບໃຫ້ໜ້ອຍລົງເທື່ອລະກ້າວ.

2. ໃນການຈັດຝຶກອົບຮົມວິຊາການຂະແໜງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການຈັດລຸນນະພາບສິນຄ້າ.

3. ຝຶກອົບຮົມເພື່ອສ້າງຂີດຄວາມສາມາດດ້ານວິຊາການຂອງພະນັກງານຂະແໜງອຸດສາຫະກຳ ແລະ ການຄ້າ.

4. ສະເໜີຝ່າຍ ທວຽດນາມ ຊ່ວຍພິຈາລະນາ ແລະ ອະນຸຍາດໂຄຕ້ານໍາເຂົ້າ ເຂົ້າຂອງ ສປປ ລາວ ໃນແຕ່ລະປີ ໃຫ້ວ່ອງໄວ ແລະ ທັນສະພາບການ ເພື່ອອໍານວຍຄວາມສະດວກແກ່ທຸລະກິດ ຂອງ ສປປ ລາວ.

- ສະເໜີຂັ້ນເທິງໃຫ້ມີການກໍານົດຄວາມໄວຂອງພະຫະນະຂົນສົ່ງທຸກຊະນິດ, ຈໍາກັດນໍ້າໜັກ, ອັນເປັນສາເຫດໃຫ້ເສັ້ນທາງເປ່ເພ ແລະ ເກີດອຸປະຕິເຫດ.

4. ທິດທາງແຜນການໃນຕໍ່ໜ້າ.

- ປະສານສົມທົບຄະນະຮັບຜິດຊອບຂອງແຂວງກະກຽມຕ້ອນຮັບຄະນະນໍາຂັ້ນແຂວງ ແລະ ພະແນກອຸດສາຫະກໍາ ແລະ ການຄ້າແຂວງກວາງບິ່ງ ໃນປີ 2015.

- ສືບຕໍ່ປາງແຂງແຮງເພື່ອປຸກລະດົມບັນດາແຂວງທີ່ມີແນວຊາຍແດນຕິດຈອດກັນ ເພື່ອລະດົມນັກທຸລະກິດເຂົ້າມາລົງທຶນໃນແຂວງຄໍາມ່ວນ.

- ສືບຕໍ່ປະສານສົມທົບກັບອົງການຄຸ້ມຄອງມະຫາພາກຂອງ ສສ ຫວຽດນາມ ເພື່ອສ້າງທຸກເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການດໍາເນີນທຸລະກິດທາງດ້ານການຄ້າສອງປະເທດ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງ ທ່ານ ເພື່ອຊາບ ແລະ ມີທິດຊີ້ນໍາໃນການຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ.

ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ ແຂວງຄໍາມ່ວນ

ພະແນກ ອຸດສາຫະກໍາ ແລະ ການຄ້າ

ບຸນໄທ ລອດທ້ານເພັງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ພະແນກອຸດສາຫະກຳ ແລະການຄ້າ

ຂະແໜງການນຳເຂົ້າ ແລະສົ່ງອອກ

# ບົດສະຫຼຸບ

## ການຈັດຕັ້ງປະຕິບັດວຽກງານຕະຫຼາດຊາຍແດນ ແລະ ການຄ້າຊາຍແດນ ລາວ- ຫວຽດນາມ ໄລຍະ 05ປີ ແຕ່ສົກປີ 2010-2014

### I. ສະພາບລວມການນຳເຂົ້າ ແລະສົ່ງອອກ.

ເອົາໃຈໃສ່ຄຸ້ມຄອງການເຄື່ອນໄຫວຂອງບັນດາຫົວໜ່ວຍທຸລະກິດ ທັງພາຍໃນ ແລະ ຕ່າງປະເທດໃຫ້ດຳເນີນໄປຢ່າງຖືກຕ້ອງ ແລະສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ, ການພົວພັນການຄ້າຊາຍແດນລະຫວ່າງລາວ-ຫວຽດນາມ ໃນໄລຍະ 05 ປີຜ່ານມາ ແຕ່ສົກປີ 2010-2014 ພໍ່ແມ່ປະຊາຊົນ ກໍ່ຄືພໍ່ຄ້າຊາວຊາຍທີ່ອາໃສຢູ່ລຽບຕາມແຄມຊາຍແດນ ແມ່ນໄດ້ມີການພົວພັນແລກປ່ຽນ ຊື້-ຂາຍ ນຳກັນ ຢ່າງເປັນປົກກະຕິ ຄືດັ່ງທີ່ເຄີຍໄດ້ປະຕິບັດຜ່ານມາ, ເບື້ອງນະໂຍບາຍຕໍ່ການນຳເຂົ້າ ແລະສົ່ງອອກສິນຄ້າ ພາກລັດເຮົາແມ່ນໄດ້ອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການທຸກຢ່າງເພື່ອໃຫ້ການນຳເຂົ້າ-ສົ່ງອອກມີຄວາມສະດວກ-ຄ່ອງຕົວ ໂດຍປະຕິບັດຕາມແຈ້ງການ ເລກທີ 0076/ອຄ.ກຂອ ລົງວັນທີ 13.01.2012 ວ່າດ້ວຍລາຍການ ສິນຄ້າທີ່ຕ້ອງຂໍອະນຸຍາດນຳເຂົ້າ ຫຼືສົ່ງອອກແບບອັດຕະໂນມັດ ແລະແບບບໍ່ອັດຕະໂນມັດ ແມ່ນຜູ້ປະກອບການ ສາມາດດຳເນີນການປະກອບເອກະສານຕາມຂັ້ນຕອນ ລະບຽບການທີ່ກ່ຽວຂ້ອງ ແລ້ວແຈ້ງຕໍ່ເຈົ້າໜ້າທີ່ ພາສີ ໄດ້ເລີຍ. ສ່ວນການຄຸ້ມຄອງການອອກອະນຸຍາດໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມCO) ໂດຍປະຕິບັດຕາມຂໍ້ຕົກລົງເລກທີ 2387/ອຄ.ກຂອ ລົງວັນທີ 15/12/2011 ວ່າດ້ວຍການມອບສິດໃຫ້ສະພາການຄ້າ ແລະອຸດສາຫະກຳ ແຫ່ງຊາດລາວ ອອກ ແລະຄຸ້ມຄອງໃບຢັ້ງ ຢືນແຫຼ່ງກຳເນີດສິນຄ້າ, ພະແນກອຸດສາຫະກຳ ແລະການຄ້າແຂວງ ແລະສະພາການຄ້າ ແລະອຸດສາຫະກຳແຂວງ ຈຶ່ງໄດ້ມອບສິດ ແລະແບ່ງຂັ້ນຄຸ້ມຄອງກັນດັ່ງນີ້:

- ຟອມ A, S, D, AI, APTA, DFTP ແມ່ນພະແນກອຸດສາຫະກຳ ແລະການຄ້າ ເປັນຜູ້ຄຸ້ມຄອງ ແລະອອກອະນຸຍາດ.
- ຟອມ AJ, AK, E, SPT, AANZ, CO KOREA ແມ່ນສະພາອຸດສາຫະກຳ ແລະການຄ້າແຂວງ ເປັນຜູ້ຄຸ້ມຄອງ ແລະອອກອະນຸຍາດ.

ພິເສດສຳຫຼັບ ຟອມA ຖ້າແມ່ນ "NON WO" ແມ່ນຕ້ອງໄດ້ໄປຂໍອະນຸຍາດນຳກົມການນຳເຂົ້າ-ສົ່ງອອກ ພະແນກ CO ກະຊວງອຸດສາຫະກຳ ແລະການຄ້າ.

ໃນໄລຍະ 05 ປີຜ່ານມານີ້ (2010-2014) ມູນຄ່າການຄ້າລະຫວ່າງ ລາວ-ຫວຽດນາມ ສາມາດປະຕິບັດໄດ້ 1,279 **ລ້ານ ກວ່າໂດລາສະຫະລັດ (ໜຶ່ງຕື້ກວ່າ ໂດລາສະຫະລັດ)** ໃນນັ້ນມູນຄ່າການສົ່ງອອກສິນຄ້າເທົ່າກັບ 873 **ລ້ານ ກວ່າໂດລາສະຫະລັດ ໃນນັ້ນ ສິນຄ້າສົ່ງອອກປະເພດໄມ້ ມີມູນຄ່າ** 70,795,640 $, **ສິນຄ້າອຸດສາຫະກໍາ ມີມູນຄ່າ** 88,632,176 $, **ສິນຄ້າກະສິກໍາ ມີມູນຄ່າເທົ່າກັບ** 47,025,950 $, **ສິນຄ້າປະເພດແຮ່ທາດ ມີມູນຄ່າ** 385,906,049 $, **ໃນນັ້ນການສົ່ງອອກສິນຄ້າພາຍໃຕ້ສິດທິພິເສດ** ຟອມS ຈໍານວນ 451 ຊຸດ ມູນຄ່າ 8,844,619 ໂດລາສະຫະລັດ. ການນໍາເຂົ້າສິນຄ້າເທົ່າກັບ 405,416,182 $ **ໃນນັ້ນ ນໍ້າມັນເຊື້ອໄຟ ແລະອາຍແກັສ ມີມູນຄ່າ** 115,162,014 $, **ນໍາເຂົ້າຮັບໃຊ້ໂຄງການຕ່າງໆ ມີມູນຄ່າ** 85,930,688 $, **ສິນຄ້ານໍາເຂົ້າຮັບໃຊ້ພາຍໃນ ມີມູນຄ່າເທົ່າກັບ** 45,345,860 $ **(ສິນຄ້າທີ່ນໍາເຂົ້າມາຮັບໃຊ້ພາຍໃນສ່ວນໃຫຍ່ກໍ່ຍັງແມ່ນສິນຄ້າປະເພດເຄື່ອງອຸປະໂພກ-ບໍລິໂພກ, ເຄື່ອງໃຊ້ໄຟຟ້າ, ເຄື່ອງໃຊ້ສອຍປະຈໍາວັນ... ອື່ນໆ).**

**II.** <u>ຂໍ້ສະດວກ, ຂໍ້ຄົງຄ້າງ, ສິ່ງທ້າທາຍ ແລະແຜນການໃນຕໍ່ໜ້າ</u>

- ພາກລັດໄດ້ມີນະໂຍບາຍຢ່າງຊັດເຈນ ແລະ ຊີ້ນໍາຢ່າງໃກ້ສິດ ໂດຍສະເພາະແມ່ນໄດ້ມີລະບຽບການຕ່າງໆ ກ່ຽວກັບການສົ່ງເສີມວຽກງານການຄ້າຊາຍແດນ ຈຶ່ງເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບໝາກຜົນ ແລະມີການພັດທະນານັບມື້ນັບດີຂຶ້ນໄປເລື້ອຍໆ.
- ຍ້ອນປະຊາຊົນທີ່ອາໃສຢູ່ລຽບຕາມແຄມຊາຍແດນ ແຕ່ໃດ່ມາໄດ້ມີການພົວພັນການຄ້າຊື້ຂາຍນໍາກັນຢ່າງສະນິດແໜ້ນ ດັ່ງນັ້ນຈຶ່ງເຮັດໃຫ້ການຄ້າຂາຍແລກປ່ຽນສິນຄ້ານໍາກັນນັບມື້ນັບມີຄວາມສະດວກຍິ່ງຂຶ້ນ.
- ແຂວງສະຫວັນນະເຂດໄດ້ສ້າງສໍາເລັດຂົວມິດຕະພາບແຫ່ງທີ 2 ເຊິ່ງເຊື່ອມຕໍ່ທາງເລກ 09 ເຊິ່ງເປັນເສັ້ນທາງເຊື່ອມຕໍ່ອັນສໍາຄັນໃນການຂົນສົ່ງສິນຄ້າລະຫວ່າງໄທ-ລາວ-ຫວຽດນາມ.
- ຍ້ອນການຈັດຕັ້ງກອງທຶນກຸ່ມຍັງເຮັດບໍ່ທັນໄດ້ດີ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດກ່ຽວກັບວຽກງານສົ່ງເສີມຕົວຈິງຍັງເຮັດບໍ່ທັນໄດ້ເຕັມເມັດເຕັມໜ່ວຍເທົ່າທີ່ຄວນ.
- ໂຄງການສົ່ງເສີມການປູກມອນລ້ຽງມ້ອນ ທີ່ບ້ານ ໂພໄຊ ເມືອງເຊໂປນ.
- ໂຄງການສົ່ງເສີມຜະລິດຕະພັນ ຖັກຝອຍເຂັມທໍາມະຊາດ ທີ່ບ້ານລາດທໍ້ ເມືອງເຊໂປນ.
- ໂຄງການກໍ່ສ້າງຕະຫຼາດຊົນນະບົດ ເຂດຈຸດສຸມພັດທະນາລາດທໍ້ ເມືອງເຊໂປນ.
- ໂຄງການກໍ່ສ້າງຕະຫຼາດບ້ານດົງສະຫວັນ ເມືອງເຊໂປນ.

ນອກນັ້ນຍັງໄດ້ລົງເກັບກໍາຂໍ້ມູນຫ້າງຮ້ານຕ່າງໆເຂດບ້ານແດນສະຫວັນ ໄດ້ຈໍານວນຫ້າງຮ້ານທັງໝົດ 72 ຫ້າງຮ້ານ (ຫ້າງຮ້ານພາຍໃນຕະຫຼາດ ຈໍານວນ 55 ຫົວໜ່ວຍ, ຫ້າງຮ້ານນອກບໍລິເວນຕະຫຼາດ ຈໍານວນ 17 ຫົວໜ່ວຍ), ສ່ວນໃຫ່ຍແມ່ນປະຊາຊົນຊາວຕ່າງດ້າວເຄື່ອນໄຫວທຸລະກິດດັ່ງກ່າວ ເຊິ່ງກວມເຖິງ 76,39% **ຂອງຈໍານວນທັງໝົດ** ແລະນອກນັ້ນກໍ່ແມ່ນຫ້າງຮ້ານຂອງປະຊາຊົນໃນເຂດທ້ອງຖິ່ນ, ເຊິ່ງເຮັດໃຫ້ການຄ້າເຂດດັ່ງກ່າວ ມີການຂະຫຍາຍຕົວ ທາງດ້ານການຄ້າຊາຍແດນ ລາວ-ຫວຽດນາມ ນອກນັ້ນກໍ່ຈະໄດ້ລົງເກັບກໍາຂໍ້ມູນເພື່ອຂະຫຍາຍຕະຫຼາດຊາຍແດນແຫ່ງໃໝ່ຂື້ນອີກໃນອະນາຄົດ ຕາມຄວາມເໝາະສົມ. ສ່ວນວິສາຫະກິດ ບໍລິສັດ

ໂຮງງານຕ່າງໆ ທີ່ດຳເນີນກິດຈະການຢູ່ເຂດເມືອງເຊໂປນ ມີຈຳນວນທັງໝົດ 44 ຫົວໜ່ວຍ ໃນນັ້ນຈຳນວນ 18 ຫົວໜ່ວຍແມ່ນສ້າງຕັ້ງຂຶ້ນໃໝ່.

***♦ ຂໍ້ຄົງຄ້າງ :***

- ການສ້າງຕັ້ງກຸ່ມການຄ້າຊາຍແດນຍັງບໍ່ທັນເປັນລະບົບ, ສ່ວນໃຫຍ່ບໍ່ໄດ້ເປັນຜູ້ຄ້າເອງ ພຽງແຕ່ບໍລິການດ້ານເອກະສານ ຈຶ່ງເຮັດໃຫ້ການພັດທະນາລະບົບການຄ້າຊາຍແດນຊັກຊ້າ ແລະບໍ່ມີຈຸດສຸມເທົ່າທີ່ຄວນ.
- ກອງທຶນຂອງກຸ່ມຍັງບໍ່ທັນມີ ສະນັ້ນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການສົ່ງເສີມຕົວຈິງບໍ່ໄດ້ຮັບໝາກຜົນຢ່າງເຕັມເມັດເຕັມໜ່ວຍ.
- ຄວາມຮ່ວມມືດ້ານການພັດທະນາຕະຫຼາດສິນຄ້າກະສິກຳແປຮູບ ແລະ CONTRACT FARMING ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດເທື່ອ.
- ຜະລິດຕະພັນພາຍໃນສົ່ງອອກ ທາງດ້ານປະລິມານຍັງມີຈຳນວນຈຳກັດ ການແຂ່ງຂັນທາງດ້ານຄຸນນະພາບ ແລະຍາດແຍ່ງຕະຫລາດ ຍັງບໍ່ສູງຖ້າທຽບໃສ່ບັນດາປະເທດເພື່ອນບ້ານ.
- ກ່ຽວກັບການທັດສະນະສຶກສາ ເບິ່ງງານຕົວຈິງ ຫຼືການຈັດຝຶກອົບຮົມຕ່າງໆ . (ກ່ຽວກັບລະບົບການເຮັດວຽກຕົວຈິງຂອງພະແນກການ ອົງການ ໜ່ວຍງານ ຂອງລັດ ທີ່ກ່ຽວຂ້ອງ)
- ການແລກປ່ຽນຊື້ຂາຍສິນຄ້າຢູ່ຕາມຊາຍແດນຍັງມີລັກສະນະກະແຈກກະຈາຍ ສະນັ້ນ ຈຶ່ງເຮັດໃຫ້ການຄຸ້ມຄອງການຄ້ານອກລະບົບຍັງພົບຄວາມຫຍຸ້ງຍາກ.

ສະຫວັນນະເຂດ, ວັນທີ...04 ກັນຍາ 2014...

**ຫົວໜ້າຂະແໜງການນຳເຂົ້າ ແລະສົ່ງອອກ** | **ຜູ້ສະຫຼຸບ**

ພູໄຊຖະໜອມ ນາມມະຈັກ | ຈັນທະລັງສີ ແກ້ວມຸງຄຸນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

===000===

**ແຂວງຈຳປາສັກ**

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 1506 /ອຄ.ຈສ

ປາກເຊ, ວັນທີ 16.09.14

## ບົດລາຍງານ

ຮຽນ : - ທ່ານ ຫົວໜ້າຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ.

- ທ່ານ ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ.

ທີ່ນັບຖື ແລະ ຮັກແພງ

ເລື້ອງ : ຂໍລາຍງານການຮ່ວມມືພັດທະນາການຄ້າຊາຍແດນລາວ-ຫວຽດນາມ ລະຫວ່າງແຂວງຈຳປາສັກ ກັບ ສສ ຫວຽດນາມ.

- ອີງຕາມ ຂໍ້ຕົກລົງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ0035/ອຄ.ຈພງ, ລົງວັນທີ 06/01/2012 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ.
- ອີງຕາມ ແຈ້ງການ ຂອງຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2528/ຫອຄ.ກຂອ.ຊດ, ລົງວັນທີ 05 ກັນຍາ 2014.

ພະແນກອຸດສາຫະກຳ ແລະ ການຄ້າແຂວງຈຳປາສັກ ຂໍຮຽນລາຍງານມາຍັງທ່ານ ກ່ຽວກັບການຮ່ວມມືພັດທະນາການຄ້າຊາຍແດນລາວ-ຫວຽດນາມ ກໍ່ຄືແຂວງຈຳປາສັກ ກັບບັນດາແຂວງພາກກາງ ແລະ ພາກໃຕ້ ຂອງສສ ຫວຽດນາມ.

ແຂວງຈຳປາສັກ ບໍ່ມີຊາຍແດນຕິດຈອດກັບ ສສ ຫວຽດນາມ ແຕ່ກໍ່ໄດ້ມີການພົວພັນຮ່ວມມືລະຫວ່າງພາກລັດ ແລະ ມີແລກປ່ຽນຊື້-ຂາຍ ລະຫວ່າງຫົວໜ່ວຍທຸລະກິດ ທັງສອງຝ່າຍ ຢ່າງສະໝໍ່າສະເໝີ.

ໃນປີ 2011 ພະແນກອຸດສາຫະກຳ ແລະ ການຄ້າແຂວງ ໄດ້ນຳພາກລັດ ແລະ ຫົວໜ່ວຍທຸລະກິດ ໄປພົບປະ ແລະ ເຮັດວຽກຮ່ວມກັບພະແນກອຸດສາຫະກຳ ແລະ ການຄ້າແຂວງບິ່ງດິ້ງ, ແຂວງກວາງຫງາຍ, ແຂວງກວາງນາມ, ນະຄອນດານັງ, ແຂວງດັກລັກ ແລະ ແຂວງບົ່ງເຢິງ ຂອງສສ ຫວຽດນາມ ຊຶ່ງໄດ້ມີບົດບັນທຶກຊ່ວຍຈຳກ່ຽວກັບການຮ່ວມມືພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ ລະຫວ່າງ2ພະແນກ ຈຳນວນ 6ສະບັບ, ບົດບັນທຶກຊ່ວຍຈຳພົວພັນຮ່ວມມືພັດທະນາກາເຟ ລະຫວ່າງສະມາຄົມກາເຟລາວ ກັບສະມາຄົມກາເຟແຂວງດັກລັກ, ບົດບັນທຶກຊ່ວຍຈຳພົວພັນຮ່ວມມືທຸລະກິດຮ່ວມກັນ ລະຫວ່າງທຸລະກິດ ທັງສອງຝ່າຍ ຈຳນວນ 8ສະບັບ, ການພົບ

ປະ ແລະ ເຮັດວຽກໃນຄັ້ງນັ້ນ ແມ່ນໄດ້ມີການແລກປ່ຽນບົດຮຽນ ເຫັນໄດ້ວ່າ ສສ ຫວຽດນາມ ມີບົດຮຽນຫລາຍໃນການຄຸ້ມຄອງວຽກງານອຸດສາຫະກຳ ແລະ ການຄ້າ ໃນພື້ນຖານກົນໄກເສດຖະກິດຕະຫລາດສັງຄົມນິຍົມ ເຊິ່ງພະຫາພາກຈະບໍ່ແຊກແຊງເຂົ້າໃນກົນໄກເສດຖະກິດຕະຫລາດຈະເປີດໂອກາດໃຫ້ບັນດາຫົວໜ່ວຍທຸລະກິດ ເປັນຜູ້ກຳນົດ ແລະ ຮັບຜິດຊອບຕໍ່ຜົນການຂອງ ການດຳເນີນທຸລະກິດຂອງຕົນ, ບັນດາວິສາຫະກິດຂອງລັດ ສາມາດເປັນຕົວແທນໃຫ້ແກ່ມະຫາພາກ ເຮັດໜ້າທີ່ ໃນການດັດສົມກົນໄກຕະຫລາດ ເປັນເຈົ້ານຳໜ້າພາທາງ ຂອງທຸລະກິດອື່ນໆ, ເຫັນໄດ້ຄວາມສາມາດຂອງ ຫວຽດນາມ ໃນການຫັນກົນໄກເສດຖະກິດ ຂອງຕົນສາມາດເຊື່ອມໂຍງເຂົ້າກັບສາກົນ ແລະ ຫັນເປັນອຸດສາຫະກຳທັນສະໄໝ ໄດ້ດີ ສິ່ງເຫລົ່ານັ້ນ ແມ່ນບົດຮຽນທີ່ລາວເຮົາຄວນໄດ້ມີການສຶກສາຢ່າງລະອຽດ ແລະ ອາດຈະນຳມາເປັນຕົວແບບນຳໃຊ້ໃນ ສປປລາວ ໃຫ້ເກີດມີປະສິດທິຜົນສູງສຸດ.

ໃນໄລຍະແຕ່ປີ2010 ຫາ 2013 ທີ່ຜ່ານມາແຂວງຈຳປາສັກ ໄດ້ນຳພາຫົວໜ່ວຍທຸລະກິດ ເຂົ້າຮ່ວມງານວາງສະແດງ ແລະ ຈຳໜ່າຍສິນຄ້າຢູ່ພາກກາງ ແລະ ພາກໃຕ້ ຂອງ ສສ ຫວຽດນາມ ໄດ້ຈຳນວນ 07ຄັ້ງ.

ໃນປີ 2014 ພະແນກອຸດສາຫະກຳ ແລະ ການຄ້າ ໄດ້ຕາງໜ້າແຂວງ ເພື່ອເຂົ້າຮ່ວມງານວາງສະແດງ ຢູ່ ສສ ຫວຽດນາມ ຈຳນວນ 01ຄັ້ງ ຄື : ງານຕະຫລາດນັດສາກົນ, ການທ່ອງທ່ຽວ ແລະ ການລົງທຶນ ຕາມແລວເສດຖະກິດຕາເວັນອອກ-ຕາເວັນຕົກ ທີ່ນະຄອນ ດານັງ ການເຂົ້າຮ່ວມງານວາງສະແດງໃນຄັ້ງນີ້ ແຂວງຈຳປາສັກ ໄດ້ນຳເອົາຜະລິດຕະພັນກະສິກຳ ທີ່ເປັນທ່າແຮງຂອງແຂວງ ດັ່ງຕໍ່ແມ່ນສິນຄ້າທີ່ນອນໃນໄຖງານ ຄອນເທັກ ຟາມມິງ ເຊັ່ນ : ຜັກກະລ່ຳ, ຜັກກາດຂາວ ແລະ ພືດຜັກອື່ນໆ ຈຳນວນໜຶ່ງ ເຂົ້າຮ່ວມງານວາງສະແດງດັ່ງກ່າວ ຊຶ່ງສາມາດ ດຶງດູດຄວາມສົນໃຈ ຈາກຜູ້ທີ່ເຂົ້າມາທ່ຽວຊົມພາຍໃນງານ ໄດ້ເປັນຢ່າງດີ ໂດຍສະເພາະຜະລິດຕະພັນເຂົ້າໜຽວ, ສາລີ, ມັນຕົ້ນ ແລະ ຖົ່ວດິນ ແລະ ໃນໂອກາດນີ້ກໍ່ໄດ້ນຳພາກຸ່ມສະຫະກອນເກັບຊື້-ຜະລິດສິນຄ້າກະສິກາ ເມືອງບາຈຽງຈະເລີນສຸກ ເຂົ້າຮ່ວມເວທີພົບປະເຈລະຈາຈັບຄູ່ທຸລະກິດ ຊຶ່ງສາມາດຈັບຄູ່ທຸລະກິດ ຮ່ວມກັບ ບໍລິສັດ ດາຍຮ່າຍ ຈຳກັດ ( ນະຄອນດານັງ ) ແລະ ບໍລິສັດ ແທງເລີຍ ( ນະຄອນເຫ້ວ ); ການຈັບຄູ່ທຸລະກິດ ແມ່ນກ່ຽວກັບສິນຄ້າປະເພດກະສິກຳ ເຊັ່ນ : ມັນຕົ້ນແຫ້ງຜ່ານ, ລາລີລ້ຽງສັດ, ຖົ່ວດິນ, ຖົ່ວເຫລືອງ, ກ້ວຍນ້ຳຫວ້າ, ໝາກອຶ ແລະ ສິນຄ້າກະສິກຳອື່ນໆ.

* <u>ດ້ານດີ, ດ້ານອ່ອນ</u> :

+ ດ້ານດີ :

- ມີການຊີ້ນຳພາ ຈາກຄະນະພັກຂັ້ນເທິງ ໃນການຈັດຕັ້ງປະຕິບັດ.
- ໄດ້ຮັບຄວາມຮ່ວມມື ແລະ ນະໂຍບາຍຕ່າງໆ ຈາກຄະນະຮັບຜິດຊອບການຈັດງານ ຂອງຝ່າຍ ສສ ຫວຽດນາມ ເປັນຢ່າງດີ ໃນການເຂົ້າຮ່ວມງານໃນແຕ່ລະຄັ້ງ.
- ຂອດປະສານງານລະຫວ່າງສອງຝ່າຍ ມີຄວາມລະອຽດ, ຮອບຄອບ ຈຶ່ງເຮັດໃຫ້ຂອດການແຈ້ງເອກະສານ, ແຈ້ງສິນຄ້າເຂົ້າ-ອອກ ໃນແຕ່ລະຄັ້ງມີຄວາມສະດວກ, ວ່ອງໄວ.
- ເປັນການສ້າງເງື່ອນໄຂ ໃຫ້ຜູ້ປະກອບການ ໄດ້ມີໂອກາດຮຽນຮູ້ ໃນການພັດທະນາຜະລິດຕະພັນຂອງຕົນ ໃຫ້ຖືກຕາມຄວາມຕ້ອງການຂອງຕະຫລາດ ພ້ອມທັງມີປະສົບການ ໃນການແລກປ່ຽນຊື້-ຂາຍ ກັບທຸລະກິດຕ່າງປະເທດ.

+ ດ້ານອ່ອນ :

- ບັນດາຜະລິດຕະພັນ ທີ່ເຂົ້າຮ່ວມງານ ຍັງບໍ່ມີຄວາມຫລາກຫລາຍ ຈຶ່ງເຮັດໃຫ້ແຮງຈູງໃຈໃນການຊື້ ບໍ່ໄດ້ຕາມເປົ້າໝາຍ.
- ບັນດາຫົວໜ່ວຍທຸລະກິດ ສ່ວນໃຫ່ຍ ບໍ່ມີຄວາມຕື່ນຕົວ, ຍັງບໍ່ທັນມີຄວາມເຂົ້າໃຈເຖິງຜົນທີ່ຈະໄດ້ຮັບ ຈາກການເຂົ້າຮ່ວມງານຕະຫລາດນັດ ສ່ວນໃຫ່ຍຍັງຫວັງແຕ່ຜົນກຳໄລເທົ່ານັ້ນ.
- ງົບປະມານໃນການເຂົ້າຮ່ວມງານວາງສະແດງທັງພາຍໃນ ແລະ ຕ່າງປະເທດ ຍັງບໍ່ພຽງພໍກັບຄວາມຕ້ອງການ.

*<u>ບົດຮຽນທີ່ຖອດຖອນໄດ້</u> :

- ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ເປັນໃຈກາງ ໃນການນໍາພາຫົວໜ່ວຍທຸລະກິດ ເຂົ້າຮ່ວມງານວາງສະແດງຕ່າງໆ ຢ່າງເປັນປົກກະຕິ.
- ຫົວໜ່ວຍທຸລະກິດ ຕ້ອງເປັນເຈົ້າການ ແລະ ຕື່ນຕົວເຂົ້າຮ່ວມງານ ໃຫ້ຫລາຍຂຶ້ນ ເພື່ອຊອກຫາປະສົບການອັນໃໝ່ ໃນການແລກປ່ຽນຊື້-ຂາຍ.
- ຕ້ອງມີງົບປະມານສະເພາະ ໃນການຈັດງານ, ການເຂົ້າຮ່ວມທັງພາຍໃນ ແລະ ຕ່າງປະເທດ ໃນແຕ່ລະປີ.

ດັ່ງນັ້ນ, ຈຶ່ງຮຽນລາຍງານ ມາຍັງທ່ານ ເພື່ອຊາບ ແລະ ໃຫ້ທິດຊີ້ນໍາ ການຈັດຕັ້ງປະຕິບັດ ໃນຂັ້ນຕໍ່ໄປ.

ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ

ລີທັນ ແກ້ວພູວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໝໝໝໝໝໝໝໝໝ

ແຂວງເຊກອງ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 1023 / ອອ.ຄຄ.

ເຊກອງ, ວັນທີ 14 AUG 2014

# ບົດສະຫຼຸບ

## ການຈັດຕັ້ງປະຕິບັດເນື້ອໃນ ບົດບັນທຶກກອງປະຊຸມ ການຮ່ວມມືພັດທະນາ ການຄ້າຊາຍແດນລາວ - ຫວຽດນາມ ໃນ 05 ປີຜ່ານມາ ແລະແຜນການໃນ 05 ປີຕໍ່ໜ້າ.

ຮຽນ: ທ່ານ ຫົວໜ້າຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ທີ່ນັບຖືຢ່າງສູງ.

( ໂດຍຜ່ານກົມການນຳເຂົ້າ ແລະສົ່ງອອກ )

ເລື່ອງ: ລາຍງານສະພາບການ ຮ່ວມມືດ້ານການຄ້າ ແລະ ການລົງທຶນ ຂອງລາວ - ຫວຽດນາມ ແຕ່ປີ 2009 ເຖິງປະຈຸບັນ ແລະທິດທາງແຜນການ 05 ປີ ຕໍ່ໜ້າ.

-ອີງຕາມ: ຂໍ້ຕົກລົງ ສະບັບເລກທີ 0035 / ອຄ,ລົງວັນທີ 06/01/2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງ ພະແນກອຸດສາ ຫະກຳ ແລະການຄ້າແຂວງ ແລະນະຄອນຫຼວງ.

- ອີງຕາມ: ແຈ້ງການ ຂອງຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າສະບັບເລກທີ 2114 / ຫອຄ.ກຂອ.ຊດ, ລົງວັນທີ 31 / 07 / 2014.

ບົນພື້ນຖານໃນການຈັດຕັ້ງປະຕິບັດຜັນຂະຫຍາຍແນວທາງນະໂຍບາຍການຕ່າງປະເທດ, ຂອງພັກ -ລັດຖະບານ,ເນື້ອໃນຂອງບົດບັນທຶກກອງປະຊຸມການຮ່ວມມືພັດທະ ນາການຄ້າ ຊາຍແດນ ລາວ - ຫວຽດນາມ ຄັ້ງທີ VIII ທີ່ຈັດຂຶ້ນຢູ່ແຂວງເຊກອງ ກໍ່ຄືພະແນກອຸດສາຫະກຳ ແລະການຄ້າ ລາຍງານສະພາບການຮ່ວມມືດ້ານການຄ້າ ແລະ ການລົງທຶນ ກັບບັນດາແຂວງ ພາກກາງ-ພາກໃຕ້ ຂອງ ສ.ສ ຫວຽດນາມຫຼາຍດ້ານ ໃນຊຸມປີຜ່ານມາເຫັນວ່ານັບມື້ ນັບເພີ່ມຂຶ້ນ ເປັນຕົ້ນແມ່ນ: ການລົງທຶນ ດ້ານກະສິກຳປູກຝັງ , ອຸດສາຫະກຳປຸງແຕ່ງ,ສຳຫຼວດຂຸດຄົ້ນ ຄົ້ນແຮ່ທາດຕ່າງໆ ເປັນຕົ້ນແມ່ນ: ປູກຢາງພາລາ,ສາລີ ອາຫານສັດ,ສ້າງເຂື່ອນໄຟຟ້າເຊຂະໜານ III ນອກນັ້ນ ຍັງມີການຮ່ວມມືດ້ານການຄ້າ ການບໍລິການຄື: ບໍລິການໂຮງແຮມ,ບ້ານພັກ,ຂາຍຍົກ,ຂາຍຍ່ອຍ,ການສ້ອມແປງ,ນຳເຂົ້າ ແລະສົ່ງອອກສິນຄ້າ ໂດຍປະຕິບັດຕາມລະບຽບການ ຫຼຸດຜ່ອນອັດຕາພາສີ ເຊິ່ງກັນ ແລະກັນ ໃຫ້ສອດຄ່ອງຕາມລະບຽບການ.

1/ ສະພາບການພົວພັນຮ່ວມມືດ້ານການຄ້າ.

ໃນແຕ່ລະປີຄະນະຜູ້ແທນຂັ້ນສູງ ຂອງແຂວງ ເຊກອງ ແລະຄະນະຜູ້ແທນ ຂັ້ນສູງຂອງບັນດາແຂວງອື່ນໆຂອງສສ ຫວຽດນາມທີ່ມີຊາຍແດນຕິດຈອດ ກັບ ແຂວງ ເຊກອງເຊັ່ນ: ແຂວງກອນຕູມ,ກວາງນາມ, ເທື່ອທຽນເຫວ້ ກໍ່ໄດ້ ໄປຢ້ຽມຢາມປະຫາລືກັນແບບປົກກະຕິ,ໃນນີ້ ພະແນກ ອຸດສາຫະກຳ ແລະ ການຄ້າ ກໍ່ມີການພົບປະປຶກສາຫາລື ແລກປ່ຽນບົດຮຽນ ດ້ານວຽກງານ ອຸດສາຫະກຳ ແລະ ການຄ້າ ກັບ ພະແນກ ອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ເຊັ່ນດຽວກັນຄື:

- ໃນລົງວັນທີ 29 / 07 / 2013 ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງແຂວງເຊກອງຊັ້ນ 03 ໄດ້ຈັດກອງປະຊຸມຕ້ອນຮັບຄະນະຜູ້ແທນ ພາກລັດ ແລະພາກທຸລະກິດ ເມືອງເຟີນເລ້,ນະຄອນດາໜັງ,ແຂວງເຊກອງນຳໂດຍທ່ານຫົວໜ້າຫ້ອງການ,ທ່ານຫົວໜ້າຂະແໜງ, ແລະຂະແໜງການກ່ຽວຂ້ອງຂອງແຂວງ ພ້ອມດ້ວຍທຸລະກິດເຂົ້າຮ່ວມທັງໝົດ 40 ທ່ານ ຈຸດປະສົງໃນການ

2/ ວຽກງານການຊື້-ຂາຍແລກປ່ຽນສິນຄ້າຂອງປະຊາຊົນທີ່ອາໃສຢູ່ລຽບຕາມຊາຍແດນລາວ -ຫວຽດນາມ.

ໃນໄລຍະຜ່ານມາ ກໍ່ຄືປະຈຸບັນ ສະພາບການຄ້າຂາຍ ຂອງປະຊາຊົນທັງສອງຊາດ ທີ່ອາໃສຢູ່ລຽບຕາມຊາຍແດນ ລາວ - ຫວຽດນາມ ໄດ້ມີການແລກປ່ຽນຊື້ - ຂາຍນຳກັນໃນຊຸມປີຜ່ານມາ ເຊິ່ງມີຫຼາຍປະເພດສິນຄ້າຕົ້ນຕໍແມ່ນ: ສິນຄ້າເຄື່ອງປ່າຂອງດົງ, ສັດລ້ຽງທຸກ,ຜະລິດຕະພັນຫັດຖະກຳຕ່ຳແຜ່ນ, ສິນຄ້າຫັດຖະກຳຈັກສານ,ສິນຄ້າຈາກຜົນຜະລິດກະສິກຳ,ສິນຄ້າປະເພດສະບຽງອາຫານ,ເຄື່ອງບໍລິໂພກອື່ນໆ,ວັດສະດຸກໍ່ສ້າງ,ເຄື່ອງນຸ່ງຮົ່ມ,ເຄື່ອງໃຊ້ຄົວເຮືອນ,ຢາປົວພະຍາດ ນ້ຳມັນເຊື້ອໄຟ ລາຍລະອຽດມີດັ່ງລຸ່ມນີ້:

- ສັດລ້ຽງເປັນຕົ້ນແມ່ນ: ງົວ,ຄວາຍ,ໝູ,ແບ້ ແລະສັດປີກ.
- ຜະລິດຕະພັນ ຫັດຖະກຳຕ່ຳແຜ່ນ: ສິ້ນພື້ນເມືອງ, ເສື້ອພື້ນເມືອງ, ກະຕ່ອລ, ຜ້າບ່ຽງ ແລະອື່ນໆ.
- ສິນຄ້າຫັດຖະກຳຈັກສານ ເປັນຕົ້ນແມ່ນ: ກະພາ,ກະຈາະ,ກະບຸງ,ກະຕ່າ,ກະຕິບເຂົ້າ ແລະອື່ນໆ
- ອຸປະກອນຮັບໃຊ້ການຜະລິດກະສິກຳ: ຈົກ,ຊວ້ານ,ພ້າ,ມີດ,ຫອກ,ງາວ ແລະອື່ນໆ.
- ສິນຄ້າຈາກຜົນຜະລິດກະສິກຳ: ກະເຟ, ອ້ອຍ,ໝາກເຜັດ,ໝາກເຂືອ,ໝາກຖົ່ວ,ເຂົ້າຈ້າວ ແລະອື່ນໆ
- ເຄື່ອງຮັບໃຊ້ຊີວິດປະຈຳວັນ : ເຄື່ອງອຸປະໂພກ,ບໍລິໂພກ.
- ສິນຄ້າສະບຽງອາຫານປະເພດຕົ້ນແມ່ນ: ແປ້ງນົວ,ເກືອ,ນ້ຳຕານ.....

ໃນນັ້ນ, ການຈັດຕັ້ງປະຕິບັດ ມູນຄ່າ ການນຳເຂົ້າ ແລະສົ່ງອອກສິນຄ້າ 05 ປີ ໄດ້ສະແດງອອກມີດັ່ງລຸ່ມນີ້:

- ➢ ມູນຄ່າ ການນຳເຂົ້າ ສິນຄ້າ ຢູ່ຕາມຊາຍແດນ 05 ປີ ເທົ່າກັບ: 2.443.090,12 $
- ➢ ມູນຄ່າ ການ ສົ່ງອອກ ສິນຄ້າ ຢູ່ຕາມຊາຍແດນ 05 ປີ ເທົ່າກັບ: 470.060,79 $

3/ ດ້ານການລົງທຶນ.

ບັນດາຫົວໜ່ວຍທຸລະກິດ ( ສສ ຫວຽດນາມ ) ເຂົ້າມາລົງທຶນຢູ່ແຂວງ ເຊກອງ ໃນປະຈຸບັນ ທັງໝົດມີ : 13 ບໍລິສັດ ,ລວມມູນຄ່າການລົງທຶນທັງໝົດ: 354,332 ລ້ານໂດລາສະຫາລັດ, ເຊິ່ງປະກອບມີບັນດາຫົວໜ່ວຍທຸລະກິດລົງທຶນໃນດ້ານຕ່າງໆ ມີດັ່ງລຸ່ມນີ້:

+ ບໍລິສັດ ຮອງແອງກອາງນິວ ,ບໍລິສັດ ລາວບີກີນາ,ກວາງມິງຈີປາ ແລະ ບໍລິສັດ LVF 04 ບໍລິສັດ ດັ່ງກ່າວ ແມ່ນລົງທຶນປູກຕົ້ນຢາງພາລາ ມູນຄ່າການລົງທຶນປະມານ: 62,8 ລ້ານໂດລາສະຫາລັດ. ມີເນື້ອທີ່ປູກຢາງພາລາ 8.300 ກວ່າເຮັກຕາ.

+ ບໍລິສັດສົງລວມກອນຕູມ,ບໍລິສັດ ຕຽວອັນກີຮ່າໂນ້ຍ ແລະ ບໍລິສັດ ໂຮ່ກົງເຟືອງ: 03 ບໍລິສັດດັ່ງກ່າວ ແມ່ນລົງທຶນດ້ານອຸດສາຫະກຳປຸງແຕ່ງໄມ້ ມູນຄ່າການລົງທຶນປະມານ: 1,4 ລ້ານໂດລາສະຫາລັດ.

+ ບໍລິສັດອຸດສາຫະກຳແຮ່ທາດຄືບລົງຂອງແຂວງຖາຍບິງແລະບໍລິສັດຫວຽດເຟືອງ02ບໍລິສັດນີ້ແມ່ນລົງທຶນສຳຫຼວດແລະ ຂຸດຄົ້ນ ແຮ່ທາດ ມູນຄ່າການລົງທຶນ: 10,8 ລ້ານໂດລາສະຫາລັດ.

+ ບໍລິສັດນິດຕະພາບພາກໄຕ້ (206)ແລະ ບໍລິສັດກາເຟຮຸ່ນສ່ອນ ກວາງນິງ ລົງທຶນປູກກາເຟ,ມູນຄ່າການລົງທຶນ: 2,01ລ້ານໂດລາສາຫາລັດ.

+ ບໍລິສັດ ແມ່ຂອງການຄ້າ ແລະ ບໍລິການຟຸກທິນ ( ລາວ - ຫວຽດນາມ ) ລົງທຶນປູກພືດລົ້ມລຸກ ມູນຄ່າການລົງທຶນ: 4,6 ລ້ານໂດລາ.

+ ບໍລິສັດ ຊົງດາ ລົງທຶນກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ເຊຂະໝານ 3 ຢູ່ເມືອງ ດາກຈຶງ ມູນຄ່າການລົງທຶນ: 273,1ລ້ານໂດລາ.

➢ ທິດທາງແຜນການຄາດຄະເນໃນ 05 ປີ ຕໍ່ໜ້າ.

1. ເພີ່ມທະວີການຮ່ວມມືແລກປ່ຽນ ບົດຮຽນ ເຊິ່ງກັນ ແລະ ກັນ ດ້ານຂໍ້ມູນຂ່າວສານ ລະຫວ່າງ ພະແນກ ອຸດສາຫະກຳ ແລະ ການ ຄ້າ ແຂວງເຊກອງ ກັບບັນດາພະແນກອຸດສາຫະກຳ ແລະ ການຄ້າ ຂອງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດກັນ.

ມາເຮັດວຽກຄັ້ງນີ້ ຝ່າຍຫວຽດໄດ້ນໍາພານັກທຸລະກິດມາຊອກຕະຫຼາດ ເພື່ອຈໍາໜ່າຍສິນຄ້າ ແລະສອບຖາມລະບຽບການລົງທຶນຂອງ ສປປລາວ, ເວົ້າສະເພາະແມ່ນຊອກຫາທ່າແຮງ ດ້ານການຄ້າການລົງທຶນ ຢູ່ແຂວງເຊກອງ.

- ໃນຄັ້ງວັນທີ 19 / 08 / 2013 ໄດ້ຈັດກອງປະຊຸມຂຶ້ນ ທີ່ຫ້ອງວ່າການປົກຄອງແຂວງ ເຊກອງ ເພື່ອແລກປ່ຽນຂໍ້ມູນຂ່າວສານ ການຮ່ວມມືການຄ້າ - ການລົງທຶນ ລະຫວ່າງ ພະແນກ ອຸດສາຫະກໍາ ແລະການຄ້າ ແຂວງເຊກອງ ແລະພະແນກອຸດສາຫະກໍາ ແລະການຄ້າແຂວງ ບິງດິງ (ສສ ຫວຽດນາມ ) ,ກອງປະຊຸມໄດ້ມີປິດບັນທຶກຊ່ວຍຈໍາ ການຮ່ວມມືພັດທະນາດ້ານອຸດສາຫະກໍາ - ການຄ້າ ຝ່າຍແຂວງເຊກອງ ນໍາໂດຍ ທ່ານ ດຣ ແພງສີ ສີລາວີ ຫົວໜ້າພະແນກອຸດສາຫະກໍາ ແລະການຄ້າ ແລະຝ່າຍແຂວງ ບິງດິງ ນໍາພາໂດຍ ທ່ານ ຫວໍຮຸນ ກິນເຜືອງ ກໍາມະການພັກແຂວງ,ຫົວໜ້າພະແນກອຸດສາຫະກໍາ ແລະການຄ້າ ແຂວງບິງດິງ.

- ໃນຄັ້ງວັນທີ 02 / 10 /2013 ທີ່ຫ້ອງປະຊຸມຫ້ອງວ່າການປົກຄອງແຂວງ ໄດ້ຈັດກອງປະຊຸມ ແລກປ່ຽນຂໍ້ມູນຂ່າວສານການຮ່ວມມືການຄ້າ - ການລົງທຶນ ລະຫວ່າງພະແນກອຸດສາຫະກໍາ ແລະການຄ້າແຂວງເຊກອງ ແລະ ພະແນກອຸດສາຫະກໍາ ແລະການຄ້າ ແຂວງ ຟູອຽນ, ພ້ອມການຈັດຕັ້ງກ່ຽວຂ້ອງ ຂອງລັດ ແລະນັກທຸລະກິດເຂົ້າຮ່ວມທັງໝົດ 47 ທ່ານ.

ກອງປະຊຸມໄດ້ລາຍງານສະພາບລວມ ການຄ້າ,ການລົງທຶນ ທີ່ເປັນທ່າແຮງການພັດທະນາຂອງແຂວງ, ຫຼັງຈາກນັ້ນຝ່າຍຫວຽດ ກໍ່ໄດ້ລາຍງານສະພາບ ເຊັ່ນດຽວກັນ, ນອກນີ້ຍັງໄດ້ເປີດໂອກາດໃຫ້ນັກທຸລະກິດທັງສອງແຂວງມີການພົບປະແລກປ່ຽນການຊື້ການຂາຍ ແລະການລົງທຶນ ຮ່ວມກັນ ໃນອະນະຄົດອີກດ້ວຍ.

ໂດຍພາຍໃຕ້ການໃຫ້ກຽດເປັນປະທານຂອງທ່ານ ລຽັງ ຄໍາພູນ ຮອງເຈົ້າແຂວງ ຜູ້ຊີ້ນໍາວຽກງານເສດຖະກິດ,ຝ່າຍຫວຽດນາມແມ່ນທ່ານ ຫວໍຮຸນ ວອກອານ ຮອງເຈົ້າ ແຂວງງ ຟູອຽນ ແລະຄະນະຜູ້ແທນເຂົ້າຮ່ວມພະນັກງານ ພະແນກອຸດສາຫະກໍາ ແລະການຄ້າ ທັງສອງແຂວງ.

➢ <u>ການເຂົ້າຮ່ວມງານວາງສະແດງ ແລະ ໂຄສະນາສິນຄ້າ ຢູ່ ສສ ຫວຽດນາມ:</u>

- ເຂົ້າຮ່ວມງານວາງສະແດງສິນຄ້າການຮ່ວມມືພັດທະນາສາມລ່ຽມເສດຖະກິດ(CLV)ທີ່ແຂວງ ກອນຕູມ(ສສຫວຽດນາມ) ຄັ້ງວັນທີ 04 - 09 / 12/ 2013 ສິນຄ້າທີ່ນໍາໄປວາງສະແດງແມ່ນສິນຄ້າຫັດຖະກໍາແກະສະລັກໄມ້ ບ້ານໂພນ ເມືອງລະມາມມູນຄ່າສິນຄ້າ 262ລ້ານກວ່າກີບ.

-.ເຂົ້າຮ່ວມງານຕະຫລາດນັດການຄ້າການລົງທຶນ ແລະ ການທ່ອງທ່ຽວແລວທາງເສດຖະກິດຕາເວັນອອກສຽງໃຕ້ ປີ2013 ທີ່ນະ ຄອນດານັງ ສສ ຫວຽດນາມ ໃນລະຫ່ວາງວັນທີ 8-13/8/2013 ມູນຄ່າສິນຄ້າເຂົ້າຮ່ວມວ່າສະແດງ123.570.000 ກີບ

-ໃນຄັ້ງວັນທີ 26/12/2013 ຫາວັນທີ 31/12/2013.ໄດ້ເຊີນທຸລະກິດ 2 ຫົວໜ່ວຍເຂົ້າຮ່ວມງານວາງສະແດງສີຄ້າສາກົນທີ່ເມືອງດາລາດແຂວງເລີມດົງ(ສສຫວຽດນາມ)ສິນຄ້າທີ່ເຂົ້າຮ່ວມງານສະແດງປະເພດ ເຄື່ອງຫັດຖະກໍາ ແກະສະລັກໄມ້,ເຄື່ອງເຟີເນີເຈີ (ຕູ້,ດຽງ) ໃນມູນຄ່າ 150 ກ່ວາລ້ານກີບ.

-ໃນຄັ້ງວັນທີ 16-22/01/2013 ໄດ້ເຊີນທຸລະກິດ 01 ຫົວໜ່ວຍເຂົ້າຮ່ວມງານສະແດງສິນຄ້າ ທີ່ນະຄອນດານັງ,ຊະນິດສິນຄ້າເຂົ້າຮ່ວມ ແມ່ນເຄື່ອງເຟີເນີເຈີ: ຕູ້,ຕຽງນອນ,ບານປະຕູສໍາເລັດຮູບມູນຄ່າທັງໝົດ: 32.100.000 ກີບ,ເຊິ່ງແມ່ນ ບໍລິສັດພັດທະນາ ໄອຄີຊີ ລົບວົງຈອນ ຈໍາກັດ ເປັນຕົວແທນ ແຂວງເຊກອງເຂົ້າ ຮ່ວມ .

- ຄັ້ງວັນທີ 01 -06/ 07/2014 ເຂົ້າຮ່ວມ ງານວາງສະແດງສິນຄ້າ ທີ່ນະຄອນ ຢ່າງາງ ແລະ ແຂວງ ແທ້ງຮົວ ( ສສ ຫວຽດນາມ ) ມີທັງໝົດ 08 ລາຍການສິນຄ້າ , ມູນຄ່າ: 94.600.0000 ກີບ ເຊິ່ງແມ່ນ ບໍລິສັດ ພັດທະນາ ໄອຄີຊີ ລົບວົງຈອນ ຈໍາກັດ ເປັນຕົວແທນ ແຂວງເຊກອງເຂົ້າ ຮ່ວມ .

2/ ດຶງດູດເອົາການລົງທຶນ,ນັກທຸລະກິດ ຫວຽດນາມ ຈາກບັນດາແຂວງທີ່ມີຊາຍແດນຕິດຈອດກັບ ແຂວງເຊກອງແລະແຂວງອື່ນໆຂອງສສ ຫວຽດນາມເປັນຕົ້ນແມ່ນການລົງທຶນ ດ້ານອຸດສາຫະກໍາປຸງແຕ່ງ,ກະສິກໍາປ່າໄມ້ແລະບໍລິການອື່ນໆ ທີ່ແຂວງເຊກອງ ມີທ່າແຮງ.

3/. ປະສານສົມທົບກັບ ຂະ ແໜງການທີ່ກ່ຽວຂ້ອງ, ຫ້ອງການຄ້າປະຈໍາເມືອງ ທີ່ມີຊາຍແດນຕິດຈອດກັບ(ສສ ຫວຽດນາມ ) ຕິດຕາມກວດກາ,ເກັບກໍາຂໍ້ມູນ ສິນຄ້າຂາອອກ ແລະ ຂາເຂົ້າ ທີ່ເປັນທ່າແຮງ ສໍາລັບການຊື້ - ຂາຍລຽບຕາມຊາຍແດນຂອງປະຊາຊົນສອງຊາດ.

4/ ຕິດຕາມກວດກາ ແລະ ປະສານສົມທົບ ຂະແໜງການກ່ຽວຂ້ອງ ປະຈໍາດ່ານໃນການປະຕິບັດບາງປະເພດສິນຄ້າທີ່ຂຶ້ນບັນຊີຫຼຸດຜ່ອນ ອັດຕາພາສີ ເຊິ່ງກັນ ແລະ ກັນ ລະຫວ່າງລາວ - ຫວຽດນາມ ກໍ່ຄື ເຂດສາມລ່ຽມພັດທະນາ ( CLV ).

5/. ປະສານສົມທົບຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມ ແລະລາຍງານຂໍ້ມູນ,ສ້າງແຜນຂຽນເປັນ ໂຄງການກໍ່ສ້າງ ຕະຫຼາດຊາຍແດນ,ຮ້ານຄ້າປອດພາສີ (ຢູ່ຈຸດດ່ານ ດາກຕະອອກ - ດາກໂອກ )ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກລັດຖະບານຫວຽດນາມ.

6/ ຄາດໝາຍສູ້ຊົນດ້ານຕົວເລກ 05 ປີ ຕໍ່ໜ້າ

- ວຽກງານນໍາເຂົ້າສິນຄ້າຕາມຊາຍແດນ: 2.736.260,12 ໂດລາສະຫະລັດ
- ວຽກງານສົ່ງອອກສິນຄ້າຕາມຊາຍແດນ: 526.468,08 ໂດລາສະຫະລັດ

ດັ່ງນັ້ນ, ພະແນກ ອຸດສາຫະກໍາ ແລະ ການຄ້າ ຈິ່ງໄດ້ຮຽນ ລາຍງານມາຍັງທ່ານ ເພື່ອຊາບ.

( ຮຽນມາດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ )

ຫົວໜ້າ ພະແນກອຸສາຫະກໍາ ແລະ ການຄ້າ

ແພງສີ ສີລາວີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງສາລະວັນ
ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ ...329.../ອຄ.ສວ
ສາລະວັນ, ວັນທີ 18 ມິຖຸນາ 2014

# ບົດສະຫຼຸບ
## ການຈັດຕັ້ງປະຕິບັດບົດບັນທຶກກອງປະຊຸມການຮ່ວມມືພັດທະນາ ການຄ້າຊາຍແດນລາວ-ຫວຽດນາມ ຄັ້ງທີ VIII 5 ປີຜ່ານມາ ແລະ 6 ເດືອນຕົ້ນປີ 2014

I. **ສະພາບລວມ**

ແຂວງສາລະວັນແມ່ນແຂວງໜຶ່ງທີ່ນອນໃນບັນດາແຂວງພາກໃຕ້ຂອງ ສປປ ລາວ ມີເນື້ອທີ່ທັງໝົດ 10.691 ກິໂລຕາແມັດ ມີພົນລະເມືອງທັງໝົດ 387.742 ຄົນ.

ແຂວງສາລະວັນ ມີຊາຍແດນຕິດຈອດກັບແຂວງກວ່າງຈີ້, ເທີທຽນເຫວ້ ຂອງ ສສ ຫວຽດນາມ ສິ່ງດັ່ງກ່າວໄດ້ອຳນວຍຄວາມສະດວກໃນການແລກປ່ຽນຊື້-ຂາຍສິນຄ້າຮ່ວມກັນ.

II. **ດ້ານການຮ່ວມມື**

ການພົວພັນຮ່ວມມືທາງດ້ານອຸດສາຫະກຳ ແລະ ການຄ້າ ລະຫວ່າງ ແຂວງສາລະວັນ ກັບ ບັນດາແຂວງທີ່ມີຊາຍແດນຕິດຈອດ ແລະ ບັນດາແຂວງໃກ້ຄຽງ ຂອງ ສສ ຫວຽດນາມ ແມ່ນໄດ້ມີການເຄື່ອນໄຫວຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໂດຍມີດ່ານ ລະໄລ ເມືອງສະໝ້ວຍ ເປັນຂົວຕໍ່ໃນການເຄື່ອນໄຫວທຸລະກິດເຊິ່ງກັນ ແລະ ກັນ ເຖິງແມ່ນວ່າໃນໄລຍະຜ່ານມາດ່ານດັ່ງກ່າວຈະເປັນດ່ານລະດັບຊາດກໍ່ຕາມ ແຕ່ການແລກປ່ຽນຊື້-ຂາຍສິນຄ້າຂອງບັນດານັກທຸລະກິດຂອງແຂວງພາກໃຕ້ ເວົ້າລວມ, ເວົ້າສະເພາະກໍ່ແມ່ນນັກທຸລະກິດຂອງແຂວງສາລະວັນ ແມ່ນມີຈຳນວນບໍ່ນ້ອຍ ແລະ ມາຮອດວັນທີ 25 ມິຖຸນາ 2014 ດ່ານລະໄລໄດ້ຍົກລະດັບຂຶ້ນຈາກດ່ານລະຊາດມາເປັນດ່ານສາກົນ ຍິ່ງຈະເຮັດໃຫ້ການແລກປ່ຽນຊື້-ຂາຍສິນຄ້ານັບມື້ນັບຫຼາຍຂຶ້ນ. ນອກຈາກນັ້ນ ໃນໄລຍະຜ່ານມາ ລັດຖະບານທັງສອງຝ່າຍກໍ່ໄດ້ມີການຊຸກຍູ້ສົ່ງເສີມ ແລະ ໃຫ້ບຸລິມະສິດເຊິ່ງກັນ ແລະ ກັນເປັນຕົ້ນແມ່ນ ກົນໄກໃຫ້ບຸລິມະສິດຫຼຸດຜ່ອນດ້ານອັດຕາພາສີຂາເຂົ້າເຊິ່ງກັນ ແລະ ກັນສຳລັບສິນຄ້າ ທີ່ມີແຫຼ່ງກຳເນີດຈາກສອງປະເທດ ( ລາວ-ຫວຽດນາມ ), ປະສານສົມທົບກັນຄົ້ນຄວ້າ ເປີດກວ້າງ, ບັນດາປະເພດສິນຄ້າ ທີ່ໄດ້ຮັບການຫຼຸດຜ່ອນອັດຕາພາສີຂາເຂົ້າໃຫ້ເຫຼືອ 0%.

ມາຮອດປະຈຸບັນ ການລົງທຶນຂອງຊາວຫວຽດນາມ ສ່ວນໃຫຍ່ແມ່ນຂົງເຂດອຸດສາຫະກຳປຸງແຕ່ງ ໂຮງງານຈັກໂຮງງານປຸງແຕ່ງໄມ້, ການຄ້າຂາຍຍົກ, ຂາຍຍ່ອຍທີ່ຂື້ນກັບເມືອງສາມສ້າງອອກອະນຸຍາດ ຊົ່ວຄາວ

ການຮ່ວມມືພັດທະນາການຄ້າຊາຍແດນລາວ-ຫວຽດນາມ ເຊິ່ງໃນໄລຍະຜ່ານມາກໍ່ໄດ້ມີໜໍ່ແໜງການຮ່ວມທຶນຈຳນວນໜຶ່ງ ໃນການສ້າງເຂດການຄ້າຊາຍແດນ ແຕ່ກໍ່ບໍ່ໄດ້ຮັບການຈັດຕັ້ງປະຕິບັດ ຍ້ອນວ່າພື້ນຖານໂຄງລ່າງ ຍັງບໍ່ທັນເປັນສິ່ງຊຸກຍູ້ເອື້ອຍອຳນວຍ ໂດຍສະເພາະແມ່ນເສັ້ນທາງບໍ່ທັນສະດວກ ເຮັດໃຫ້ຫຼາຍຫົວໜ່ວຍທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ບໍ່ມີຄວາມສົນໃຈ ມາຮອດປະຈຸບັນ ເສັ້ນທາງ

ຄົມມະນາຄົມໄດ້ມີຄວາມສະດວກຫຼາຍຂຶ້ນ ແລະ ຈະເອົາຈຸດດັ່ງກ່າວໃຫ້ກາຍເປັນເຂດການຄ້າຊາຍແດນ ລາວ - ຫວຽດນາມ ກາຍເປັນຈຸດແລກປ່ຽນຊື້ - ຂາຍ.

ໂດຍສືບຕໍ່ການຮ່ວມມືແບບພິເສດ ລະຫວ່າງ ສອງຊາດລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະແມ່ນການຮ່ວມມືທາງດ້ານອຸດສາຫະກຳ ແລະ ການຄ້າ, ໃນຄັ້ງວັນທີ 20 ສິງຫາ 2013 ທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງສາລະວັນ ໄດ້ເປີດກອງປະຊຸມເຮັດວຽກການພົວພັນຮ່ວມມື ກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງບິ່ງດິ້ງ ສສ ຫວຽດນາມ, ເຊິ່ງໃນໄລຍະຜ່ານມາການນຳຂອງສອງແຂວງກໍ່ໄດ້ມີການລົງນາມການຮ່ວມມືສອງຝ່າຍ ແລະ ກອງປະຊຸມຄັ້ງນີ້ກໍ່ເປັນການສືບຕໍ່ຮ່ວມມືຂອງບັນດາບົດບັນທຶກດັ່ງກ່າວ. ເນື້ອໃນຂອງການພົບປະແລກປ່ຽນການຮ່ວມມືຄັ້ງນີ້ແມ່ນ ເຫັນດີເປັນເອກະພາບ ແລະ ສືບຕໍ່ບັນດາເນື້ອໃນທີ່ສຳຄັນກ່ຽວກັບການຮ່ວມມືພັດທະນາທາງດ້ານອຸດສາຫະກຳ ແລະການຄ້າຂອງສອງແຂວງ ເພື່ອເປັນຂໍ້ຕໍ່ໃນການຮ່ວມມືໃຫ້ບັນດາຫົວໜ່ວຍທຸລະກິດເຂົ້າຮ່ວມການຈັດຕັ້ງ ປະຕິບັດ ການຮ່ວມມືພັດທະນາຕາມເນື້ອໃນ, ວິທີການຂອງແຕ່ລະໜ້າວຽກ. ໂດຍການພັດທະນາ ອຸດສາຫະກຳ ແລະ ການຄ້າ ເພື່ອໃຫ້ສອດຄ່ອງກັບຄວາມຍາດ[illegible] ແລະ ຄວາມຕ້ອງການ[illegible] ຂອງສອງແຂວງ.

ນອກຈາກການພົບປະແລກປ່ຽນທີ່ເປັນການລົງເລິກທາງດ້ານວິຊາການສະເພາະແລ້ວ ການນຳຂອງພະແນກຍັງໄດ້ເຂົ້າຮ່ວມການພົບປະແລກປ່ຽນ ຖອນຖອດບົດຮຽນກັບບັນດາແຂວງຕິດຈອດ ແລະ ແຂວງໃກ້ຄຽງຂອງ ສສ ຫວຽດນາມ ທີ່ການນຳຂອງແຂວງໄດ້ໄປແລກປ່ຽນຖອດຖອນບົດຮຽນໃນແຕ່ລະປີ.

## III. ມູນຄ່າການຄ້າຂາເຂົ້າ-ຂາອອກຂອງແຂວງສາລະວັນ ກັບ ສສ ຫວຽດນາມ

**ລ. ສິນຄ້າຂາອອກ ປະຕິບັດໄດ້ ມູນຄ່າທັງໝົດ 18.763.488,10 ໂດລາສະຫະລັດເຊິ່ງມີລາຍລະອຽດດັ່ງນີ້ :**

| ລ/ດ | ລາຍການສິນຄ້າ | ມູນຄ່າ$ | ໝາຍເຫດ |
|---|---|---|---|
| | ສິນຄ້າສົ່ງອອກ5ປີຜ່ານມາ ແລະ 6 ເດືອນ(ສົກ2013-2014) | 12,217,799.43 | |
| 1 | ໄມ້ແລະຜະລິດຕະພັນໄມ້ | 12,217,799.43 | |
| - | ໄມ້ແລະຜະລິດຕະພັນໄມ້ | 5,892,227.00 | |
| 2 | ສິນຄ້າກະສິກຳ | 353,800.00 | |
| - | ໝາກກ້ວຍ | 66,600.00 | |
| - | ເຂົ້າສານຈ້າວ | 483,824.50 | |
| - | ສາລີ | 12,500.00 | |
| - | ໝາກຖົ່ວເຫຼືອງ | 51,192.50 | |
| - | ມັນຕົ້ນຕາກແຫ້ງ | 757,000.00 | |
| - | ແປ້ງມັນຕົ້ນ | 3,882,010.00 | |
| - | ກາເຟ | 61,500.00 | |
| - | ໝາກແໜ່ງ | 219,300.00 | |
| - | ຢາງພາລາ | 4,500.00 | |
| - | ໝາກຖົ່ວດິນ | 607,000.00 | |
| 3 | ສັດລ້ຽງ | | |

| | | | |
|---|---|---|---|
| - | ຄວາຍ | 150,000.00 | |
| - | ງົວ | 457,000.00 | |
| 4 | ເຄື່ອງປ່າຂອງດົງ | 46,461.67 | |
| - | ແຂມ | 2,000.00 | |
| - | ດອກຈຽງລົມ | 9,778.20 | |
| - | ເປືອກບົງ | 19,725.78 | |
| - | ຂີ້ຊີ | 14,957.69 | |
| | ລວມ | 18,763,488.10 | |

- ສິນຄ້ານຳເຂົ້າປະຕິບັດໄດ້ ມູນຄ່າ 5,007,114.08 ໂດລາສະຫະລັດ ເຊິ່ງມີລາຍລະອຽດດັ່ງນີ້ :

| ລ/ດ | ລາຍການສິນຄ້າ | ມູນຄ່າ$ | ໝາຍເຫດ |
|---|---|---|---|
| 1 | ເຄື່ອງຮັບໃຊ້ການຜະລິດກະສິກຳ | 547,212.28 | |
| 2 | ເຄື່ອງກໍ່ສ້າງ | 3,583,076.40 | |
| 3 | ເຄື່ອງຮັບໃຊ້ການປັບປຸງໂຮງງານ | 562,794.12 | |
| 4 | ເຄື່ອງໃຊ້ໄຟຟ້າ | 34,731.76 | |
| 5 | ເຄື່ອງບໍລິໂພກ | 54,215.05 | |
| 6 | ເຄື່ອງຮັບໃຊ້ໂຄງການ | 198,174.71 | |
| 7 | ເຄື່ອງອາໄຫຼ່ | 19,704.76 | |
| 8 | ອື່ນໆ | 7,205.00 | |
| | ລວມ | 5,007,114.08 | |

*ຜ່ານການຈັດຕັ້ງປະຕິບັດ ການຮ່ວມມືລາວ-ຫວຽດນາມ ໃນໄລຍະຜ່ານມາສາມາດຕີລາຄາໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ແລະ ທິດທາງແກ້ໄຂໃນຕໍ່ໜ້າດັ່ງນີ້ :*

- **ຂໍ້ສະດວກ**
  - ມູນເຊື້ອຄວາມສາມັກຄີອັນພິເສດລະຫວ່າງສອງຊາດເຊິ່ງມີມາແຕ່ດົນນານ
  - ເສັ້ນທາງຄົມມະນາຄົມໃນປະຈຸບັນແມ່ນສະດວກສະບາຍ ພ້ອມນັ້ນ ດ່ານລະໄລກໍ່ໄດ້ຍົກລະດັບຂຶ້ນມາເປັນດ່ານສາກົນ ອັນເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ການໄປມາຫາສູ່, ຄ້າຂາຍ ແລກປ່ຽນສິນຄ້າເຊິ່ງກັນ ແລະ ກັນຂອງປະຊາຊົນຕາມຊາຍແດນ

- ການຜະລິດສິນຄ້າຍັງກະແຈກກະຈາຍ ຂຶ້ນກັບທຳມະຊາດ ສ່ວນຫຼາຍແມ່ນການຜະລິດເພື່ອຮັບໃຊ້ຊີວິດການເປັນຢູ່ ສ່ວນທີ່ເຫຼືອຈຶ່ງໄດ້ມີການແລກປ່ຽນຊື້-ຂາຍ
- ປະຊາຊົນຕາມທີ່ອາໄສຢູ່ຕາມແນວຊາຍແດນ ສ່ວນໃຫຍ່ແມ່ນຊົນເຜົ່າກຸ່ມນ້ອຍ ຄວາມຮູ້ຄວາມສາມາດໃນການນຳໃຊ້ວິທະຍາສາດເຂົ້າໃນການຜະລິດຍັງຕ່ຳ
- ຍັງບໍ່ທັນມີຕະຫຼາດຊາຍແດນທີ່ຖາວອນ ເນື່ອງຈາກວ່າບໍ່ທັນມີນິຕິກຳ ຫຼື ນະໂຍບາຍໃນການຄຸ້ມຄອງເປັນອັນລະອຽດ
- ການຄ້າ-ຂາຍຂອງຊາວຫວຽດນາມ ຢູ່ ສປປ ລາວ ແມ່ນຍັງມີລັກສະນະສັບສົນ ຍັງບໍ່ທັນສອດຄ່ອງກັບລະບຽບກົດໝາຍ ເປັນຕົ້ນແມ່ນການອອກອະນຸຍາດດຳເນີນທຸລະກິດ.
- ພະນັກງານວິຊາການຜູ້ເຮັດວຽກກ່ຽວກັບການຄ້າຊາຍແດນຍັງບໍ່ທັນໄດ້ຮັບການຝຶກອົບຮົມ ດ້ານການຄ້າຊາຍແດນມາກ່ອນ, ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການຍັງບໍ່ທັນມີການພັດທະນາ
- ຍັງບໍ່ທັນມີບັນດານິຕິກຳຕ່າງໆ ໃນການຄຸ້ມຄອງການຄ້າຊາຍແດນທີ່ເປັນອັນລະອຽດ

- **ວິທີແກ້ໄຂ**
  - ສຶກສາ ຝຶກອົບຮົມປະຊາຊົນຕາມແນວຊາຍແດນໃຫ້ຮູ້ຈັກຊື້-ຂາຍ, ຮູ້ວິທີການຜະລິດເປັນສິນຄ້າໂດຍນຳໃຊ້ເຕັກນິກທີ່ທັນສະໄໝເພື່ອເຮັດໃຫ້ປະສິດທິພາບຂອງຜົນຜະລິດນັບມື້ນັບຫຼາຍຂຶ້ນ.
  - ຄວນມີນິຕິກຳ ທີ່ເປັນອັນລະອຽດໃນການຄຸ້ມຄອງການຄ້າຊາຍແດນ ແລະ ຕະຫຼາດຊາຍແດນ
  - ຄວນມີການກໍ່ສ້າງຕະຫຼາດ ຖາວອນ ແລະ ເຄິ່ງຖາວອນ ເພາະສ່ວນໃຫຍ່ຕະຫຼາດຊາຍແດນຍັງມີລັກສະນະເປັນຕະຫຼາດນັດ, ຊົ່ວຄາວ ບໍ່ທັນເປັນທີ່ດຶງດູດການເຂົ້າຮ່ວມຂອງນັກທຸລະກິດ

**ພາກສະເໜີ :**

- ສະເໜີໃຫ້ມີການຝຶກອົບຮົມ ທັງຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອເປັນການແລກປ່ຽນຖອດຖອນບົດຮຽນເຊິ່ງກັນ ແລະ ກັນ ລະຫວ່າງວິຊາການຂອງອຸດສາຫະກຳ ແລະ ການຄ້າທັງສອງປະເທດ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ.
- ສະເໜີໃຫ້ສູນກາງສະໜອງຂໍ້ມູນຂ່າວສານ, ບັນດານິຕິກຳ ທີ່ກ່ຽວຂ້ອງເຖິງການຄຸ້ມຄອງ, ການຈັດຕັ້ງປະຕິບັດ, ນະໂຍບາຍຕ່າງໆ ກ່ຽວກັບການຄ້າຊາຍແດນ ແລະ ເອກະສານອື່ນໆ.
- ສະເໜີໃຫ້ຝ່າຍ ສສ ຫວຽດນາມ ອຳນວຍຄວາມສະດວກຕື່ມ ກ່ຽວກັບວຽກງານວາງສະແດງສິນຄ້າທີ່ຝ່າຍ ສສ ຫວຽດນາມຈັດຂຶ້ນ ເປັນຕົ້ນແມ່ນເລື່ອງນຳສິນຄ້າໄປວາງສະແດງ ເພາະໃນໄລະຜ່ານມາມີຫຼາຍກໍລະນີ ເມື່ອໄປຮອດດ່ານຂາເຂົ້າຂອງຫວຽດນາມແລ້ວຍ້ອນບໍ່ມີຜູ້ຄ້ຳປະກັນ, ຂາດການຕິດຕໍ່ ຝ່າຍລາວຈຳຕ້ອງໄດ້ນຳສິນຄ້າດັ່ງກ່າວກັບຄືນ ເປັນເຫດໃຫ້ເສຍທັງເວລາ ທັງຄ່າໃຊ້ຈ່າຍ.
- ວຽກງານຕະຫຼາດຊາຍແດນ ສະເໜີໃຫ້ຝ່າຍ ສສ ຫວຽດນາມ ລະດົມນັກທຸລະກິດຊາວຫວຽດນາມເຂົ້າຮ່ວມຫຼາຍຂຶ້ນ ພ້ອມທັງມາລົງທຶນກໍ່ສ້າງ ເພື່ອເຮັດໃຫ້ເປັນຕະຫຼາດຖາວອນ ແລະ ເຄິ່ງຖາວອນ.

<u>**ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ**</u>

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ແຂວງອັດຕະປື</u>

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 0550 /ອຄ.ອປ

ອັດຕະປື, ວັນທີ 03 SEP 2014

**ບົດສະຫລຸບ**

**ການຈັດຕັ້ງປະຕິບັດ ຕາມເນື້ອໃນຈິດໃຈ**

**ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ**

**ລາວ - ຫວຽດນາມ ໃນໄລຍະທີ່ຜ່ານມາ ແລະ ແຜນການພັດທະນາໃນຕໍ່ໜ້າ.**

ຮຽນ : ທ່ານ ຫົວໜ້າຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖືຢ່າງສູງ !

ເລື່ອງ : ຂໍລາຍງານການເຄື່ອນໄຫວວຽກງານການຮ່ວມມືດ້ານການຄ້າ ແລະການລົງທຶນໃນໄລຍະ ທີ່ຜ່ານມາ

- ອີງຕາມ: ຂໍ້ຕົກລົງ ສະບັບເລກທີ 0035/ ອຄ ກຂອ ,ລົງວັນທີ 06/1/2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫລວງ.

ໂດຍປະຕິບັດຕາມເນື້ອໃນຈິດໃຈ ກອງປະຊຸມຮ່ວມກັນຄັ້ງທີ VIII ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ກັບກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ທີ່ຈັດຂຶ້ນຢູ່ເມືອງລະມາມ ແຂວງເຊກອງ ລະຫວ່າງວັນທີ 17 - 18 ຕຸລາ ປີ 2012 ກ່ຽວກັບ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງອັດຕະປື ຂໍຖືເປັນກຽດອະນຸຍາດລາຍງານ ສະພາບການເຄື່ອນໄຫວວຽກງານ ການຮ່ວມມືດ້ານການຄ້າ ແລະ ການລົງທຶນ ກັບ ບັນດາແຂວງພາກກາງ ກໍຄືແຂວງໃກ້ຄຽງ ຂອງ ສສ ຫວຽດນາມ ທີ່ມີຊາຍແດນຕິດຈອດ, ໃນໄລຍະທີ່ຜ່ານມາ ກໍເຫັນວ່າມີ ນັກທຸລະກິດ ຂອງ ສສ ຫວຽດນາມ ທີ່ເຂົ້າມາຄ້າຂາຍ ແລະ ລົງທຶນຢູ່ແຂວງອັດຕະປືເປັນຕົ້ນແມ່ນ : ໂຄງການປູກຢາງພາລາ,ໂຄງການປູກອອ້ຍ,ປູກມັນຕົ້ນ,ສາລີ ແລະໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳເຕີກເຊກະໝານ I, ເຂື່ອນນ້ຳກົງ I , II,III, ເຂື່ອນເຊປຽນ, ເຊນ້ຳນ້ອຍ. ນອກນັ້ນຍັງມີ ການລົງທຶນດ້ານການຄ້າ ແລະ ການບໍລິການເຊັ່ນ: ບ້ານພັກ, ໂຮງແຮມ, ຫ້າງຮ້ານຄ້າຂາຍຍ່ອຍ, ຂາຍສົ່ງ, ການນຳເຂົ້າ ແລະສົ່ງອອກສິນຄ້າ, ບົນພື້ນຖານລະບຽບກົດໝາຍ .

**1.** ການພົວພັນດ້ານການຄ້າ ແລະ ການລົງທຶນ.

ໃນໄລຍະທີ່ຜ່ານມາ ການນຳຂອງແຂວງ ອັດຕະປືພ້ອມດ້ວຍຄະນະ ແລະ ຄະນະທີມງານການນຳຂອງ ສສ ຫວຽດນາມ ໂດຍສະເພາະການນຳຂອງບັນດາແຂວງມີຊາຍແດນຕິດຈອດກໍໄດ້ໄປຢ້ຽມຢາມ, ພົບປະປຶກສາຫາລື ແລະແລກປ່ຽນບົດຮຽນເຊິ່ງກັນແລະກັນ, ໃນນັ້ນສອງພະແນການໂດຍສະເພາະພະແນກອຸດສາຫະກຳ ແລະການຄ້າແຂວງອັດຕະປືແລະພະແນກອຸດສາຫະກຳ ແລະ ການຄ້າຂອງ ສສຫວຽດນາມ ພ້ອມດ້ວຍຄະນະ ແລະ ນັກທຸລະກິດກໍໄດ້ກໍໄດ້ມີການພົບປະ ປຶກສາຫາລື ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ທາງດ້ານວຽກງານການຄ້າແລະການລົງທຶນ ໃດ້ຈັດກອງປະຊຸມພົບເຈລະຈາກັບນັກທຸລະກິດແລະບັນດາແຂວງຂອງສສ ຫວຽດນາມເຊັ່ນ:ແຂວງດານັງ,ບິງດິງ ແຂວງຟອຽນ.

**2.** ວຽກງານການຄ້າຕະຫຼາດຊາຍແດນ .

ໃນໄລຍະ ປີທີ່ຜ່ານມາ ຈົນເຖິງປັດຈຸບັນ ສະພາບການເຄື່ອນໄຫວ ດ້ານການຄ້າ ແລະການຊື້-ຂາຍ ຂອງປະຊາຊົນສອງຊາດ ລາວ - ຫວຽດນາມ ທີ່ທຳມາຫາກິນແລະອາໃສຢູ່ລຽບຕາມຊາຍແດນ ກໍໄດ້ໄປມາຫາສູ່ ຄ້າຂາຍແລກປ່ຽນສິນຄ້າເຊິ່ງກັນແລະກັນ ເຊັ່ນ : ສິນຄ້າກະສິກຳ,ສັດລ້ຽງ,ເຄື່ອງປ່າຂອງດົງ ສິນຄ້າສ່ວນໃຫ່ຍກໍ່ແມ່ນສິນຄ້າຍ່ອຍ ແລະຍັງເປັນການຄ້າຂາຍແບບປະເພນີ ທີ່ເຄີຍຜູກພັນກັນມາແຕ່ດົນນານ ຍ້ອນວ່າ ແຂວງອັດຕະປືພວກຂ້າພະເຈົ້າ ປະຊາຊົນສ່ວນໃຫ່ຍທີ່ຢູ່ກະແຈກກະຈາຍລຽບຕາມຊາຍແດນນັ້ນກໍ່ແມ່ນຊົນເຜົ່າ ຄວາມຮູ້ທາງດ້ານການຄ້າຂາຍຍັງບໍ່ທັນກວ້າງຂວາງ ແລະ ເສັ້ນທາງຄົມມະນາຄົມອອກສູ່ຊາຍແດນຫວຽດນາມ ຍັງຫຼາຍເຂດບໍ່ທັນມີເສັ້ນທາງ , ດັ່ງນັ້ນ: ການຄ້າຊາຍແດນຈິ່ງບໍ່ທັນຂະຫຍາຍຕົວ ເປັນພຽງແຕ່ການຄ້າແລກປ່ຽນແບບບ້ານພີ່ເມືອງນ້ອງ ແລະ ການເຄື່ອນໄຫວຄ້າຂາຍກໍ່ເຮັດໄດ້ແຕ່ລະດູແລ້ງເທົ່ານັ້ນ , ເວົ້າລວມ ແຂວງ

ອັດຕະປືພວກຂ້າພະເຈົ້າ ໂດຍສະເພາະຕາມເຂດພື້ນທີ່ລຽບຕາມຊາຍແດນ ຊຶ່ງພະຍາກອນທຳມະຊາດຈຳນວນໜຶ່ງໂດຍສະເພາະປະເພດເຄື່ອງປ່າຂອງດົງທີ່ເປັນສິນຄ້າ ແຕ່ປະຊາຊົນພວກເຮົາຍັງບໍ່ທັນ ຮູ້ຊອກຄົ້ນ ແລະຊື້- ຂາຍ,ແຕ່ມີຄົນຫວຽດນາມ ຈຳນວນໜຶ່ງ ເຂົ້າມາຊອກຄົ້ນ,ຕັບຊື້ນຳປະຊາຊົນເຮົາແລ້ວສົ່ງອອກເລີຍຜ່ານດ່ານທ້ອງຖິ່ນ ແລະ ດ່ານສາກົນພູເກືອໂດຍແມ່ນເຈົ້າໜ້າທີ່ປະຈຳດ່ານເປັນຜູ້ປະກອບເອກະສານສົ່ງອອກກັບດ່ານ.

ດັ່ງນັ້ນ, ການເກັບກຳຕົວເລກສະຖິຕິປະລິມານການສົ່ງອອກ ແລະ ນຳເຂົ້າສິນຄ້າຈິ່ງບໍ່ສາມາດເກັບໄດ້ລະອຽດ,

3. ຕະຫຼາດຊາຍແດນ.

ແຂວງອັດຕະປືພວກຂ້າພະເຈົ້າ ໃນຫຼາຍປີທີ່ຜ່ານມາຈົນເຖິງປັດຈຸບັນ ແມ່ນຍັງບໍ່ທັນມີຕະຫຼາດ ຫຼື ຮ້ານຄ້າ ທີ່ພາກລັດລົງທຶນ ຫຼື ໂຄງການຊ່ວຍເຫຼືອໃນຂອບຂອງການຮ່ວມມືພັດທະນາການຄ້າຊາຍແດນລາວ - ຫວຽດນາມ, ແຕ່ຢູ່ໃນຂອບເຂດດ່ານສາກົນພູເກືອ ກໍໄດ້ມີການພັດທະນາ , ມີຫ້ອງການ,ເຮືອນພັກຂອງພະນັກງານເຈົ້າໜ້າທີ່ປະຈຳດ່ານ , ຮ້ານຄ້າເອກະຊົນຮ້ານອາຫານ ແລະ ເຮືອນພັກ ກໍມີຈຳນວນໜຶ່ງ ,ແຕ່ສຳລັບເບື້ອງຫວຽດນາມໄດ້ມີພື້ນຖານໂຄງລ່າງພ້ອມກວ່າ.

ແຕ່ໄລຍະ 5 ປີ ທີ່ຜ່ານມາ ບັນຫາທີ່ພົ້ນເດັ່ນກວ່າໝູ່ຢູ່ແຂວງອັດຕະປືພວກຂ້າພະເຈົ້າ ແມ່ນການເຂົ້າມາລົງທຶນຂອງນັກທຸລະກິດວຽດນາມເຊັ່ນ : ໂຄງການປູກຢາງພາລາ,ປູກອ້ອຍ,ປູກມັນຕົ້ນ,ປູກປາມ,ປູກກະເຟ,ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກເຊກະໝານ I, ເຂື່ອນໄຟຟ້ານ້ຳກົງ I ,II ,III , ເຂື່ອນເຊປຽນ, ນອກນັ້ນ ຍັງມີການລົງທຶນດ້ານການຄ້າ ແລະ ການບໍລິການ ຄື : ບ້ານພັກ ,ໂຮງແຮມ, ຫ້າງຮ້ານຕ່າງໆ,

<u>ສິນຄ້າສົ່ງອອກ ແລະ ນຳເຂົ້າ.</u>

+ ສິນຄ້ານຳເຂົ້າທັງໝົດ ສົກປີ 2012 -2013, ມູນຄ່າ: 16.725.090,19 USD

+ ສິນຄ້າສົ່ງອອກທັງໝົດ ສົກປີ 2012 -2013, ມູນຄ່າ: 7.891.023,24 USD

<u>ຕົວເລກການຈັດຕັ້ງປະຕິບັດຮອດ 9 ເດືອນຂອງສົກປີ 2013 – 2014, ມີລະອຽດຄື:</u>

+ ສິນຄ້ານຳເຂົ້າ 9 ເດືອນ ສົກປີ 2013 -2014, ມູນຄ່າ: 7.589.495,06 USD

+ ສິນຄ້າສົ່ງອອກ9 ເດືອນ ສົກປີ 2013 -2014, ມູນຄ່າ: 9.891.234,64 USD

ສິນຄ້ານຳເຂົ້າສ່ວນໃຫຍ່ ແມ່ນເຄື່ອງນຳເຂົ້າມາຮັບໃຊ້ໂຄງການຕ່າງໆເຊັ່ນ: ພາຫະນະກົນຈັກ,ຊີມັງ,ເຫຼັກເສັ້ນ,ເຫຼັກຮູບປະພັນ,ທໍ່ຢາງ, ແນວພັນ ແລະ ອື່ນໆສຳລັບຮັບໃຊ້ໂຄງການຂອງຕ່າງປະເທດ.

ສິນຄ້າສົ່ງອອກສ່ວນໃຫຍ່ ແມ່ນ ໄມ້ທ່ອນ,ຜລິດຕະພັນໄມ້,ເຄື່ອງປ່າຂອງດົງ, ສ່ວນຜົນຜລິດຈາກອຸດສາຫະກຳປຸງແຕ່ງຍັງມີໜ້ອຍເຊັ່ນ : ນ້ຳຕານຊາຍ, ກາກນ້ຳຕານ, ກ້ອນຢາງພາລາ, ສ່ວນຜົນຜລິດຈາກການປູກຝັງ, ສັດລຽງ, ຕໍ່າແຜນ, ທໍ່ໄໝ, ຈັກສານແມ່ນບໍ່ມີ.

<u>ທິດທາງຮ່ວມມືໃນຕໍ່ໜ້າ.</u>

1, ເພີ່ມທະວີການພົວພັນຮ່ວມມື ແລກປ່ຽນບົດຮຽນເຊິ່ງກັນແລະກັນ ດ້ານຂໍ້ມູນ ,ຂ່າວສານ ລະຫວ່າງ ພະແນກອຸດສາຫະກຳ ແລະ ການຄ້າແຂວງອັດຕະປື ກັບ ພະແນກ ອຸດສາຫະກຳ ແລະ ການຄ້າ ຂອງ ສສຫວຽດນາມ. ໂດຍສະເພາະບັນດາແຂວງທີ່ມີຊາຍແດນຕິດຈອດ ກັບແຂວງອັດຕະປື.

2. ຊຸກຍູ້ໃຫ້ນັກທຸລະກິດລາວ ສ້າງຕັ້ງຕາໜ່າງເກັບຊື້, ເອົາສິນຄ້າເຂົ້າໄປບໍລິການໃຫ້ທົ່ວເຖິງ ໃນທຸກໆກຸ່ມບ້ານທີ່ຢູ່ແລບຕາມຊາຍແດນ, ພະຍາຍາມໃຫ້ມີຮ້ານຂາຍເຄື່ອງ ຫຼື ຕະຫຼາດສົດຢູ່ຊາຍແດນ.

3. ສືບຕໍ່ລະດົມຂົນຂວາຍເອົານັກລົງທຶນຂອງ ສສຫວຽດນາມ ເຂົ້າລົງທຶນຢູ່ແຂວງຂອງຕົນ ໂດຍສະເພາະແມ່ນດ້ານອຸດສາຫະກຳປຸງແຕ່ງ,ປູກຝັງ,ລ້ຽງສັດ , ເພື່ອເຮັດໃຫ້ແຂວງອັດຕະປື ກໍຄື ໂຄງການພັດທະນາສາມລ່ຽມເສດຖະກິດ ( CLV ) ເປັນເຂດທີ່ພັດທະນາ,ເຂດສະຫງົບປອດໄພຢ່າງແທ້ຈິງ.

4. ສືບຕໍ່ປະສານສົມທົບ ກັບອຳນາດການປົກຄອງແຂວງກອນ ສສຫວຽດນາມ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຈັດຕັ້ງປະຕິບັດ ນະໂຍບາຍຫຼຸດຜ່ອນພາສີຂາເຂົ້າ ແລະ ສົ່ງອອກ ໃນຂອບເຂດອາຊຽນ.

ດ. ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.

ບຸນໂຮມ ພົມມະສານ

Bounhome PHOMASANH

## ແຜນການເຄື່ອນໄຫວຂອງກອງປະຊຸມ
## ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX
## (ລະຫວ່າງວັນທີ 25-27 ກັນຍາ 2014, ທີ່ແຂວງດຽນບຽນ, ສສ ຫວຽດນາມ)

| ເວລາ | ເນື້ອໃນ | ໝາຍເຫດ |
|---|---|---|
| ວັນທີ 24 ກັນຍາ 2014 (ວັນພຸດ) | | |
| 21:00 | ຄະນະ ລມຕ ລາວ ເດີນທາງຮອດ ສະໜາມບິນໂນຍບາຍ (ຖ້ຽວບິນຂອງ VN Airline ຮອດສະໜາມບິນ ໂນຍບາຍ ເວລາ 21:00) | |
| 21:00-22:00 | ຄະນະ ລມຕ ລາວ ເດີນທາງໄປພັກຢູ່ ຮ່າໂນຍ | |
| 12:00-16:00 | ຄະນະຜູ້ແທນຈາກກະຊວງ ອຄ ຂອງ ລາວ ເດີນທາງຮອດແຂວງດຽນບຽນ | ຄະນະກະກຽມ |
| ວັນທີ 25 ກັນຍາ 2014 (ວັນພະຫັດ) | | |
| 9:30-10:00 | ຄະນະຜູ້ແທນລາວອອກສູ່ສະໜາມບິນ ໂນຍບາຍ ເດີນທາງໄປ ດຽນບຽນ | (ຖ້ຽວບິນ ເວລາ 11:45 ໂມງ ) |
| 12:30 | ຄະນະນຳຝ່າຍລາວເດີນທາງຮອດສະໜາມບິນດຽນບຽນ | |
| 6:00-12:00 | ຄະນະຜູ້ແທນລາວ ອອກເດີນທາງໄປດ່ານສາກົນ ສົບຫຸບ-ໄຕຈ່າງ | ຄະນະເດີນທາງດ້ວຍລົດ |
| 12:00-14:00 | ຄະນະຜູ້ແທນລາວເດີນທາງຈາກດ່ານ ສົບຫຸບ-ໄຕຈາງ ໄປ ດຽນບຽນ | |
| 18:00-20:30 | ງານລ້ຽງຕ້ອນຮັບຄະນະຜູ້ແທນລາວ-ຫວຽດນາມ ທີ່ມາຮ່ວມກອງປະຊຸມ | ຄະນະປົກຄອງແຂວງດຽນບຽນ ເປັນເຈົ້າພາບ |
| ວັນທີ 26 ກັນຍາ 2014 (ວັນສຸກ)<br>ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX | | |
| 7:30-7:45 | ຄະນະຜູ້ແທນທັງສອງຝ່າຍໄປຄຳນັບສຸສານນັກຮົບວິລະຊົນ A1 | ຄະນະທັງໝົດ |
| 7:45-7:50 | ຄະນະຜູ້ແທນທັງສອງຝ່າຍເດີນທາງໄປເຂົ້າຮ່ວມກອງປະຊຸມ ທີ່ຫ້ອງປະຊຸມ ຂອງ ຫ້ອງການຄະນະກຳມະການປະຊາຊົນແຂວງດຽນບຽນ | |
| 7:50-8:15 | - ລົງທະບຽນ ແລະ ແຈກເອກະສານກອງປະຊຸມ.<br>- ຕ້ອນຮັບຄະນະຜູ້ນຳເຂົ້າຫ້ອງຮັບຮອງ. | ຄະນະຈັດຕັ້ງກອງປະຊຸມ |
| 8:20-8:25 | ຄະນະຈັດຕັ້ງກ່າວຕ້ອນຮັບຄະນະເຂົ້າຮ່ວມກອງປະຊຸມ | ຄະນະຈັດຕັ້ງກອງປະຊຸມ |
| 8:25-8:30 | ເຄົາລົບທຸງ | ຜູ້ເຂົ້າຮ່ວມທັງໝົດ |
| 8:30-8:40 | - ເຊີນຄະນະນຳຂຶ້ນນັ່ງເທິງເວທີຊີ້ນຳກອງປະຊຸມ.<br>- ແນະນຳຄະນະຜູ້ແທນທີ່ມາເຂົ້າຮ່ວມກອງປະຊຸມ. | ຄະນະຈັດຕັ້ງກອງປະຊຸມ |
| 8:40-8:50 | ກ່າວຕ້ອນຮັບຜູ້ເຂົ້າຮ່ວມກອງປະຊຸມ | ການນຳແຂວງດຽນບຽນ |
| 8:50-9:00 | ລມຕ ກະຊວງ ອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ກ່າວເປີດກອງປະຊຸມ | ທ່ານ ຫວູ ຮືວຮ່ວາງ ລມຕ ກະຊວງ ອຄ ສສ ຫວຽດນາມ |
| 9:00-9:10 | ລມຕ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ຂຶ້ນກ່າວປາໃສຕໍ່ກອງປະຊຸມ | ທ່ານ ນາງ ເຂັມມະນີ ພົນເສນາ ລມຕ ກະຊວງ ອຄ ສປປ ລາວ |
| 9:10-9:25 | ລມຕຊ ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ຂຶ້ນລາຍງານໝາກຜົນການເຄື່ອນໄຫວ ການຄ້າຊາຍແດນ ຫວຽດນາມ-ລາວ | ທ່ານ ຫງຽນ ເກີມຕູ້ ລມຕຊ ກະຊວງ ອຄ ສສ ຫວຽດນາມ |
| 9:25-9:40 | ລມຕຊ ການກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ຂຶ້ນລາຍງານ ໝາກຜົນການເຄື່ອນໄຫວ ວຽກງານ ການຄ້າຊາຍແດນ ລາວ-ຫວຽດນາມ | ທ່ານ ບຸນມີ ມະນີວົງ ລມຕຊ ກະຊວງ ອຄ ສປປ ລາວ |
| 9:40-10:00 | ບັນດາຜູ້ແທນຈາກບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ຂອງທັງສອງຝ່າຍມີຄຳເຫັນຕໍ່ກອງປະຊຸມ | |

| | | |
|---|---|---|
| 10:00-10:15 | ພັກຜ່ອນ | ຄະນະຜູ້ແທນທັງໝົດ |
| 10:15-11:30 | ບັນດາຜູ້ແທນຈາກບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ແລະ ພາກທຸລະກິດ ຂອງ ທັງສອງຝ່າຍມີຄຳເຫັນຕໍ່ກອງປະຊຸມ | |
| 12:00-13:30 | ພັກຜ່ອນຮັບປະທານອາຫານທ່ຽງ | |
| | <u>ພາກບ່າຍ</u> | |
| 14:00-15:30 | ຄະນະຜູ້ແທນຈາກບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ຂອງທັງສອງຝ່າຍສືບຕໍ່ມີຄຳເຫັນຕໍ່ກອງປະຊຸມ | ຄະນະຜູ້ແທນທັງໝົດ |
| 15:30-15:40 | ພັກຜ່ອນ | |
| 15:40-15:50 | ລມຕ ກະຊວງອຸດສາຫະກຳ ແລະ ການຄ້າ ສປປ ລາວ ຂຶ້ນກ່າວສະຫຼຸບກອງປະຊຸມ | ທ່ານ ນາງ ເຂັມມະນີ ພົນເສນາ ລມຕ ກະຊວງ ອຄ ສປປ ລາວ |
| 15:50-16:00 | ລມຕ ກະຊວງອຸດສາຫະກຳ ແລະ ການຄ້າ ສສ ຫວຽດນາມ ຂຶ້ນກ່າວສະຫຼຸບກອງປະຊຸມ | ທ່ານ ຫວູ ຮືວຮ່ວາງ ລມຕ ກະຊວງ ອຄ ສສ ຫວຽດນາມ |
| 16:00-16:05 | ພັກຜ່ອນເພື່ອກະກຽມພິທີເຊັນບົດບັນທຶກ ແລະ ຍ້ອງຍໍ | ຄະນະຜູ້ແທນທັງໝົດ |
| 16:05-16:15 | - ລມຕ ທັງສອງຝ່າຍຮ່ວມເຊັນບົດບັນທຶກກອງປະຊຸມ.<br>- ລມຕ, ລມຕຊ ຫວຽດນາມມອບຂອງຂວັນໃຫ້ ລມຕ, ລມຕຊ ລາວ<br>- ລມຕ, ລມຕຊ ລາວມອບຂອງຂວັນໃຫ້ ລມຕ, ລມຕຊ ຫວຽດນາມແລະ ການນຳແຂວງດຽນບຽນ | |
| 16:20-17:00 | ອ່ານຂໍ້ຕົກລົງ ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນຝ່າຍລາວ | ກົມແຂ່ງຂັນ ແລະ ຍ້ອງຍໍ ກະຊວງ ອຄ ຫວຽດນາມ |
| | ລມຕ ຫວຽດນາມ ມອບໃບຍ້ອງຍໍໃຫ້ຄະນະ ແລະ ບຸກຄົນ ຂອງຝ່າຍລາວ. | ທ່ານ ຫວູ ຮືວຮ່ວາງ ລມຕ ກະຊວງ ອຄ ສສ ຫວຽດນາມ |
| | ອ່ານຂໍ້ຕົກລົງຍ້ອງຍໍ ຜູ້ທີ່ມີຜົນງານດີເດັ່ນ ຝ່າຍ ຫວຽດນາມ | ກົມຈັດຕັ້ງ ແລະ ພະນັກງານ ກະຊວງ ອຄ ສປປ ລາວ |
| | ລມຕ ລາວ ມອບໃບຍ້ອງຍໍໃຫ້ຄະນະ ແລະ ບຸກຄົນ ຂອງຝ່າຍຫວຽດນາມ | ທ່ານ ນາງ ເຂັມມະນີ ພົນເສນາ ລມຕ ກະຊວງ ອຄ ສປປ ລາວ |
| 17:00-17:15 | ກ່າວປິດກອງປະຊຸມ | ຄະນະຈັດຕັ້ງກອງປະຊຸມ |
| 18:00-20:00 | ງານລ້ຽງຕ້ອນຮັບຄະນະຜູ້ແທນທັງສອງປະເທດ | ກະຊວງ ອຄ ຫວຽດນາມ ເປັນເຈົ້າພາບ |
| | <u>ວັນທີ 27 ກັນຍາ 2014 (ວັນເສົາ)</u> | |
| 8:00-11:00 | ຄະນະຜູ້ແທນຝ່າຍ ຫວຽດນາມ ເດີນທາງກັບ | ຄະນະຈັດຕັ້ງກອງປະຊຸມ |
| 7:30-8:30 | ຄະນະຜູແທນຝ່າຍລາວເດີນທາງເຂົ້າພົບການນຳແຂວງດຽນບຽນ | ສະເພາະ ຫົວໜ້າຄະນະ ແລະ ຜູ້ແທນຈຳນວນໜຶ່ງ |
| 8:30-10:30 | ຄະນະຜູ້ແທນຝ່າຍລາວໄປທ່ຽວຊົມສະຖານທີ່ປະຫວັດສາດຂອງແຂວງດຽນບຽນ | ຄະນະທັງໝົດ |
| 11:15 | ຄະນະນຳທັງສອງຝ່າຍເດີນທາງໄປຮ່ານ້ອຍ | ຖ້ຽວບິນ 11:45 ໂມງ |
| | ຄະນະຝ່າຍລາວເດີນທາງກັບ | ຄະນະເດີນທາງດ້ວຍລົດ |
| 11:45-12:00 | ຄະນະນຳທັງສອງຝ່າຍເດີນທາງຮອດ ສະໜາມບິນໂນຍບາຍ, ຮ່ານ້ອຍ | |
| 16:00 | ຄະນະນຳ ຝ່າຍ ລາວ ເດີນທາງກັບນະຄອນຫຼວງວຽງຈັນ | ຖ້ຽວບິນ 16:40 ໂມງ |

# ບັນຊີລາຍຊື່ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ - ຫວຽດນາມ ຄັ້ງທີ່ IX

## ລະຫວ່າງວັນທີ 25-27 ກັນຍາ 2014, ທີ່ ແຂວງ ດຽນບຽນ, ສສ ຫວຽດນາມ

### I. ກະຊວງອຸດສາຫະກຳ ແລະ ການຄ້າ (13 ທ່ານ)

| ລ/ດ | ຊື່ ແລະ ນາມສະກຸນ | ພາກສ່ວນ | ເບີໂທ |
|---|---|---|---|
| 1 | ທ່ານ ນາງ ເຂັມມະນີ ພົນເສນາ | ລັດຖະມົນຕີວ່າການ, ກະຊວງອຸດສາຫະກຳ ແລະ ການຄ້າ | 020 99901209 |
| 2 | ທ່ານ ບຸນມີ ມະນີວົງ | ລັດຖະມົນຕີຊ່ວຍວ່າການ, ກະຊວງອຸດສາຫະກຳ ແລະ ການຄ້າ | 020 22227204 |
| 3 | ທ່ານ ປະເສີດ ໃຈວາງໝັ້ນ | ຫົວໜ້າກົມ, ກົມຈັດຕັ້ງ | 020 99801643 |
| 4 | ທ່ານ ນາງ ບານສະຕີ ເທບພະວົງ | ຫົວໜ້າກົມ, ກົມການນຳເຂົ້າ ແລະ ສົ່ງອອກ | 020 54336346 |
| 5 | ທ່ານ ສຸລິຍົນ ພິລາວົງ | ຮອງຫົວໜ້າກົມ, ກົມການຄ້າພາຍໃນ | 020 99900344 |
| 6 | ທ່ານ ນາງ ຄຳແພງ ສິມມະສອນ | ທີ່ປຶກສາເສດຖະກິດ-ການຄ້າ ປະຈຳຮ່າໂນ້ຍ ສສ ຫວຽດນາມ | - |
| 7 | ທ່ານ ໄຊທິເດດ ອິນທະສອນ | ຮອງຫົວໜ້າກົມ, ກົມການນຳເຂົ້າ ແລະ ສົ່ງອອກ | 020 22223263 |
| 8 | ທ່ານ ນາງ ຕານທອງ ພວງມະຈັນ | ເລຂາລັດຖະມົນຕີວ່າການ | 020 55685252 |
| 9 | ທ່ານ ສຸພາພອນ ອິນທະພົນ | ຮອງຫົວໜ້າພະແນກການຄ້າຊາຍແດນ, ກົມການນຳເຂົ້າ ແລະ ສົ່ງອອກ | 020 56303394 |
| 10 | ທ່ານ ພຸດສາຄອນ ແສງມະນີພອນ | ຮອງຫົວໜ້າພະແນກ, ກົມນະໂຍບາຍການຄ້າຕ່າງປະເທດ | 020 98317599 |
| 11 | ທ່ານ ສອນພັນ ເລືອງຄຳມາ | ວິຊາການ, ພະແນກການຄ້າຊາຍແດນ, ກົມການນຳເຂົ້າ ແລະ ສົ່ງອອກ | 020 99822289 |
| 12 | ທ່ານ ພອນໄຊ ຈັນທະວົງ | ວິຊາການ, ພະແນກອຳນວຍຄວາມສະດວກທາງດ້ານການຄ້າ, | 020 99776600 |
| 13 | ທ່ານ ເພັດ ສຸວົງ | ວິຊາການ, ພະແນກການຄ້າຊາຍແດນ, ກົມການນຳເຂົ້າ ແລະ ສົ່ງອອກ | 020 22279990 |
| 14 | ທ່ານ ວົງຄຳ ມະນີຈັນ | ວິຊາການ, ພະແນກການຄ້າຊາຍແດນ, ກົມການນຳເຂົ້າ ແລະ ສົ່ງອອກ | 020 22399513 |
| 15 | ທ່ານ ສົມສະຫວາດ | ພະນັກງານຂັບລົດ | 020 55422671 |
| 16 | ທ່ານ ແສງຈັນ | ພະນັກງານຂັບລົດ | 020 23399582 |
| 17 | ທ່ານ ແສງສຸລີ | ພະນັກງານຂັບລົດ | 020 28886468 |

### II. ຂະແໜງການກ່ຽວຂ້ອງ 4 ທ່ານ

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ເບີໂທ |
|---|---|---|---|
| 1 | ທ່ານ ບົວເພັດ ໄຊຍະສານ | ຮອງຫົວໜ້າກົມ, ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ | 020 22225505 |
| 2 | ທ່ານ ສົງຫາ ສົງສະຫວັນ | ຮອງຫົວໜ້າຫ້ອງການຄະນະກຳມາທິການຮ່ວມມື ລາວ-ຫວຽດນາມ, ກະຊວງແຜນ ການ ແລະ ການລົງທຶນ | 020 22254057 |
| 3 | ທ່ານ ພັນໂທ ທຸມມີ ພຸນທອງສີ | ຮອງຫົວໜ້າກົມ, ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງປ້ອງຄວາມສະຫງົບ | 020 55519476 |
| 4 | ທ່ານ ທອງຫຼ້າ ອອນມີໄຊ | ຮອງຫົວໜ້າພາສີປະຈຳເຂດ I, ກະຊວງການເງິນ | 020 55686345 |

## III. ພະແນກອຸດສາຫະກຳ ແລະ ການຄ້າ 12 ແຂວງ

| ລ/ດ | ແຂວງ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ເບີໂທ |
|---|---|---|---|---|
| 1 | ຫຼວງພະບາງ | ທ່ານ ຄຳພຸຍ ພິມມະວົງ | ຮອງຫົວໜ້າພະແນກ | 020 22357543 |
| | | ທ່ານ ອິດສະຫຼະ ບຸນຍະສອນ | ຮອງຫົວໜ້າຂະແໜງ | 020 56432855 |
| 2 | ອັດຕະປື | ທ່ານ ສັນຕິໄຊ ສີລີໄຊ | ຫົວໜ້າຫ້ອງການ | 020 55735111 |
| | | ທ່ານ ໄອພາດ ວົງມາຈຽງ | ຫົວໜ້າຂະແໜງ | 020 56275555 |
| 3 | ເຊກອງ | ທ່ານ ດຣ ແພງສີ ສີລາວົ | ຫົວໜ້າພະແນກ | 020 55638308 |
| | | ທ່ານ ພານົດ ສີລາວົ | ຮອງຫົວໜ້າຂະແໜງ | 020 98943332 |
| | | ທ່ານ ສີສົມພອນ ເບັງໄຊສີ | ພະນັກງານຂັບລົດ | - |
| 4 | ຫົວພັນ | ທ່ານ ພອນສານ ວິໄລເມັ້ງ | ຫົວໜ້າພະແນກ | 020 22347995 |
| | | ທ່ານ ອຳພອນ ພິມແກ້ວວົງຄຳ | ວ່າການຫົວໜ້າຂະແໜງ | 020 22346659 |
| 5 | ຄຳມ່ວນ | ທ່ານ ສົງເພັດ ແກ້ວໂສພາ | ຫົວໜ້າພະແນກ | 020 55550043 |
| | | ພະນັກງານຂັບລົດ | ພະນັກງານຂັບລົດ | - |
| 6 | ຊຽງຂວາງ | ທ່ານ ຄຳປາວ | ຫົວໜ້າພະແນກ | 020 55561005 |
| | | ທ່ານ ຄຳແກ້ວ ວົງສົມສີ | ພະນັກງານຂັບລົດ | 020 22340134 |
| 7 | ຜົ້ງສາລີ | ທ່ານ ບຸນທັນ ສົມດີ | ຫົວໜ້າພະແນກ | 020 55313037<br>020 99804755 |
| | | ທ່ານ ບຸນປົງ ຫຼວງພະການ | ວິຊາການ | 020 59764003 |
| 8 | ສະຫວັນນະເຂດ | ທ່ານ ຄຳພຸຍ ສີບຸນເຮືອງ | ຮອງຫົວໜ້າພະແນກ | 020 96074199 |
| | | ທ່ານ ແກ້ວວິຈິດ ໄຂຄຳພິທູນງ | ວິຊາການ | 02022667676 |
| 9 | ສາລະວັນ | ທ່ານ ບຸນຊູ ລັດສະໝີ | ຮອງຫົວໜ້າພະແນກ | 020 55648361 |
| | | ທ່ານ ສຸກໄຊ ຈັນທະນາຄານ | ຫົວໜ້າຂະແໜງ | 020 2284222 |
| 10 | ບໍລິຄຳໄຊ | ທ່ານ ສະຫວນ ສະຫວ່າງ | ຫົວໜ້າພະແນກ | 020 2233008<br>020 99971117 |
| | | ທ່ານ ຕຸ້ຍ ຈັນທະມຸງຄຸນ | ຮອງຫົວໜ້າຂະແໜງ | 020 22337147 |
| 11 | ອຸດົມໄຊ | ທ່ານ ບຸນທັນ ວັນນະໃຈ | ຫົວໜ້າພະແນກ | 020 99101789 |
| | | ທ່ານ ຂັນແກ້ວ ກຸລາວົງ | ຮອງຫົວໜ້າຂະແໜງ | 020 56060889 |
| | | ທ່ານ ລັດຕະນະກອນ | ພະນັກງານຂັບລົດ | 020 23540000 |
| 12 | ຈຳປາສັກ | ທ່ານ ສີທົນ ແກ້ວພູວົງ | ຫົວໜ້າພະແນກ | 02055325888 |
| | | ທ່ານ ພານາວັນ ວົງສາລາດ | ຫົວໜ້າຂະແໜງ | 02096427999 |

## IV. ພາກສ່ວນທຸລະກິດ

| ລ/ດ | ແຂວງ | ຊື່ ແລະ ນາມສະກຸນ | ພາກສ່ວນ | ເບີໂທ |
|---|---|---|---|---|
| 1 | ອັດຕະປື | ທ່ານ ຄຳໄພ ຄຳພິລາວົງ | ລັດວິສະຫະກິດການຄ້າ | 020 98588881 |
| 2 | ຫຼວງພະບາງ | ທ່ານ ຝາມ ກ໋ວກ ຮວານ | ພັດທະນາກະສິກຳ ແລະ ປ່າໄມ້ | 020 95688888 |
| 3 | ເຊກອງ | ທ່ານ ທອງຄານ ຄຸນປະເສີດ | ຮອງປະທານສະພາການຄ້າ | 020 56674444 |
| 4 | ຄຳມ່ວນ | ທ່ານ ຄຳມ່ວນ ບຸນທະໜອມ | ເຟີນີເຈີ້ | 020 55550820 |
| 5 | ຫົວພັນ | ທ່ານ ນາງ ຕຸດ ສີສຸພັນ | ສົ່ງເສີມປູກສາລີເພື່ອສົ່ງອອກ | 020 99943550 |
| 6 | ຊຽງຂວາງ | ທ່ານ ຄຳພູ ວັນນາຈັກ | ການຄ້າ ຂາອອກ - ຂາເຂົ້າ | 020 22340131 |
| 7 | ສະລະວັນ | ທ່ານ ທະວີສັກ ອິນສີຊຽງໃໝ່ | ຫັດຖະກຳໄມ້ | 020 99859749 |
| 8 | ສະຫວັນນະເຂດ | ທ່ານ ຫອມ ສີຫາຈັກ | ກຸ່ມບໍລິສັດຄູນຄຳ | 020 55541778 |
| 9 | | ທ່ານ ສີພັນດອນ ມີໄຊ | ໂຮງງານປຸງແຕ່ງໄມ້ເຟີນີເຈີ້ | 020-99458888 |
| 10 | ຜົ້ງສາລີ | ທ່ານ ຄຳສີ ວໍລະວົງ | ການຄ້າຂາອອກ-ຂາເຂົ້າ | 020 55576697 |
| 11 | ບໍລິຄຳໄຊ | ທ່ານ ບຸນທຳ ສີໃສແກ້ວ | ສະແກນເນີອິເລັກທຣິກ ອິນເຕີເນເຊີແນວ | 020 22330323 |
| 12 | ອຸດົມໄຊ | ທ່ານ ຫງວຽນກວາງຮົງ | ພັດທະນາກະສິກຳຂາອອກ-ຂາເຂົ້າ | 020 55580011 |
| 13 | | ທ່ານ ພີວັນເສົາ | ຜູ້ທີ່ພັດທະນາກະສິກຳຂາອອກ-ຂາເຂົ້າ | 020 55802216 |

# List of Lao Participants
# For the 9th Meeting on Lao-Vietnam Cooperation of Border Trade Development
# 25 -27 September 2014, Dien Bien Province, Vietnam

## I. Ministry of Industry and Commerce

| No | Name and Surname | Position |
|---|---|---|
| 1 | Mrs. Khemmani PHOLSENA | Minister of Ministry of Industry and Commerce. |
| 2 | Mr. Bounmy MANIVONG | Vice Minister of Ministry of Industry and Commerce |
| 3 | Mr. Paseuth CHAYVANGMANH | Director General of Personnel Department, MOIC |
| 4 | Mrs. Banesati THEPPHAVONG | Director General of Import and Export Department, MOIC |
| 5 | Mr. Soulinhon PHILAVONG | Deputy Director General of domestic trade, MOIC |
| 7 | Mr. Xaythideth INTHASONE | Deputy Director General of Import and Export Department, MOIC |
| 8 | Ms. Tanthong PHOUANGMACHANE | Minister's secretary, MOIC |
| 9 | Mrs.Souphaphone INTHAPHONH | Deputy Director of Border Trade Division, Import and Export Department, MOIC |
| 10 | Phutsakhon SENGMANIPHON | Deputy Director Bilateral Trade Division, Foreign Trade Policy Department, MOIC |
| 11 | Mr. Phonexay CHANTHAVONG | Technical official of Trade Facilitation Division, Import and Export Department, MOIC |
| 12 | Mr. Sonephanh LEUANGKHAMMA | Technical official of Border Trade Division, Import and Export Department, MOIC |
| 13 | Mr. Phet SOUVONG | Technical official of Border Trade Division, Import and Export Department, MOIC |
| 14 | Mr. Vongkham MANICHANH | Technical official of Border Trade Division, Import and Export Department, MOIC |

## I. Relevant Ministries and Department

| No | Name and Surname | Position |
|---|---|---|
| 1 | Mr. Buaphet SAYASAN | Deputy Director of Transport Department, Ministry of Public Work and Transport. |
| 2 | Mr. Singha SINGSAVANH | Deputy Director of Ministry of Planning and Investment |
| 3 | Mr. Thummi PHUNTHONGSY | Deputy Director of Immigration department, Ministry of Defense. |
| 4 | Mrs. Khampheng Simmasone | Representative of Commerce and Industry to Vietnam |
| 5 | Mr. Thongla ONLEUXAY | Deputy Director of 1st Reginal Custom, Ministry of Finance. |

## II. Department of Industry and Commerce.

| No | Province | Name and Surname | Position |
|---|---|---|---|
| 1 | LUANGPRABANG | Mr. Khamphouy PHOMMAVONG | Deputy Director |
| | | Mr. Itsala BOUNGNASONE | Deputy Head of Import and Export Unit |
| 2 | ATTAPEU | Mr.Santisay SILUESAY | Permanent Secrety |
| | | Mr.Ophat VONGMACHIENG | Head of Import and Export Unit |
| 3 | XEKONG | Mr. Phengsy SYLAVY | Director |
| | | Mr.Thongchan CHUNPHASERT | Deputy Director |
| | | Mr. Phanit SILAVY | Driver |
| 4 | HOUAPHAN | Mr.Phonessane VILAYMENG | Director |
| | | Mr.Amphone PHIMKEOVONGKHAM | Acting Head of Import and Export Unit |
| 5 | KHAMMOUANE | Mr.Singhaphet KEOSOPHA | Director |
| | | Driver | Driver |
| 6 | XIENGKHOANG | Mr.Khampao | Director |
| | | Mr.Khamkeo VONGSOMMY | Driver |
| 7 | PHONGSALY | Mr. Bountanh SOMDEE | Director |
| | | Mr. Bounping LOUNGPHAKAN | Technical Offcial |
| 8 | SAVANNAKHET | Mr.Khamphouy SYBOUNHEUNG | Deputy Director |
| | | Mr.Keovichit KHAYKHAMPHITHOUN | Technical offcial |
| 9 | SALAVAN | Mr. Bounxou LATSAMEE | Deputy Director |
| | | Mr. Soukxay CHANTHANAKONE | Head of Import and Export Unit |
| 10 | BOLIKHAMXAY | Mr. Sahounae SAVANG | Director |
| | | Mr.Tuy CHANTHANOUGKHOUN | Deputy Head of Import and Export Unit |
| 11 | OUDOMXAY | Mr. Bounthanh VANNACHI | Director |
| | | Mr. Khankeo KHOULAVONG | Deputy Head of Import and Export Unit |
| | | Mr. Lathanakone | Driver |
| 12 | CHAMPASAK | Mr. Sithonh KEOPHOUVONG | Director |
| | | Mr. Phanavanh VONGSALATH | Head of Promotion and Development of Goods Unit |

## III. Private Sectors

| No | Province | Name and Surname | Section |
|---|---|---|---|
| 1 | ATTAPEU | Mr.Khamphay KHAMPHILAVONG | Khamphay Trading State Enterprise |
| 2 | LUANGPRABANG | Mr. Pham Quoc Hoan | Sokxay Agriculture and Forestry Company Limited |
| 3 | SEKONG | Mr. Thongkhan KHUNPASERTH | Vice President Chamber of Commerce and Industry |
| 4 | KHAMMOUANE | Mr. Khammouane BOUTHANOME | Xi Nghiep Moc Khammouane |
| 5 | HOUAPHAN | Ms. Thout SISOUPHAUH | Sy Development Import and Export Company Limited |
| 6 | XIENGKHOANG | Mr.Khamphou VANHNACHACK | Import and Export Development State Enterprise |
| 7 | SALAVAN | Mr. Thavisack INSIXIENGMAI | Peace Led a Workshop for the Manufacturing of Wood Products |
| 8 | SAVANNAKHET | Mr.Hom XIHAJACK | Khounkham Groups |
| 9 | | Mr. Syphandon MIXAY | Wooden Furniture Factory |
| 10 | PHONGSALY | Mr. Khamsy VOLAVONG | Import-Export Trading Company Limited |
| 11 | BOLIKHAMXAY | Mr.Bounnam SYSAYKEO | Scaner Electric Internation Company Limited |
| 12 | OUDOMXAY | Mr.Nguyen Goang Hung | Agriculture Development and Import-Export Company Limited |
| 13 | | Mr.PHYVANSAU | Phu Tho Agriculture Development and Import-Export Company Limited |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ **1624** /ຫອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 12 ກັນຍາ 2014

ເຖິງ: - ທ່ານ ຫົວໜ້າ/ຮອງຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ

- ທ່ານ ຜູ້ຕາງໜ້າກະຊວງ ແລະ ຂະແໜງການ.

ເລື່ອງ: ການເດີນທາງ ເຂົ້າຮ່ວມກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX ທີ່ ເມືອງດຽນບຽນ, ນະຄອນ ດຽນບຽນ, ສສ ຫວຽດນາມ ໃນລະຫວ່າງວັນທີ 25-27 ກັນຍາ 2014.

- ອີງໃສ່ໜັງສືເຊື້ອເຊີນເຂົ້າຮ່ວມກອງປະຊຸມ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 426/BCT-BGMN, ລົງວັນທີ 06 ກັນຍາ 2014;
- ອີງຕາມທິດຊີ້ນຳຂອງ ທ່ານ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກາ ແລະ ການຄ້າ ຄັ້ງວັນທີ 09 ກັນຍາ 2014.

ຫ້ອງການ ກະຊວງ ອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບ ກ່ຽວກັບ ການເດີນທາງ ເຂົ້າຮ່ວມ ກອງປະຊຸມການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX ທີ່ເມືອງດຽນບຽນ ນະຄອນດຽນບຽນ ສສ ຫວຽດນາມ ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 25-27 ກັນຍາ 2014 ຂອງ ດັ່ງມີລາຍລະອຽດລຸ່ມນີ້:

1. ການເດີນທາງຂອງ ຄະນະ ຈາກ ກະຊວງ ອຸດສາຫະກາ ແລະ ການຄ້າ:
   - ວັນຈັນ ທີ 22 ກັນຍາ 2014 ເວລາ 7:00 ໂມງເຊົ້າ ເຕົ້າໂຮມຢູ່ກະຊວງ ອຸດສາຫະກຳ ແລະ ການຄ້າ ອອກເດີນ ທາງໄປຕາມເສັ້ນທາງເລກທີ 2 E ໄປ ແຂວງ ຫຼວງພະບາງ ແລະ ພັກຢູ່ແຂວງພະບາງ 01 ຄືນ.
   - ວັນອັງຄານ ທີ 23 ກັນຍາ 2014 ເວລາ 6:00 ໂມງເຊົ້າ ເດີນທາງໄປແຂວງອຸດົມໄຊເພື່ອສົມທົບກັບຄະນະເດີນທາງດ້ວຍບິນ ແລະ ພັກຢູ່ອຸດົມໄຊ 01 ຄືນ.
   - ວັນພຸດ ທີ 24 ກັນຍາ 2014 ເວລາ 6:00 ໂມງເຊົ້າ ອອກເດີນທາງໄປ ແຂວງ ດຽນບຽນ (ໄລຍະທາງແຕ່ອຸດົມໄຊ ຮອດປາກນ້ຳນ້ອຍ ແມ່ນ 62 km ໃຊ້ເວລາໃນການເດີນທາງປະມານ 1:30 ຊົ່ວໂມງ. ຫຼັງຈາກນັ້ນ, ເດີນທາງຈາກປາກນ້ຳນ້ອຍໄປດ່ານສາກົນ ສົບຫຸນ-ເຕີ່ຍຈ່າງ ໄລຍະທາງ 113 km ໃຊ້ເວລາໃນການເດີນທາງປະມານ 3:00 ຊົ່ວໂມງ ແລະ ເດີນທາງຕໍ່ຈາກດ່ານ ສົບຫຸນ-ເຕີ່ຍຈ່າງ ໄປນະຄອນດຽນບຽນ ໄລຍະທາງ 41 km ໃຊ້ເວລາປະມານ 1:20 ຊົ່ວໂມງ).
2. ການເດີນທາງ ຂອງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ພາກທຸລະກິດທີ່ຈະເອົາລົດໄປເອງ:
   - ບັນດາພະແນກອຸດສາຫະກຳ ແລະ ການຄ້າ ທີ່ມີຈຸດປະສົງເດີນທາງຮ່ວມຂະບວນກັບຄະນະຈາກ ກະຊວງ ອຸດສາ ຫະກຳ ແລະ ການຄ້າ ຕ້ອງມີໜ້າຢູ່ ກະຊວງ ອຸດສາຫະກຳ ແລະ ການຄ້າກ່ອນ 6:00 ໂມງເຊົ້າ ຂອງ ວັນພຸດ ທີ 23 ກັນຍາ 2014.
   - ກໍລະນີທີ່ບໍ່ມີຈຸດປະສົງຈະຮ່ວມເດີນທາງກັບຂະບວນຈາກ ກະຊວງ ອຸດສາຫະກຳ ແລະ ການຄ້າ ຢູ່ ນະຄອນຫຼວງ ສາມາດໄປສົມທົບກັບຄະນະຂອງກະຊວງ ຢູ່ ແຂວງ ອຸດົມໄຊ ໃນຕອນເຊົ້າ ຂອງ ວັນພຸດ ທີ 24 ກັນຍາ 2014 ເວລາ 6:00 ໂມງເຊົ້າ ທີ່ຫ້ອງການພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ອຸດົມໄຊ; ຫຼື

\-

- ສາມາດໄປສົມທົບກັບຄະນະ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ອຸດົມໄຊ ໃນຕອນເຊົ້າຂອງ ວັນທີ 25 ກັນຍາ 2014 ເວລາ 7:00 ໂມງເຊົ້າ ທີ່ ຫ້ອງການພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ອຸດົມໄຊ (ລາຍລະອຽດເພີ່ມເຕີມສາມາດຕິດຕໍ່ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ອຸດົມໄຊ ຕາມ ເບີໂທຕິດຕໍ່ຜູ້ຮັບຜິດຊອບລຸ່ມນີ້).

3. ສ່ວນພະແນກອຸດສາຫະກຳ ແລະ ການຄ້າ ແລະ ນັກທຸລະກິດ ທີ່ບໍ່ມີຈຸດປະສົງຈະເດີນທາງຮ່ວມກັບຄະນະ ຈາກ ກະຊວງ ອຸດສາຫະກຳ ແລະ ການຄ້າ ແມ່ນຂໍໃຫ້ມີໜ້າ ຢູ່ ໂຮງແຮມເມືອງແທັງ (Muong Thanh Hotel) ທີ່ຢູ່: 514 7/5 Street, Him Lam Ward, 28000 Dien Bien Phu ເບີໂທລະສັບ: **(+84-23) 03810 043,** ໃນຕອນແລງ ຂອງ ວັນພະຫັດ 25 ກັນຍາ 2014.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງນີ້ດ້ວຍ.

ຫົວໜ້າຫ້ອງການ,

**ສຸດທະວັນ ນັນທະວົງ**

<u>ເບີໂທຕິດຕໍ່ຄະນະຮັບຜິດຊອບ:</u>

❖ <u>ຝ່າຍລາວ</u>

➢ ກະຊວງ ອຸດສາຫະກຳ ແລະ ການຄ້າ

1. ທ່ານ ສອນພັນ ເລືອງຄໍາມາ ເບີໂທ: 020 99822289; +84-91-8184871
2. ທ່ານ ພອນໄຊ ຈັນທະວົງ ເບີໂທ: **020 99776600**
3. ທ່ານ ວົງຄໍາ ມະນີຈັນ ເບີໂທ: **020 22399513**
4. ທ່ານ ເພັດ ສຸວົງ ເບີໂທ: **020 22279990;**
   **020 55570868**

➢ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ອຸດົມໄຊ

1. ທ່ານ ສຸລິນ ເບີໂທ: 020 22375857

❖ <u>ຝ່າຍ ຫວຽດນາມ</u>

➢ ກະຊວງ ອຸດສາຫະກຳ ແລະ ການຄ້າ ຫວຽດນາມ

1. ທ່ານ Bui Ba Nghiem ເບີໂທ: **+ 84-90-4499268**
2. ທ່ານ Do Huu Tung ເບີໂທ: **+ 84-98-8119086**

➢ ຫ້ອງວ່າການແຂວງດຽນບຽນ

1. ທ່ານ To Anh Vu ເບີໂທ: **+84 98-2210888;**
   **+84-12-39600788;**
   **+84-91-5181378**

# ແຜນການເດີນທາງ ຂອງ ຄະນະຜູ້ແທນ ຈາກ ກະຊວງ ອຸດສາຫະກຳ ແລະ ການຄ້າ
## ເພື່ອເຂົ້າຮ່ວມກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ຄັ້ງທີ IX
## ທີ່ ແຂວງ ດຽນບຽນ ສສ ຫວຽດນາມ ໃນລະຫວ່າງວັນທີ 25-27 ກັນຍາ 2014

| ວັນອັງຄານ, ວັນທີ 23 ກັນຍາ 2014 | | |
|---|---|---|
| ເວລາ | ເນື້ອໃນ | ໝາຍເຫດ |
| 5:50 - 6:00 | ເຕົ້າໂຮມກັນຢູ່ ກະຊວງ ອຸດສາຫະກຳ ແລະ ການຄ້າ | |
| 6:10 | ຂະບວນລົດເລີ່ມອອກເດີນທາງຈາກກະຊວງ ອຸດສາຫະກຳ ແລະ ການຄ້າ | |
| 9:00 - 9:45 | ອາຫານເຊົ້າ | ໂພນໂຮງ |
| 12:00 - 13:30 | ອາຫານທ່ຽງ | ເມືອງຊຽງເງິນ |
| 13:30 - 19:00 | ເດີນທາງຮອດ ອຸດົມໄຊ | |
| 19:00 - 20:30 | ອາຫານແລງ | ອຸດົມໄຊ |
| 20:30 | ເຂົ້າທີ່ພັກ | |
| **ວັນພຸດ, ວັນທີ 24 ກັນຍາ 2014** | | |
| 6:00 - 7:30 | ອອກເດີນທາງຈາກອຸດົມໄຊໄປປາກນ້ຳນ້ອຍ | ໄລຍະທາງ 62 km |
| 7:30 - 8:30 | ພັກຜ່ອນກິນເຂົ້າເຊົ້າ | |
| 8:30 - 11:30 | ອອກເດີນທາງໄປດ່ານສາກົນ ສົບຫຸນ-ເຕີຍຈ່າງ | ໄລຍະທາງ 113 km |
| 11:30 - 13:00 | ເດີນທາງຮອດດຽນບຽນ | ໄລຍະທາງ 41 km |
| 13:00 - 14:00 | ກິນເຂົ້າທ່ຽງ | ແຂວງ ດຽນບຽນ |
| 14:00 | ເຂົ້າທີ່ພັກ | ໂຮງແຮມເມືອງແທັງ |

<u>ເບີໂທຕິດຕໍ່ຄະນະຮັບຜິດຊອບ</u>:

❖ <u>ຝ່າຍລາວ</u>

➢ ກະຊວງ ອຸດສາຫະກຳ ແລະ ການຄ້າ

1. ທ່ານ ສອນພັນ ເລືອງຄຳມາ ເບີໂທ: 020 99822289; +84-91-8184871
2. ທ່ານ ພອນໄຊ ຈັນທະວົງ ເບີໂທ: 020 99776600
3. ທ່ານ ວົງຄຳ ມະນີຈັນ ເບີໂທ: 020 22399513
4. ທ່ານ ເພັດ ສຸວົງ ເບີໂທ: 020 22279990; 020 55570868

➢ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ອຸດົມໄຊ

➢ ທ່ານ ສຸລິນ ເບີໂທ: 020 22375857

❖ <u>ຝ່າຍ ຫວຽດນາມ</u>

➢ ກະຊວງ ອຸດສາຫະກຳ ແລະ ການຄ້າ ຫວຽດນາມ

1. ທ່ານ Bui Ba Nghiem ເບີໂທ: + 84-90-4499268
2. ທ່ານ Do Huu Tung ເບີໂທ: + 84-98-8119086

➢ ຫ້ອງວ່າການແຂວງດຽນບຽນ

1. ທ່ານ To Anh Vu ເບີໂທ: +84 98-2210888; +84-12-39600788; +84-91-5181378

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ເລກທີ: 005180/ຕປທ.ອປອ.2

ນະຄອນຫລວງວຽງຈັນ, ວັນທີ 10 ກັນຍາ2014

ໃບແຈ້ງການ

ຮຽນ: ທ່ານ ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ.

ທີ່ ນະຄອນຫລວງວຽງຈັນ.

ເລື່ອງ: ອະນຸມັດໃຫ້ລັດຖະກອນໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ.

- ອີງຕາມແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1365/ຫສລ, ລົງວັນທີ 07 ກັນຍາ 2006, ວ່າດ້ວຍ ການມອບສິດໃຫ້ກະຊວງການຕ່າງປະເທດເປັນຜູ້ຕົກລົງ ແລະ ອະນຸມັດໃຫ້ລັດຖະກອນ ຂັ້ນກົມລົງມາ ໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດ.
- ອີງຕາມໜັງສືສະເໜີຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ: 1623/ອຄ.ຈພງ, ລົງວັນທີ 9 ກັນຍາ 2014.

ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຕົກລົງ :

ມາດຕາ I: ອະນຸມັດໃຫ້:

1. ທ່ານ ປະເສີດ ໃຈຫວັງໝັ້ນ, ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ.
2. ທ່ານ ນາງ ບານສະດີ ເທບພະວົງ, ຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ.
3. ທ່ານ ສຸລີຍົນ ພິລາວົງ, ຮອງຫົວໜ້າກົມການຄ້າພາຍໃນ.
4. ທ່ານ ໄຊທິເດດ ອິນທະສອນ, ຮອງຫົວໜ້າກົມການນໍາເຂົ້າ ແລະ ສົ່ງອອກ.
5. ທ່ານ ນາງ ຕານທອງ ພວງມະຈັນ, ເລຂາລັດຖະມົນຕີວ່າການ (ຮອງຫົວໜ້າພະແນກ).
6. ທ່ານ ນາງ ສຸພາພອນ ອິນທະພົນ, ຮອງຫົວໜ້າພະແນກ, ກົມການນໍາເຂົ້າ ແລະ ສົ່ງອອກ.
7. ທ່ານ ພຸດສາຄອນ ແສງມະນີພອນ, ຮອງຫົວໜ້າພະແນກ, ກົມນະໂຍບາຍການຄ້າຕ່າງປະເທດ.
8. ທ່ານ ສອນພັນ ເລືອງຄໍາມາ, ວິຊາການ, ກົມການນໍາເຂົ້າ ແລະ ສົ່ງອອກ.
9. ທ່ານ ພອນໄຊ ຈັນທະວົງ, ວິຊາການ, ກົມການນໍາເຂົ້າ ແລະ ສົ່ງອອກ.
10. ທ່ານ ນາງ ປາລິມາ ສີໃສແກ້ວ, ວິຊາການ, ກົມການນໍາເຂົ້າ ແລະ ສົ່ງອອກ.
11. ທ່ານ ເພັດ ສຸວົງ, ວິຊາການ, ກົມການນໍາເຂົ້າ ແລະ ສົ່ງອອກ.
12. ທ່ານ ວົງຄໍາ ມະນີຈັນ, ວິຊາການ, ກົມການນໍາເຂົ້າ ແລະ ສົ່ງອອກ.
13. ພະນັກງານຂັບລົດ 4 ທ່ານ.
14. ທ່ານ ບົວເພັດ ໄຊຍະສານ, ຮອງຫົວໜ້າກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ.
15. ທ່ານ ສົງຫາ ສົງສະຫວັນ, ຮອງຫົວໜ້າຫ້ອງການຄະນະກໍາມະທິການຮ່ວມມືລາວ-ຫວຽດ, ກະຊວງແຜນການ ແລະ ການລົງທຶນ.
16. ທ່ານ ພັນໂທ ທຸມມີ ພຸມທອງສີ, ຮອງຫົວໜ້າກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ, ກະຊວງປ້ອງກັນປະເທດ.

17. ທ່ານ ທອງຫຼ້າ ອອນສີໄຊ, ຮອງຫົວໜ້າພາສີປະຈຳເຂດ I, ກະຊວງການເງິນ.
18. ທ່ານ ພອນສານ ວິໄລເມັ້ງ, ຫົວໜ້າພະແນກ, ອຄ ແຂວງ ຫົວພັນ.
19. ທ່ານ ບຸນທັນ ສິມດີ, ຫົວໜ້າພະແນກ, ອຄ ແຂວງ ຜົ້ງສາລີ.
20. ທ່ານ ດຣ ຄຳປາວ, ຫົວໜ້າພະແນກ, ອຄ ແຂວງ ຊຽງຂວາງ.
21. ທ່ານ ສີງເພັດ ແກ້ວໂສພາ, ຫົວໜ້າພະແນກ, ອຄ ແຂວງ ຄຳມ່ວນ.
22. ທ່ານ ດຣ ແພງສີ ສີລາວີ, ຫົວໜ້າພະແນກ, ອຄ ແຂວງ ເຊກອງ.
23. ທ່ານ ສະຫວນ ສະຫວ່າງ, ຫົວໜ້າພະແນກ, ອຄ ແຂວງ ບໍລິຄຳໄຊ.
24. ທ່ານ ຄຳຜຸຍ ພິມມະວົງ, ຮອງຫົວໜ້າພະແນກ, ອຄ ແຂວງ ຫຼວງພະບາງ.
25. ທ່ານ ບຸນຊູ ລັດສະໝີ, ຮອງຫົວໜ້າພະແນກ, ອຄ ແຂວງ ສາລະວັນ.
26. ທ່ານ ຄຳຜຸຍ ສີບຸນເຮືອງ, ຮອງຫົວໜ້າພະແນກ, ອຄ ແຂວງ ສະຫວັນນະເຂດ.
27. ທ່ານ ສົມຕິໄຊ ສີລີໄຊ, ຫົວໜ້າຫ້ອງການພະແນກ ອຄ ແຂວງ ອັດຕະປື.
28. ທ່ານ ສຸກໄຊ ຈັນທະນາຄານ, ຫົວໜ້າຂະແໜງ, ພະແນກ ອຄ ແຂວງ ສາລະວັນ.
29. ທ່ານ ໂອພາດ ວົງມາຈຽງ, ຫົວໜ້າຂະແໜງ, ພະແນກ ອຄ ແຂວງ ອັດຕະປື.
30. ທ່ານ ອຳພອນ ພິມແກ້ວວົງຄຳ, ວ່າການຫົວໜ້າຂະແໜງ, ພະແນກ ອຄ ແຂວງ ຫົວພັນ.
31. ທ່ານ ອິດສະຫຼະ ບຸນຍະສອນ, ຮອງຫົວໜ້າຂະແໜງ, ພະແນກ ອຄ ແຂວງ ຫຼວງພະບາງ.
32. ທ່ານ ພານິດ ສີລາວີ, ຮອງຫົວໜ້າຂະແໜງ, ພະແນກ ອຄ ແຂວງ ເຊກອງ.
33. ທ່ານ ຕຸ້ຍ ຈັນທະມຸງຄຸນ, ຮອງຫົວໜ້າຂະແໜງ, ພະແນກ ອຄ ແຂວງ ບໍລິຄຳໄຊ.
34. ທ່ານ ບຸນປົງ ຫຼວງພະການ, ວິຊາການ, ພະແນກ ອຄ ແຂວງ ຜົ້ງສາລີ.
35. ທ່ານ ແກ້ວວິຈິດ ໄຊຄຳພິທູນ, ວິຊາການ, ພະແນກ ອຄ ແຂວງ ສະຫວັນນະເຂດ.

<u>ມາດຕາII</u> : ຈຸດປະສົງ: ຕິດຕາມຄະນະຜູ້ແທນຂັ້ນສູງ ນຳໂດຍ ທ່ານ ນາງ ເຂັມມະນີ ພົນເສນາ, ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ແລະ ທ່ານ ບຸນມີ ມະນີວົງ, ລັດຖະມົນຕີຊ່ວຍວ່າການກະຊວງອຸດສາຫະກຳ ແລະ ການຄ້າ, ໄປເຂົ້າຮ່ວມກອງປະຊຸມ ການຮ່ວມມືພັດທະນາການຄ້າຊາຍແດນ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ ຄັ້ງທີ IX ທີ່ ເມືອງ ດຽນບຽນ, ແຂວງ ດຽນບຽນ, ສສ. ຫວຽດນາມ.

<u>ມາດຕາ III</u>: ກຳນົດເວລາເຄື່ອນໄຫວ ຢູ່ຕ່າງປະເທດ: ໃນວັນທີ 25 - 27 ກັນຍາ 2014.

<u>ມາດຕາIV</u>: ຄ່າໃຊ້ຈ່າຍ:

- ໃນການເດີນທາງໄປ-ກັບ, ກິນຢູ່ພັກເຊົາ, ເງິນແຮຄະນະ ແລະ ຄ່າໃຊ້ຈ່າຍອື່ນໆຂອງຄະນະກະກຽມກອງປະຊຸມເຊິ່ງຈະໄດ້ອອກເດີນທາງກ່ອນ 2 ວັນ ຈຳນວນ 6 ທ່ານ, ຕາມລຳດັບ 6, 7, 9, 11, 12 ພ້ອມພະນັກງານຂັບລົດ 1 ທ່ານ ແລະ ຄະນະຜູ້ແທນເຂົ້າຮ່ວມກອງປະຊຸມ ຈາກ ກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນນຳໃຊ້ງົບປະມານພາກ 17 ໂຄງການພັດທະນາການຄ້າຊາຍແດນຂອງ ກົມການນຳເຂົ້າ ແລະ ສົ່ງອອກ ສົກປີ 2012-2013 (ເລກທີ 3113-100-263).
- ໃນການເດີນທາງໄປ-ກັບ, ກິນຢູ່ພັກເຊົາ, ແລະ ຄ່າໃຊ້ຈ່າຍອື່ນໆ ຂອງຜູ້ເຂົ້າຮ່ວມຈາກຂະແໜງການກ່ຽວຂ້ອງ ແລະ ພະນັກງານຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງ ແມ່ນນຳໃຊ້ງົບປະມານຂອງແຕ່ລະພາກສ່ວນທີ່ຕົນສັງກັດຢູ່ ເປັນຜູ້ຮັບຜິດຊອບ.

<u>ມາດຕາV</u> : ພາຍຫລັງສຳເລັດການເຂົ້າຮ່ວມໃນຄັ້ງນີ້ແລ້ວ ໃຫ້ພາກສ່ວນກ່ຽວຂ້ອງສົ່ງບົດລາຍງານຫມາກຜົນຂອງການ ເຂົ້າຮ່ວມ ໃຫ້ກະຊວງການຕ່າງປະເທດ ພາຍໃນ 10 ວັນ ລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂອງໃບແຈ້ງການ ສະບັບນີ້ດ້ວຍ.

ເຊັນແທນ ລັດຖະມົນຕີວ່າການກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ
ລັດຖະມົນຕີ

ຂາລຸນແກ້ວ ກິດຕິຄຸນ

ລັດຖະມົນຕີຊ່ວຍວ່າການ